# ການພັດທະນາແບບຍືນຍົງຂອງ ຂະແໜງຊາລາວ

## ບົດສຶກສາສະຖານະພາບປະຈຸບັນ

ກະກຽມໂດຍ ບໍລິສັດທີ່ປຶກສາ Earth Systems ໂດຍການປຶກສາຫາລືຮ່ວມກັບຄູ່ຮ່ວມງານ ຈາກຂະແໜງຊາລາວ

ສະໜັບສະໜູນໂດຍ ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ

EARTH SYSTEMS
Environment · Water · Sustainability

MRLG
MEKONG REGION LAND GOVERNANCE

ກໍລະກົດ 2016







# ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈ

ບົດສຶກສາສະຖານະພາບປັດຈຸບັນຂອງຂະແໜງຊາລາວສະບັບນີ້ແມ່ນໄດ້ສຳເລັດ ແລະ ໄດ້ຮັບໝາກຜົນອັນດີ ໂດຍການສະໜັບສະໜູນ ຈາກໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພືນແມ່ນ້ຳຂອງ (Mekong Region Land Governance Project (MRLG)) ພາຍໃຕ້ກອງທຶນຊ່ວຍເຫຼືອໄລຍະສັ້ນ (Quick Disbursement Fund Facility).

ບໍລິສັດທີ່ປຶກສາ Earth Systems Consulting Pty Ltd ຂໍສະແດງຄວາມຂອບໃຈຢ່າງສູງມາຍັງຄູ່ຮ່ວມງານຈາກທຸກອົງການຈັດຕັ້ງ ທີ່ສະໜອງຂໍ້ມູນ ແລະ ມີສ່ວນຮ່ວມໃນການພັດທະນາບົດສຶກສານີ້ ຢູ່ໃນລະດັບຊາດ ແລະ ສາກົນ. ເຊິ່ງລວມມີ: ພະແນກອຸດສາຫະກຳ ແລະ ການຄ້າແຂວງຜົ້ງສາລີ (PICO); ພະແນກກະສິກຳ ແລະ ປ່າໄມ້ ແຂວງຜົ້ງສາລີ; ພະແນກກະສິກຳ ແລະ ປ່າໄມ້ ແຂວງອຸດົມໄຊ; ພະແນກກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ; ອົງການປົກຄອງທ້ອງຖິ່ນແຂວງຜົ້ງສາລີ; ຕາງໜ້າຜູ້ປະກອບການທຸລະກິດອຸດສາຫະກຳຊາທັງພາຍໃນ ແລະ ຕ່າງປະເທດຈາກແຂວງຜົ້ງສາລີ, ແຂວງອຸດົມໄຊ, ແຂວງວຽງຈັນ ແລະ ແຂວງຈຳປາສັກ; ຕາງໜ້າຊາວກະສິກອນທີ່ປູກຊາຈາກແຂວງຜົ້ງສາລີ; ສະພາອຸດສາຫະກຳ ແລະ ການຄ້າລາວ (ສຄອ); ສະພາອຸດສາຫະກຳ ແລະ ການຄ້າເອີຣົບປະຈຳລາວ (ECCIL); ເວທີກອງປະຊຸມເພື່ອອະນາຄົດ (Tea 2030); ສະມາຄົມຊາຫວຽດນາມ (VITAS); ທີ່ປຶກສາກ່ຽວກັບຊາລາວ; ອົງການພັດທະນາລະຫວ່າງປະເທດປະກອບມີ: Helvetas: ແຜນງານ/ໂຄງການອົງການຈັດຕັ້ງຂອງຊຸມຊົນ, ເສີມສ້າງການມີສ່ວນຮ່ວມ ແລະ ການສ້າງຄວາມເຂັ້ມແຂງ (COPE); ໂຄງການພັດທະນາ ລະບົບນິເວດຊີວະນາໆພັນກະສິກຳຢູ່ເຂດພູດອຍ (TABI), CCL; GIZ ແລະ OXFAM.

ພວກເຮົາຂໍຂອບໃຈຢ່າງສູງມາຍັງບຸກຄົນທີ່ມີລາຍຊື່ຕໍ່ໄປນີ້: ທ່ານ ທອງສະຫວັນ ທຳມະວົງ, ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງຜົ້ງສາລີ ແລະ ຄະນະ; ທ່ານ ນາງ ນິພາພອນ ນຳປັນຍາ, ຜູ້ຈັດການໂຄງການເສີມສ້າງຄວາມສະເໝີພາບບົດບາດຍິງຊາຍ ແລະ ສັງຄົມ, ຜູ້ປະສານງານອົງການ Helvetas-COPE ແລະ ຄະນະ; ແລະ ທ່ານ ຄຳພັນ ຈັນຕິງວົງ, ເຈົ້າຂອງບໍລິສັດປູກຊາຂຽວຜົ້ງສາລີ ແລະ ພະນັກງານທຸກທ່ານ; ທີ່ປຶກສາດ້ານຂະແໜງຊາ: ທ່ານ ທອມ ຄາແລນເດີ, ທ່ານ ຄຣິສ ສະມິຕິ້ສ໌, ທ່ານ ນາງ ວອນສີລີ ໄຊຊະນະ, ທ່ານ ບຸນຕາ ນວນວິໄຊ ແລະ ທ່ານ ແປັກກີ້ ແພນ.

**ບົດສຶກສາສະຖານະພາບປັດຈຸບັນຂອງຂະແໜງຊາລາວ ສະບັບນີ້ຈະໃສ່ຊື່ເອກະສານທາງການວ່າ:**

ບໍລິສັດ Earth Systems 2016, ບົດສຶກສາສະຖານະພາບປັດຈຸບັນ: (ຮ່າງ) ການພັດທະນາຂອງຂະແໜງຊາລາວ , ນະຄອນຫຼວງວຽງຈັນ, ເດືອນສິງຫາ 2016.

**ບັນທຶກການຈາກຍາຍເອກະສານ**

| ສະຖານະ/ສະບັບເລກທີ | ສະຖານະ/ສະບັບເລກທີ | ສະຖານະ/ສະບັບເລກທີ |
|---|---|---|
| Rev0 | ກໍລະກົດ 2016 | ສະບັບຮ່າງ |
| | | |
| | | |

# ສາລະບານ

**1 ບົດສະເໜີ ... 3**

1.1 ເປົ້າໝາຍ ແລະ ຈຸດປະສົງ ... 4

1.2 ຂອບເຂດ ແລະ ໂຄງປະກອບຂອງບົດສຶກສາ ... 4

**2 ຂະແໜງຊາໃນທົ່ວໂລກ ... 5**

2.1 ພາບລວມດ້ານການຕະຫຼາດ ... 5

2.2 ການພັດທະນາແບບຍືນຍົງໃນຂະແໜງຊາ ... 5

**3** ຂະແໜງຊາລາວ **... 8**

3.1 ຄວາມເປັນມາຂອງຊາລາວ ... 8

3.1.1 ພື້ນທີ່ປູກຊາ ... 8

3.1.2 **ຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ຄ້າຂາຍ** ... 9

3.1.3 **ການຜະລິດຊາ** ... 10

3.1.4 **ຂະບວນການປຸງແຕ່ງຊາ** ... 10

3.1.5 **ຕະຫຼາດຮອງຮັບ ແລະ ລາຄາຂອງຊາ** ... 10

3.2 ແນວຄວາມຄິດລິເລີ່ມໃນການພັດທະນາ ... 11

**4 ສິ່ງທ້າທາຍ ແລະ ກາລະໂອກາດ ຕໍ່ການພັດທະນາແບບຍືນຍົງຂອງຂະແໜງຊາ ລາວ ... 13**

4.1 ເພື່ອເຮັດໃຫ້ຊີວິດການເປັນຢູ່ມີຄວາມຍືນຍົງ ແລະ ຜູ້ຜະລິດຊາມີສິດອຳນາດ ... 13

4.1.1 ປັບປຸງຄວາມໝັ້ນຄົງດ້ານການຄຸ້ມຄອງທີ່ດິນ ໃຫ້ແກ່ຊາວສວນຂະໜາດນ້ອຍ ແລະ ຊຸມຊົນຜູ້ຜະລິດ ... 13

4.1.2 **ຮັບປະກັນໃຫ້ມີການດຳລົງຊີວິດທີ່ຍືນຍົງ ທີ່ໄດ້ມາຈາກ**ການຜະລິດ**ຊາ** ... 14

4.1.3 **ການສ້າງຄວາມເຂັ້ມແຂງແກ່ຜູ້ຜະລິດຊາ**ໄດ້**ຮັບຮູ້ເຖິງຜົນປະໂຫຍດ ແລະ ຄຸນຄ່າຈາກຊາ** ... 15

4.2 ການຜະລິດທີ່ມີຄວາມຍືນຍົງ / ສາມາດຟື້ນຟູໄດ້ຕໍ່ລະບົບນິເວດ ... 16

4.2.1 **ການປົກປັກຮັກສາ ແລະ ການຄຸ້ມຄອງຊາປ່າ ແລະ ຊາບູຮານແບບຍືນຍົງ** ... 16

4.2.2 ກ້າວໄປສູ່ຄວາມສາມາດໃນການຜະລິດໃຫ້ໄດ້ສະມັດຕະພາບສູງກວ່າເກົ່າ ໂດຍປັດສະຈາກຜົນກະທົບຕໍ່ການບໍລິການຂອງລະບົບນິເວດ ແລະ ຄຸນນະພາບຂອງພື້ນທີ່. ... 16

4.3 ເພື່ອເຮັດໃຫ້ການສ້າງທາດກາກບອນໃນລະດັບຕໍ່າ ແລະ ມີຄວາມສາມາດຕ້ານທານ ... 17

4.3.1 **ສາມາດປັບຕົວເຂົ້າກັບແນວໂນ້ມການປ່ຽນແປງ ແລະຄວາມແຕກຕ່າງຂອງສະພາບອາກາດ ແລະຮັກສາການປ່ອຍທາດກາກບອນຢູ່ໃນລະດັບຕໍ່າ ໄປພ້ອມກັບການເພີ່ມຂຶ້ນຂອງບໍລິມາດການຜະລິດ ແລະ ການປຸງແຕ່ງຊາ** ... 17

4.4 ເພື່ອເຮັດໃຫ້ມີຄວາມໂປ່ງໃສໃນຂະບວນການເພີ່ມມູນຄ່າສິນຄ້າ ແລະ ມີກົນໄກການຕະຫຼາດ ທີ່ຍືນຍົງ ... 17

4.4.1 **ສ້າງກົນໄກການຕະຫຼາດທີ່ເປັນທຳ ແລະ ຮັດກຸມຂຶ້ນກວ່າເກົ່າ ແລະ ຄວາມເຂົ້າໃຈກ່ຽວກັບຄຸນຄ່າ ແລະ ຄວາມຍືນຍົງໃນທຸກໆຂະບວນການເພີ່ມມູນຄ່າສິນຄ້າ** ... 17

4.5 ເພື່ອເຮັດໃຫ້ຜູ້ບໍລິໂພກມີສ່ວນຮ່ວມ ແລະ ເຊື່ອມຕໍ່ກັນໄດ້ ... 18
4.5.1 **ເຮັດການຕະຫຼາດເພື່ອສົ່ງເສີມຄຸນຄ່າຂອງຊາລາວ** ... 18
**5 ຄວາມມຸ່ງໝັ້ນຂອງພາກອຸດສາຫະກຳຊາ ແລະ ການຮ່ວມມື ເພື່ອການພັດທະນາທີ່ຍືນຍົງຂອງຂະແໜງຊາຢູ່ໃນ ສປປ ລາວ ... 19**
5.1 ຄວາມມຸ່ງໝັ້ນຂອງຂະແໜງ ... 19
5.2 ວິທີການ ... 19
5.2.1 ຈຸດປະສົງ ... 20
5.2.2 **ຜົນຄາດຫວັງ** ... 20
5.3 ໜ້າວຽກບູລິມະສິດ ... 20
5.3.1 **ສ້າງ ແລະ ຈັດຕັ້ງປະຕິບັດເວທີ** TEA 2030 **ຂອງລາວ** ... 20
5.3.2 **ການສ້າງຍຸດທະສາດຊາແຫ່ງຊາດ ແລະ ທິດທາງເພື່ອກ້າວໄປສູ່ການພັດທະນາແບບຍືນຍົງ** ... 21
5.3.3 **ສ້າງໂຄງການ** TEA 2030 **ໃນຂົງເຂດພາກພື້ນ** ... 21
5.4 ໂອກາດໃນການຮ່ວມມື ແລະ ເສີມຂະຫຍາຍຜົນປະໂຫຍດ ... 22
**6 ສະຫຼຸບ ... 24**
6.1 ຄຳແນະນຳ ແລະ ບາດກ້າວໃນຕໍ່ໜ້າ ... 25
**7 ເອກະສານອ້າງອີງ ... 26**

# ບົດນຳ

## ການຮ່ວມມືກັນໃນຂະແໜງຊາລາວ ແມ່ນພື້ນຖານສຳຄັນເພື່ອຄວາມຍືນຍົງໃນອະນາຄົດ

ຂະແໜງຊາລາວ ແມ່ນຂະແໜງທີ່ນ້ອຍ ເມື່ອປຽບທຽບກັບຂະແໜງຊາໃນລະດັບໂລກ ແຕ່ມີບົດບາດສຳຄັນໃນການປະກອບສ່ວນເຂົ້າໃນພັດທະນາເສດຖະກິດໃນເຂດທີ່ມີການຜະລິດຊາ ບໍ່ວ່າຈະຢູ່ທາງພາກເໜືອ ແລະ ໃຕ້ຂອງ ສປປ ລາວ. ໂດຍທົ່ວໄປ ເຂດພື້ນທີ່ເຫລົ່ານີ້ແມ່ນຕັ້ງຢູ່ເຂດຫ່າງໄກສອກຫຼີກ ແລະ ເປັນເຂດທີ່ມີອັດຕາຜູ້ທຸກຍາກທີ່ສຸດໃນປະເທດ. ການຜະລິດເກັບກຽວຊາແມ່ນສ່ວນໃຫຍ່ ຖືກຈັດຕັ້ງປະຕິບັດໂດຍຊຸມຊົນທີ່ເປັນຊົນເຜົ່າທີ່ອາໃສຢູ່ເຂດນັ້ນ; ເຊິ່ງພວກເຂົາອາດເກັບ / ຜະລິດຊາ ຈາກແຫຼ່ງຊັບພະຍາກອນຊາຈາກປ່າທຳມະຊາດ ຫຼື ສວນປູກຊາແບບອຸດສາຫະກຳ/ທັນສະໄໝ. ແມ່ຍິງແມ່ນມີບົດບາດຫຼັກສຳຄັນໃນການຜະລິດຂອງຂະແໜງຊາ.

ການພັດທະນາຂອງຂະແໜງຊາລາວແມ່ນມີທ່າແຮງຄວາມເປັນໄປໄດ້ສູງຫຼາຍ ທີ່ຈະສືບຕໍ່ຂະຫຍາຍຕົວ ແລະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດທ້ອງຖິ່ນໃນອະນາຄົດຕໍ່ໜ້າ. ປັດໃຈສຳຄັນແມ່ນ ປະເທດລາວ ມີຊັບພະກອນຊາບູຮານ ແລະ ຊາທຳມະຊາດຈາກປ່າທີ່ມີມູນຄ່າ ແລະ ຄຸນຄ່າສູງ; ມີເນື້ອທີ່ດິນທີ່ສາມາດນຳໃຊ້ໄດ້ສຳຫຼັບການປູກຜະລິດຊາແບບໃໝ່; ແລະ ການລົງທຶນເຕີບໃຫຍ່ຂະຫຍາຍຕົວຢ່າງໄວໃນການຂະບວນປຸງແຕ່ງຊາ ແລະ ການພັດທະນາຜະລິດຕະພັນທີ່ມີມູນຄ່າທີ່ສູງກວ່າ. ແຕ່ມາຮອດປັດຈຸບັນ, ການພັດທະນາຂອງຂະແໜງຊາ ແມ່ນຍັງບໍ່ທັນໄດ້ເຕັມກຳລັງ ແລະ ໄດ້ຕາມຄວາມອາດສາມາດ ແລະ ໄດ້ຕາມຄວາມໄດ້ປຽບເທືອ. ນອກຈາກນີ້, ບາງປັດໃຈຄວາມໄດ້ປຽບເຫລົ່ານີ້ ແມ່ນກຳລັງຕົກຢູ່ໃນສະຖານະພາບຄວາມສ່ຽງ. ສິ່ງທ້າທາຍສຳຄັນຕໍ່ກັບຂະແໜງຊາລາວແມ່ນ: ການປົກປັກຮັກສາຊັບພະຍາກອນຊາປ່າ ແລະ ຊາບູຮານທີ່ມີຈຳກັດ; ເຮັດແນວໃດຈະເຮັດໃຫ້ຊີວິດການເປັນຢູ່ຈາກການຜະລິດຊາໄດ້ຮັບໝາກຮັບຜົນ - ມີຄວາມສາມາດຮອງຮັບ ແລະ ຮັບປະກັນຕໍ່ຊີວິດການເປັນຢູ່ທີ່ດີໄດ້; ແລະ ການສ້າງສາຍພົວພັນທີ່ດີ ລະຫວ່າງບັນດາຜູ້ຜະລິດຊາ, ຜູ້ແປຮູບຊາ ແລະ ຜູ້ຄ້າຂາຍຊາ ໃຫ້ມີຄວາມສະເໝີພາບ ແລະ ເຫັນດີເຫັນພ້ອມກັນ.

ບົດສຶກສາສະຖານະພາບປັດຈຸບັນ ສະບັບນີ້ ແມ່ນໄດ້ຂຽນຂຶ້ນໂດຍຜູ້ມີສ່ວນຮ່ວມສຳຄັນຈາກອຸດສາຫະກຳຂະແໜງຊາ ໂດຍການສະໜັບສະໜູນຈາກໂຄງການບໍລິຫານລັດກ່ຽວກັບບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ ໂດຍມີຈຸດປະສົງໃນການສ້າງຄວາມຮັບຮູ້ ແລະ ສະໜັບສະໜູນເພື່ອການພັດທະນາແບບຍືນຍົງຂອງຂະແໜງຊາລາວ.

ບົດສຶກສານີ້ສະແດງໃຫ້ເຫັນສະຖານະພາບປັດຈຸບັນຂອງຂະແໜງຊາ; ສຶກສາວິເຄາະບັນດາສິ່ງທ້າທາຍ ແລະ ກາລະໂອກາດສຳຄັນ; ແລະ ນຳສະເໜີຄວາມມຸ່ງໝັ້ນຈາກຜູ້ມີສ່ວນຮ່ວມຈາກຂະແໜງການ ແລະ ນຳສະເໜີແຜນງານການຮ່ວມມືທີ່ຈຳເປັນ ເພື່ອຄວາມຍືນຍົງຂອງຂະແໜງຊາໃນອະນາຄົດ.

ໃນໄລຍະທີ່ມີການກຽມບົດສຶກສາສະບັບນີ້ ໄດ້ມີເຫດການສຳຄັນ ແລະ ຂໍ້ຕົກລົງກັນ ເພື່ອສະໜັບສະໜູນຂະແໜງຊາລາວຊຶ່ງມີຄືດັ່ງນີ້:

- ການເລີ່ມຕົ້ນຂອງກຸ່ມເຮັດວຽກສະໜັບໜູນຂະແໜງຊາ ເຊິ່ງປະກອບມີຜູ້ມີສ່ວນຮ່ວມຈາກພາກທຸລະກິດ/ອຸດສາຫະກຳ, ພາກລັດ ແລະ ປະຊາຊົນຊຸມຊົນທີ່ກ່ຽວຂ້ອງ;
- ການແບ່ງປັນໜ້າວຽກ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດຂອງບັນດາອົງການຈັດຕັ້ງທີ່ໃຫ້ການສະໜັບສະໜູນທີ່ຜ່ານມາ ແລະມີໃນປັດຈຸບັນຕໍ່ຂະແໜງຊາ;
- ຄວາມມຸ້ງໝັ້ນຈາກບັນດາຜູ້ມີສ່ວນຮ່ວມຈາກຂະແໜງຊາລາວ ທີ່ສືບຕໍ່ພະຍາຍາມຈັດຕັ້ງການພັດທະນາແບບຍືນຍົງຕໍ່ກັບຂະແໜງ;
- ການພັດທະນາຂອງການມີສ່ວນຮ່ວມຂອງຂະແໜງຊາໃນລະດັບພາກພື້ນ ແລະ ລະດັບໂລກ ໃຫ້ສອດຄ່ອງກັບໂຄງການ *Tea 2030* – ທີ່ເປັນອົງການຈັດຕັ້ງໃນລະດັບແນວໜ້າຂອງໂລກໃນຂະແໜງຊາ ທີ່ສະໜັບສະໜູນເພື່ອໃຫ້ມີຄວາມຍືນຍົງໃນອະນາຄົດຕໍ່ກັບຂະແໜງຊາ; ແລະ

- ການສະໜັບສະໜູນທີ່ເປັນທາງການຈາກສະພາອຸດສາຫະກໍາ ແລະ ການຄ້າແຫ່ງຊາດລາວ; ສະພາອຸດສາຫະກໍາ ແລະ ການຄ້າເອີລົບ ປະຈໍາລາວ; ສະມາຄົມຊາຫວຽດນາມ ແລະ ເວທີການຮ່ວມມືເພື່ອອານະຄົດ (Forum for the Future (Tea 2030)) ເພື່ອຈັດຕັ້ງປະຕິບັດແຜນງານ ໃນການເຮັດວຽກຮ່ວມກັນໂດຍມີພາກອຸດສາຫະກໍາຂອງຂະແໜງຊາເປັນຜູ້ຊີ້ນໍາ - ນໍາພາ ເພື່ອການພັດທະນາຂອງ ຂະແໜງຊາລາວພາຍໃນປະເທດ ແລະ ຢູ່ໃນລະດັບພາກພື້ນ ໃນປີຂ້າງໜ້າທີ່ຈະມາຮອດ.

ການສ້າງໃຫ້ເປັນທີ່ຮັບຮູ້ ແລະ ເພີ່ມຄຸນຄ່າຂອງແໜງຊາລາວ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມແນວທາງທີ່ມີຄວາມຍືນຍົງ, ຜົນໄດ້ຮັບທີ່ຄາດຫວັງແມ່ນ ມັນຈະປະກອບສ່ວນເຂົ້າໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ການລົງທຶນ ເພື່ອເຂົ້າໃນການປົກປັກຮັກສາຊັບພະຍາກອນຊາເຫລົ່ານີ້; ແລະ ໄປພ້ອມກັບການຮັບປະກັນການຄຸ້ມຄອງ ແລະ ຊີວິດການເປັນຢູ່ທີ່ໝັ້ນຄົງ ໃຫ້ແກ່ຊຸມຊົນຜະລິດຊາໃນເຂດຊົນນະບົດ ແລະ ປະກອບສ່ວນເຂົ້າໃນການພັດທະນາໂດຍລວມຂອງເສດຖະກິດຊົນນະບົດໃນພາກເໜືອ ແລະ ໃຕ້ຂອງ ສປປ ລາວ.

ພວກຂ້າພະເຈົ້າຫວັງຢ່າງຍິ່ງ ເພື່ອຈະສືບຕໍ່ຮ່ວມມືເຮັດວຽກຮ່ວມນໍາກັນ ເພື່ອສະໜັບສະໜຸນຂະແໜງຊາລາວໃຫ້ມີຄວາມຍືນຍົງ ແລະ ເຂັ້ມແຂງ ແລະ ໄດ້ຮັບໝາກຜົນໃນປີຂ້າງໜ້າທີ່ໃກ້ຈະມາຮອດນີ້ດັ່ງຕັ້ງໃຈ.

ດ້ວຍຄວາມເຄົາລົບ ແລະ ນັບຖື

ຄູ່ຮ່ວມງານຂະແໜງຊາລາວ

# 1 ບົດສະເໜີ

ນ້ຳຊາ ຖືວ່າເປັນເຄື່ອງດື່ມທີ່ໄດ້ຮັບຄວາມນິຍົມທີ່ສຸດໃນໂລກຖັດຈາກນ້ຳ ຊຶ່ງມີຜູ້ບໍລິໂພກຫຼາຍກວ່າສາມ (3) ຕື້ຈອກຕໍ່ວັນ.[1] ຊາມີຫຼາຍຊະນິດຜະລິດຕະພັນ, ສອງປະເພດຊາຫຼັກໆກໍ່ຄື ຊາດຳ ແລະ ຊາຂຽວ[2]. ສອດຄ່ອງກັບການເພີ່ມຂຶ້ນດ້ານຄວາມຕ້ອງການດ້ານສະບຽງອາຫານ ແລະ ການຂະຫຍາຍຕົວທົ່ວໂລກຂອງ 'ກຸ່ມຊັ້ນຄົນທີ່ມີລາຍຮັບປານກາງ' ຄາດວ່າຄວາມຕ້ອງການຕໍ່ການດື່ມນ້ຳຊາແມ່ນຈະມີຫຼາຍຂຶ້ນ ແລະ ຂະຫຍາຍຕົວໃນ 10 ປີຂ້າງໜ້າຮອດປີ 2023.[2] ການຜະລິດຊາທົ່ວໂລກ ສ່ວນຫຼາຍແມ່ນຜະລິດຢູ່ໃນປະເທດທີ່ກຳລັງພັດທະນາ ໂດຍຊາວກະສິກອນຊຸມຊົນຂະໜາດນ້ອຍ ເຊິ່ງເຮັດໃຫ້ມັນເປັນຂະແໜງ-ພືດ ທີ່ສົ່ງເສີມໃນການສ້າງລາຍໄດ້ທີ່ສຳຄັນໃຫ້ແກ່ຜູ້ທຸກຍາກ ໃນບັນດາປະເທດທີ່ກຳລັງມີການຂະຫຍາຍຕົວທາງດ້ານເສດຖະກິດ

ຂະແໜງຊາລາວ ເປັນຂະແໜງການຂະໜາດນ້ອຍ ແລະ ຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ ແຕ່ວ່າ ຂະແໜງການນີ້ມີທ່າແຮງໃນການຂະຫຍາຍຕົວ ແລະ ປະກອບສ່ວນຢ່າງຫຼວງຫຼາຍເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ພັດທະນາຊົນນະບົດ ໃນ ສປປ ລາວ. ການຜະລິດຊາແມ່ນຍັງຄົງເປັນການຜະລິດຊາໂດຍຊຸມຊົນໃນຊົນນະບົດເປັນຫຼັກ, ເຊິ່ງເປັນປະຊາຊົນຈາກຊົນເຜົ່າຕ່າງໆ ແລະ ສ່ວນຫຼາຍແມ່ນແມ່ຍິງເປັນຜູ້ຜະລິດຫຼັກໃນຂະແໜງການນີ້. ຊຸມຊົນທີ່ຜະລິດຊາ ຕິດຕໍ່ພົວພັນກັບ ເຈົ້າຂອງໂຮງງານປຸງແຕ່ງຊາໃນທ້ອງຖິ່ນ ເຊັ່ນດຽວກັນກັບການເພີ່ມຂຶ້ນຂອງຈຳນວນໂຮງງານປຸງແຕ່ງຊາທີ່ດຳເນີນງານໂດຍຕ່າງປະເທດ ແລະ ພໍ່ຄ້າຄົນຕ່າງປະເທດ. ພື້ນທີ່ການຜະລິດໄດ້ກະຈາຍອອກໃນທົ່ວປະເທດ ແລະ ປະກອບມີຊາພື້ນບ້ານ, ຊາທີ່ມີມູນຄ່າສູງຢູ່ເຂດພາກເໜືອ - ສົ່ງອອກຂາຍໄປຍັງຕະຫຼາດໃນປະເທດຈີນ ແລະ ຢູ່ເຂດການຜະລິດທີ່ຫາກໍ່ພົ້ນຂຶ້ນທີ່ພາກໃຕ້ແມ່ນມີການຂະຫຍາຍຂອບເຂດການຕະຫຼາດໄປຍັງບັນດາປະເທດຢູ່ຫ່າງໄກທາງພາກຕາເວັນຕົກ.

ຂະແໜງຊາລາວ ແມ່ນພວມປະເຊີນກັບສິ່ງທ້າທາຍຕໍ່ການພັດທະນາ ຄືດັ່ງນີ້:

- ແຫຼ່ງປູກຊາປ່າ ແລະ ຊາບູຮານ ທີ່ມີການເຊື່ອມໂຍງກັບຊີວິດການເປັນຢູ່ຂອງຊຸມຊົນຊາວກະສິກອນປູກຊາແມ່ນຢູ່ພາຍໃຕ້ການຂົ່ມຂູ່ອັນເນື່ອງມາຈາກການຂາດສິດນຳໃຊ້ທີ່ດິນ ແລະ ຂາດຄວາມຮັບຮູ້ທາງດ້ານການຄອບຄອງທີ່ດິນຕາມປະເພນີ ຕໍ່ດິນປ່າຂອງຊຸມຊົນ - ຊຶ່ງເຮັດໃຫ້ມີການນຳໃຊ້ຊັບພະຍາກອນທີ່ດິນ ແລະການຫັນປ່ຽນທີ່ດິນ ທີ່ບໍ່ມີຄວາມຍືນຍົງ;
- ການລົງທຶນໃສການປູກຊາເພື່ອການຄ້າ ແມ່ນບໍ່ໃຫ້ຜົນປະໂຫຍດດັ່ງຄາດຫວັງຕໍ່ກັບຊາວສວນຂະໜາດນ້ອຍ ຍ້ອນຂາດການສະໜັບສະໜູນແບບຕໍ່ເນື່ອງທາງດ້ານວິຊາການ; ການເຂົ້າເຖິງແຫຼ່ງເງິນເພື່ອລົງທຶນ ແລະ ຕະຫຼາດຮອງຮັບ; ແລະ
- ສາຍພົວພັນລະຫວ່າງຊາວສວນ, ຜູ້ຜະລິດ ແລະ ພໍ່ຄ້າຂາຍ ຍັງບໍ່ມີຄວາມເທົ່າທຽມສອດຄ່ອງກັນເທື່ອ, ສາເຫດອັນເນື່ອງມາຈາກ ບັນຫາການເຂົ້າເຖິງຕະຫຼາດ ຊຶ່ງຍັງບໍ່ທັນມີຄວາມໂປ່ງໃສ່ເປັນລະບົບ ຍັງມີການນິຍົມ/ໃຫ້ບູລິມະສິດແກ່ນັກລົງທຶນ/ພໍ່ຄ້າຈາກຕ່າງຊາດທີ່ບໍ່ຢູ່ໃນລະບົບເປັນຜູ້ກຳນົດຢູ່, ການຄຸ້ມຄອງທີ່ດິນ/ແຫຼ່ງພື້ນທີ່ປູກຍັງບໍ່ທັນເຂັ້ມແຂງເປັນກົນໄກເທື່ອ ແລະ ຂາດກົນໄກໃນການປະສານງານ ແລະ ລວມສູນເພື່ອການພັດທະນາຂະແໜງການແບບຍືນຍົງ (ເຊັ່ນ: ກຸ່ມຊາວສວນ (ຜູ້ຜະລິດ) / ກຸ່ມຜູ້ຜະລິດແປຮູບ).

ເມື່ອໂຮມເຂົ້າກັນ, ສິ່ງທ້າທາຍເຫຼົ່ານີ້ປຽບດັ່ງສິ່ງກີດຂວາງສຳລັບ ຊຸມຊົນທຸກຍາກໃນຊົນນະບົດ; ເປັນບັນຫາສຳລັບພາກທຸລະກິດ ແລະ ນັກລົງທຶນຂະແໜງຊາ; ແລະ ສິ່ງຜົນສະທ້ອນສຳລັບການພັດທະນາ ຂອງພື້ນທີ່ປູກຊາຢູ່ຊົນນະບົດຢ່າງກວ້າງຂວາງ.



ສິ່ງທ້າທາຍເຫຼົ່ານີ້ບໍ່ແມ່ນແຕ່ສະເພາະ ຢູ່ ສປປ ລາວເທົ່ານັ້ນ. ໃນປີ 2011 ກຸ່ມຂອງຜູ້ຮ່ວມງານດ້ານອຸດສະຫະກຳຊາຊັ້ນແນວໜ້າທົ່ວໂລກ ໄດ້ເຕົ້າໂຮມກັນ ເພື່ອກຳນົດ 10 ສິ່ງທ້າທາຍ (ເຊິ່ງກວມເອົາສິ່ງທ້າທາຍຂ້າງເທິງ), ແລະ ຮ່ວມໃຈກັນສ້າງໂຄງການແນວຄວາມຄິດລິເລີ່ມທົ່ວໂລກ *Tea 2030*, ເພື່ອ *'ສ້າງວິໄສທັດຮ່ວມກັນຊຶ່ງທຸກພາກສ່ວນຈາກຂະແໜງອຸດສະຫະກຳຊາທົ່ວໂລກສາມາດເຮັດໄດ້ພ້ອມນຳກັນ ເພື່ອຮັບປະກັນໃຫ້ຂະແໜງມີອະນາຄົດທີ່ຈະເລີນຮຸ່ງເຮືອງ ແລະ ຍືນຍົງ'*.[1]'

ຈຸດປະສົງຂອງບົດສຶກສານີ້ ແມ່ນເພື່ອສະແດງໃຫ້ເຫັນເຖິງສິ່ງທ້າທາຍທີ່ພົ້ນເດັ່ນ (ດັ່ງກ່າວມາຂ້າງເທິງ) ທີ່ຂະແໜງຊາລາວກຳລັງປະເຊີນຢູ່ ພ້ອມທັງ ຂອບໜ້າວຽກສຳລັບ 'ການປະຕິບັດຮ່ວມກັນ' ເພື່ອສົ່ງເສີມການພັດທະນາແບບຍືນຍົງຂອງຂະແໜງຊາໃຫ້ກ້າວຕໍ່ໄປຂ້າງໜ້າ.

## 1.1 ເປົ້າໝາຍ ແລະ ຈຸດປະສົງ

ໂດຍດຳເນີນຕາມແນວທາງການພັດທະນາຈາກ Tea 2030, ແລະໂດຍການສະໜັບສະໜູນຈາກໂຄງການ MRLG, ພາກສ່ວນກ່ຽວຂ້ອງຂອງຂະແໜງຊາລາວ, ຈາກພາກອຸດສາຫະກຳ, ລັດຖະບານ ແລະ ປະຊາສັງຄົມ ໄດ້ຈັດຕັ້ງກິດຈະກຳການມີສ່ວນຮ່ວມທີ່ມີຈຸດປະສົງໃນການນຳສະເໜີທັດສະນະຂອງອຸດສາຫະກຳຊາ ກ່ຽວກັບສິ່ງທ້າທາຍ ແລະ ກາລະໂອກາດ, ແລະ ທີ່ສະເໜີ ຂອບດຳເນີນການຮ່ວມກັນ ເພື່ອຮັບປະກັນການພັດທະນາແບບຍືນຍົງຂອງຂະແໜງຊາລາວ.

ຈຸດປະສົງສະເພາະຂອງເອກະສານນີ້ແມ່ນເພື່ອ:

- ອະທິບາຍສະຖານະພາບ, ສິ່ງທ້າທາຍຫຼັກ ແລະ ກາລະໂອກາດສຳຄັນ ສຳລັບການພັດທະນາຂອງຂະແໜງຊາລາວ;
- ອະທິບາຍຄວາມມຸ່ງໝັ້ນຕັ້ງໃຈຂອງພາກອຸດສາຫະກຳຊາ ສຳລັບການພັດທະນາແບບຍືນຍົງ; ແລະ
- ນຳສະເໜີວິທີການຕໍ່ໜ້າ ສຳລັບການປະຕິບັດຮ່ວມ ລະຫວ່າງພາກສ່ວນກ່ຽວຂ້ອງໃນຂະແໜງຊາ ລວມທັງພາກລັດ, ພາກອຸດສາຫະກຳ ແລະ ຊຸມຊົນຜູ້ຜະລິດຊາ.

## 1.2 ຂອບເຂດ ແລະ ໂຄງປະກອບຂອງບົດສຶກສາ

ພາກຕໍ່ໄປຂອງເອກະສານນີ້ ຈະອະທິບາຍສະຖານະປະຈຸບັນຂອງຂະແໜງຊາທົ່ວໂລກ ລວມທັງຄວາມຕ້ອງການສຳລັບການດຳເນີນວິທີການທີ່ຍືນຍົງ ເພື່ອຮັບປະກັນການພັດທະນາອຸດສາຫະກຳທີ່ຕໍ່ເນື່ອງ (ເບິ່ງພາກທີ 2). ຂະແໜງຊາລາວ ແລະ ສິ່ງທ້າທາຍເປັນເອກະລັກ ແລະ ໂອກາດທີ່ພົ້ນເດັ່ນໄດ້ຖືກນຳສະເໜີໄວ້ໃນພາກທີ 3 ແລະ 4. ໃນພາກທີ 5 ແມ່ນອະທິບາຍຄວາມຕ້ອງການສຳລັບການປະຕິບັດວຽກງານຮ່ວມກັນ ເພື່ອຊ່ວຍໃນການຂັບເຄື່ອນການພັດທະນາແບບຍືນຍົງໃນຂະແໜງການຊາ. ບົດສະຫຼຸບຂອງການສຶກສາ ແມ່ນຢູ່ພາກທີ 6-ທີ່ລວບລວມເອົາບັນຄຳແນະນຳ ແລະ ບາດກ້າວຕໍ່ໄປຂອງຂະແໜງການ.

# 2 ຂະແໜງຊາໃນທົ່ວໂລກ

## 2.1 ພາບລວມດ້ານການຕະຫຼາດ

ຕະຫຼາດຊາໃນທົ່ວໂລກໄດ້ເປີດໂອກາດໃຫ້ປະຊາຊົນກວ່າສິບສາມ (13) ລ້ານຄົນໃນຂອບເຂດທົ່ວໂລກໃນການທຳການຜະລິດ ເຊິ່ງສາມາດຜະລິດຊາໄດ້ຫຼາຍກວ່າ ຫ້າ (5) ລ້ານໂຕນ ແລະ ສາມາດສ້າງລາຍໄດ້ຫຼາຍກວ່າ ສີສິບ (40) ຕື້ໂດລາສະຫະລັດ.[4,5] ການປູກຊາແມ່ນມາຈາກຕົ້ນພືດຊະນິດພັນ *ຄາເມເລຍ ຊີເນນຊິສ (Camelia sinensis*), ຊາແມ່ນມີການປູກ ແລະຜະລິດຢູ່ຫຼາຍກວ່າ 45 ປະເທດທົ່ວໂລກ, ສ່ວນໃຫຍ່ແມ່ນຢູ່ທະວີບອາຊີ ແລະ ອາຟຣິກາ. ປະເທດທີ່ຜະລິດຊາອັນດັບຕົ້ນໆປະກອບມີ ຈີນ, ອິນເດຍ, ເຄນຢາ, ສີລັງກາ ແລະ ຕຸລະກີ; ເຊິ່ງຄິດເປັນປະລິມານທີ່ສາມາດເກັບກ່ຽວໄດ້ແມ່ນ 76% ຂອງຜົນຜະລິດຊາທົ່ວໂລກ.[4] ບັນດາປະເທດທີ່ຜະລິດຊາເຫຼົ່ານີ້ ຍັງມີຕະຫຼາດຮອງຮັບພາຍໃນປະເທດຂະໜາດໃຫຍ່ອີກດ້ວຍ. ແຫຼ່ງສົ່ງອອກຊາທີ່ສຳຄັນໄດ້ແກ່: ປະເທດຣັດເຊຍ, ສະຫະລັດອາເມຣິກາ ແລະ ບັນດາປະເທດຢູ່ເອີຣົບ.

ຜົນຜະລິດຊາທົ່ວໄປແມ່ນໄດ້ແບ່ງອອກເປັນສອງປະເພດຜະລິດຕະພັນຊາຄື ຊາດຳ ແລະ ຊາຂຽວ. ມີການຄາດຄະເນວ່າຜົນຜະລິດຂອງຊາ ຈະເພີ່ມຂຶ້ນຈາກ 5.06 ລ້ານໂຕນ ເປັນ 7.14 ລ້ານໂຕນໃນລະຫວ່າງ ປີ 2013-2023. ພາຍໃຕ້ການຂະຫຍາຍຕົວນີ້ ໄດ້ມີການຄາດຄະເນວ່າ ການເພີ່ມຂຶ້ນຂອງຜົນຜະລິດຊາຂຽວ ຈະແມ່ນຈາກ 1 ລ້ານໂຕນໃນປີ 2013 ມາເປັນ 2.97 ລ້ານໂຕນ ໃນປີ 2023 ເອີ້ນໄດ້ວ່າເພີ່ມຂຶ້ນສາມເທົ່າໂຕເລີຍ. ໃນເບື້ອງຂອງການສົ່ງອອກ, ຜະລິດຕະພັນຊາດຳ ແມ່ນຖືກຄາດຄະເນໄວ້ວ່າ ປະລິມານການສົ່ງອອກຈະເພີ່ມຂຶ້ນຮອດ 1.67 ລ້ານໂຕນ ແລະ ສ່ວນ ຊາຂຽວ ແມ່ນ 0.76 ລ້ານໂຕນ ໃນປີ 2023.[2]

ບັນຊີລາຍຊື່ບໍລິສັດຜູ້ຄ້າຜະລິດຕະພັນຊາລາຍໃຫຍ່ ທີ່ກວມເອົາ ກວ່າ 85 % ຂອງຜູ້ຄ້າຜະລິດຕະພັນຊາແບບລະບົບຕ່ອງໂສ້ທົ່ວໂລກ ມີ 3 ບໍລິສັດໃຫຍ່ ເຊັ່ນ: ຢູນີລີເວີ (Unilever), ທາທາ ໂກຼໂບ້ ເບບເວີເຣຈ (Tata Global Beverages) ແລະ ທະວິນນິ້ງ (Twinings), ເມື່ອຄິດໄລ່ສະເລ່ຍແລ້ວ ກວມເອົາ 20% ຂອງຕະຫຼາດໂລກ.[2,4]

## 2.2 ການພັດທະນາແບບຍືນຍົງໃນຂະແໜງຊາ

ມີຫຼາຍອົງກອນທີ່ເຮັດວຽກກ່ຽວກັບການພັດທະນາແບບຍືນຍົງໃນຂົງເຂດອຸດສາຫະກຳຊາໃນທົ່ວໂລກ ໃນນັ້ນປະກອບມີ ອົ ອົງການການຮ່ວມມືໃນແໜງຊາຢ່າງມີຈັນຍາບັນ (Ethical Tea Partnership (ETP)), ອົງການ ການຄ້າເປັນທຳ (Fairtrade), ອົງການ IFOAM, ອົງການ Rainforest Alliance ແລະ ອົງການ Utz Certified, ເຊິ່ງອົງການເຫຼົ່ານີ້ໄດ້ສົ່ງເສີມ, ພັດທະນາ ແລະ ທີ່ໃຫ້ການຢັ້ງຢືນເຄື່ອງບໍລິໂພກປອດສານພິດ).[6] ອົງການ Rainforest Alliance ແລະ ອົງການ ETP ໄດ້ມີການຮ່ວມມືກັບບັນດາຜູ້ຜະລິດອຸດສະຫະກຳຊາລະດັບໂລກ ຊຶ່ງລວມມີ ບໍລິສັດຢູນີລີເວີ (Unilever), ທາທາ ໂກຼໂບ້ ເບບເວີເຣຈ (Tata Global Beverages) ແລະ ທະວິນນິ້ງ (Twinings) ເພື່ອສ້າງຕັ້ງ ໂຄງການ/ແຜນງານ *ຊາ 2030 (Tea 2030)* - ໃນການລິເລີ່ມໜ້າວຽກໃນການພັດທະນາແບບຍືນຍົງໂດຍໄດ້ຮັບ ການສະໜັບສະໜູນຈາກຄະນະກຳມະການຊາສາກົນ.

ຄວາມຄິດລິເລີ່ມກ່ຽວກັບໂຄງການ *ຊາ 2030 (Tea 2030)* ແມ່ນໄດ້ຮ່ວມມືບັນດາອົງການຈັດຕັ້ງຕ່າງໆ ເພື່ອຊ່ວຍສ້າງຄວາມເຂົ້າໃຈວ່າບັນດາຜູ້ມີສ່ວນຮ່ວາມຕ່າງໆໃນທຸກລະດັບ ແລະຂະບວນການຕ່ອງໂສ້ມູນຄ່າເພີ້ມຂອງຂະແໜງ ສາມາດເຮັດວຽກຮ່ວມກັນໄດ້ ເພື່ອ ຮັບປະກັນຄວາມຍືນຍົງໃນໄລຍະຍາວຂອງຂະແໜງການ. ໂຄງການ*ຊາ 2030* ແມ່ນຖືກອອກແບບມາ ໂດຍມີຈຸດປະສົງເພື່ອຊ່ວຍຊຸກຍູ້ການດຳເນີນງານຂອງທຸກອົງການຈັດຕັ້ງໃນຕ່ອງໂສ້ມູນຄ່າເພີ້ມຂອງຂະແໜງຊາ, ບໍ່ວ່າຈະເປັນການຈັດຕັ້ງດ້ວຍຕົນເອງ ແລະ ສຳຄັນທີ່ສຸດ, ແມ່ນໂດຍມີການຮ່ວມມືນຳກັນຂອງບັນດາອົງການຈັດຕັ້ງຕ່າງໆ, ເພື່ອດຳເນີນການແກ້ໄຂບັນຫາຄວາມທ້າທາຍທີ່ກຳລັງປະເຊີນໃນປັດຈຸບັນ ແລະວິທີການແກ້ໄຂແລະປ້ອງກັນໃນຕໍ່ໜ້າທີ່ຂະແໜງຊາກຳລັງປະເຊີນ.[1] ການລິເລີ່ມ ໂຄງການ*ຊາ 2030 (Tea 2030)* ແມ່ນໄດ້ກຳນົດລະບຸ 10 ສິ່ງທ້າທາຍ ແລະ 5 ຫຼັກການສຳນເພື່ອຄວາມຍືນຍົງ ເຊິ່ງມີລາຍລະອຽດດັ່ງນີ້.

ສິບ (10) ສິ່ງທ້າທາຍທີ່ສຳຄັນສຳລັບຂະແໜງຊາໃນທົ່ວໂລກ:

1. **ການປ່ຽນແປງທາງໂຄງປະກອບຂອງປະຊາກອນ -** ການເພີ່ມຂຶ້ນຂອງປະຊາກອນ ແລະ "ຊົນຊັ້ນກາງໃນທົ່ວໂລກ" ບໍ່ພຽງແຕ່ເຮັດ ໃຫ້ຄວາມຕ້ອງການ ຂອງອາຫານ ແລະ ຊາເພີ່ມຂຶ້ນ, ແຕ່ຍັງເຮັດໃຫ້ການແຂ່ງຂັນໃນການຊົມໃຊ້ທີ່ດິນກະສິກຳເພີ່ມຂຶ້ນເຊັ່ນກັນ.

2. **ຂໍ້ຈຳກັດຂອງຊັບພະຍາກອນ -** ລະດັບການມີຕອບສະໜອງໃນອານະຄົດຂອງນ້ຳ, ພະລັງງານ ແລະ ສານອາຫານທີ່ສຳຄັນເຊັ່ນ ຟອສຟໍຣັສ, ຊຶ່ງຈະເພີ່ມຄວາມກົດດັນໃຫ້ແກ່ອຸດສາຫະກຳຊາ.

3. **ການປ່ຽນແປງຂອງສະພາບດິນຟ້າອາກາດ -** ການປ່ຽນແປງຂອງອຸນຫະພູມ ແລະ ປະລິມານນ້ຳຝົນ ອາດພາໃຫ້ເກີດການເພີ່ມຂຶ້ນຂອງສັດຕູພືດ ແລະ ພະຍາດຕ່າງໆຈາກການປ່ຽນແປງສະພາບດິນຟ້າອາກາດເຊິ່ງສາມາດກໍ່ໃຫ້ເກີດໄພຄຸກຄາມທີ່ຮຸນແຮງຕໍ່ຕົ້ນຊາໄດ້.

4. **ການແຂ່ງຂັນດ້ານທີ່ດິນ ແລະ ຜົນຜະລິດ -** ຊາບໍ່ແມ່ນພືດຫຼັກ/ບໍລິໂພກເປັນອາຫານ ແລະ ຄວາມຕ້ອງການເພີ້ມຂຶ້ນຂອງດິນກະສິກຳໄປພ້ອມກັບການປະກົດຂຶ້ນຂອງການຜະລິດພືດຊະນິດອື່ນທີ່ມີມູນຄ່າສູງກວ່າ, ແມ່ນຈະເຮັດໃຫ້ມີການແຂ່ງຂັນໃນການນຳໃຊ້ທີ່ດິນ ແລະມີການຜັກດັນຈຳເປັນທີ່ຕ້ອງການໃຫ້ຜົນຜະລິດໄດ້ຮັບໝາກຜົນເພີ້ມຂຶ້ນໃນຂະແໜງການ.

5. **ແຮງງານທີ່ມີຕອບສະໜອງ ແລະ ເຄື່ອງກົນຈັກ -** ການຂາດທາງດ້ານແຮງງານ ເນື່ອງຈາກ ການເຕີບໃຫຍ່ຂະຫຍາຍຕົວຂອງຕົວເມືອງ ແລະໂອກາດໃນການຖືກຈ້າງເຮັດວຽກມີໜ້ອຍສຳຫຼັບຊຸມຊົນ ເນື່ອງຈາກມີການໃຊ້ເຄື່ອງກົນຈັກເພີ້ມຂຶ້ນ ໃນຂະບວນການເກັບກ່ຽວ ແລະ ແປຮູບ/ປຸງແຕ່ງຊາ ນີ້ແມ່ນບັນຫາສຳຄັນທີ່ຈຳເປັນຕ້ອງໄດ້ຮັບການນຳສະເໜີແກ້ໄຂໃນອະນາຄົດ.

6. **ຄວາມສົມດຸນຂອງນຳອາດຕະຫຼອດຕ່ອງໂສ້ການສະໜອງສິນຄ້າ -** ຂະແໜງຊາແມ່ນມີຜູ້ລົງທຶນຂະໜາດນ້ອຍຈຳນວນຫຼວງຫຼາຍ ແລະ ຂະໜາດໃຫຍ່ຈຳນວນໜ້ອຍ. ຂະແໜງທີ່ຄວາມຍືນຍົງກວ່າ ແມ່ນຈະສາມາດເຮັດໃຫ້ແນ່ໃຈໄດ້ວ່າມີຄວາມສົມດຸນສະເໝີພາບວ່າດ້ວຍຄວາມໝັ້ນຄົງ/ເຂັ້ມແຂງທາງດ້ານເສດຖະກິດ ແລະ ສັງຄົມ ຕະຫຼອດຂະບວນການຕ່ອງໂສ້ການສະນອງສິນຄ້າ.

7. **ການເກີດຂຶ້ນຂອງຮູບແບບທຸລະກິດໃໝ່ -** ຄວາມທັນສະໄໝຂອງເຕັກໂນໂລຊີ ແລະ ຜະລິດຕະພັນໃໝ່ ເຊັ່ນວ່າ 'ເຄື່ອງດື່ມສຳເລັດຮູບ' ທີ່ມີຢູ່ໃນປັດຈຸບັນ ໄປພ້ອມກັບ ກັບສື່ສັງຄົມ ແລະ ການຄ້າຂາຍທາງອອນໄລ (ຜ່ານທາງອິນເຕີເນັດ) ແມ່ນມີອິດທິພົນຢ່າງໃຫຍ່ຫຼວງຕໍ່ພາກ ອຸດສາຫະກຳຊາໃນອະນາຄົດ.

8. **ການເປັນຜູ້ນຳໃນການພັດທະນາແບບຍືນຍົງທີ່ປະກົດຕົວໃນຂອບເຂດເສດຖະກິດເກີດໃໝ່ -** ເນື່ອງຈາກຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຕໍ່ການພັດທະນາຢ່າງວ່ອງໄວໃນປະເທດກຳລັງພັດທະນາ, ມັນສະແດງໃຫ້ເຫັນທີ່ເປັນໄດ້ເພີ້ມຂຶ້ນວ່າ ບັນດາປະເທດເສດຖະກິດ ທີ່ເກີດໃໝ່ເຫຼົ່ານີ້ ຈະມີບົດບາດສຳຄັນໃນການດຳເນີນການກ້າວຂຶ້ນເປັນຜູ້ນຳການພັດທະນາແບບຍືນຍົງ.

9. **ການປັບປຸງຄ່າແຮງງານ ແລະ ສະຫວັດດີການໃນຕ່ອງໂສ້ການສະໜອງສິນຄ້າ -** ການເຮັດວຽກຜະລິດຊາ ໂດຍທົ່ວໄປຖືວ່າເປັນທາງເລືອກທີ່ບໍ່ເປັນທີ່ໜ້າດຶງດູດທີ່ຈະເຮັດ. ບັນຫານີ້ຕ້ອງໄດ້ມີການນຳສະເໜີປຶກສາກັນໃນອະນາຄົດ ໂດຍສະເພາະເມື່ອການແຂ່ງຂັນສຳຫຼັບແຮງງານໃນອະນາຄົດແມ່ນເພີ້ມຂຶ້ນ ແລະຄວາມຕ້ອງການຂອງຜູ້ບໍໂພກປ້າຍທາງວ່າດ້ວຍການຜະລິດທີ່ມີຈັນຍາບັນຕະຫຼອດຕ່ອງໂສ້ການຕອບສະໜອງ.

10. **ທັດສະນະຄະຕິຂອງຜູ້ບໍລິໂພກຕໍ່ກັບຄຸນຄ່າຂອງອາຫານ -** ຄວາມເຂົ້າໃຈຮັບຮູ້ເພີ້ມຂຶ້ນຕໍ່ ຍີ່ຫໍ້ / ຜະລິດຕະພັນ ແລະ ຄວາມຕ້ອງການຂອງ ຜູ້ບໍລິໂພກວ່າຜະລິດຕະພັນແມ່ນມາຈາກແຫຼ່ງທີ່ໜ້າເຊື່ອຖື-ມີຄວາມຮັບຜິດຊອບ ແລະຜະລິດຈາກໃສ ແມ່ນເຮັດໃຫ້ຜູ້ລິໂພກຢູ່ໃນຖານະເປັນຜູ້ຂັບເຄື່ອນ/ຜັກດັນທີ່ດີກວ່າໃນໜ້າວຽກການພັດທະນາຢ່າງຍືນຍົງ.

***ຫຼັກການພື້ນຖານທີ່ສຳຄັນໃນການພັດທະນາແບບຍືນຍົງຂອງຂະແໜງຊາ***

ຫ້າຫຼັກການພື້ນຖານສຳຄັນທີ່ມີການກຳນົດ/ສ້າງໂດຍອີງການ ຊາ 2030 ສາມາດເຮັດໃຫ້ ຊາກາຍເປັນ 'ພົດເສີມສ້າງເສດຖະກິດສຳຄັນ' ໄດ້ ແລະສິ່ງເສີມການພັດທະນາແບບຍືນຍົງຂອງຂະແໜງຊາ. 'ພົດເສີມສ້າງເສດຖະກິດສຳຄັນ' ແມ່ນສາມາດສ້າງຜົນປະໂຫຍດອັນໃຫຍ່ຫຼວງ ໃຫ້ແກ່ຫຼາຍລ້ານຄົນທີ່ກ່ຽວຂ້ອງໃນຂະແໜງການ, ໂລກທີ່ຜູ້ຄົນອາໄສຢູ່, ແລະຕໍ່ກັບຂອບເຂດເສດຖະກິດໃນວົງກວ້າງ. ຈຸດປະສົງນີ້ສາມາດບັນລຸໄດ້ໂດຍການສ້າງວິທີການທີ່ມີຄວາມໂປ່ງໃສ ແລະ ຄວາມເປັນທຳໃນຂະບວນການຜະລິດ, ການຈັດຊື້ ແລະ ການຈຳໜ່າຍ ຄຽງຄູ່ກັບການນຳສະເໜີບັນຫາຄວາມທ້າທາຍທາງດ້ານສະພາບສິ່ງແວດລ້ອມທີ່ກ່ຽວຂ້ອງກັບການຜະລິດຊາ ແລະ ການພັດທະນາ ການເຊື່ອມຕໍ່ທີ່ແຂງແກ່ນລະຫວ່າງ ຜູ້ບໍລິໂພກ ແລະ ຜູ້ຜະລິດ.

ຫ້າ (5) ຫຼັກການທີ່ສຳຄັນແມ່ນໄດ້ລະບຸ ແລະ ອະທິບາຍໄວ້ໃນ**Error! Not a valid bookmark self-reference.** ຂ້າງລຸ່ມ. ການລິເລີ່ມຂອງ ໂຄງການ *ຊາ 2030 (Tea 2030)* ໄດ້ຮຽກຮ້ອງໃຫ້ພາກສ່ວນທີ່ກ່ຽວຂ້ອງຈາກຂະແໜງຊາໃນທົ່ວໂລກ ນຳໃຊ້ຫຼັກການພື້ນຖານເລົ່ານີ້ເຂົ້າໃນຂອບເຂດການດຳເນີນການຮ່ວມ ກັນ ເພື່ອຮັບປະກັນຄວາມໝັ້ນຄົງ ຂອງອຸດສາຫະກຳຊາໃນອະນາຄົດ.

**ຕາຕະລາງ 2-1 ຫ້າຫຼັກການທີ່ສຳຄັນໃນການພັດທະນາແບບຍືນຍົງຕໍ່ຂະແໜງຊາ**

| ຫຼັກການ | ເນື້ອໃນ |
|---|---|
| ການດຳລົງຊີວິດແບບຍືນຍົງ ແລະ ເພີ່ມຂີດຄວາມສາມາດຂອງຜູ້ຜະລິດ | ວຽກງານໃນອຸດສາຫະກຳຊາ ຄວນມີການຈັດສັນໃຫ້ປະຊາຊົນເຂົ້າເຖິງການດຳລົງຊີວິດແບບຍືນຍົງ. ສິ່ງດັ່ງກ່າວຕ້ອງໃຫ້ເກີດຜົນໃນທຸກໆຈຸດຂອງລະບົບຕ່ອງໂສ້ມູນຄ່າເພີ່ມສຳຄັນ, ຈາກສິ່ງຍ່ອຍໄປສູ່ການເພີ່ມຂຶ້ນ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນອະນາຄົດ, 'ພົດເສີມສ້າງເສດຖະກິດ' ຈະຕ້ອງມີຜົນຕໍ່ຜູ້ຜະລິດ, ເພື່ອພັດທະນາສັກກະຍະພາບເພື່ອທີ່ເຂົາເຈົ້າຈະສາມາດສ້າງແບບແຜນການດຳລົງຊີວິດຂອງຕົນ ແລະ ຄວາມເປັນເຈົ້າຂອງຫຼາຍຂຶ້ນ. |
| ການກັບສູ່ສະພາບເດີມຂອງຜົນຜະລິດດ້ານຄວາມຍືນຍົງຂອງການພັດທະນາ | ຊາຄວນຕ້ອງຖືກຜະລິດໂດຍການນຳໃຊ້ວິທີທາງການພັດທະນາແບບຍືນຍົງເພື່ອທີ່ຈະເຮັດໃຫ້ການຜະລິດ ແລະ ປຸງແຕ່ງ/ແປຮູບຊາບໍ່ທຳລາຍໂຄງສ້າງຂອງດິນ, ຊີວະນາໆພັນ ແລະ ນ້ຳເຊິ່ງເປັນແຫຼ່ງທີ່ຊາຕ້ອງການໃນການຈະເລີນເຕີບໂຕ, ຫຼື ສິ່ງຜົນກະທົບທາງລົບຕໍ່ກຳມະກອນຜູ້ເຮັດຊາ. ພົດເສີມສ້າງເສດຖະກິດ ຕ້ອງເບິ່ງຄວາມເປັນໄປໄດ້ໃນການເຮັດໃຫ້ດິນກັບສູ່ສະພາບເກົ່າ, ເພີ່ມຄວາມຫຼາກຫຼາຍທາງຊີວະນາໆພັນ ແລະ ຫຼຸດຜ່ອນການນຳໃຊ້ນ້ຳ, ພະລັງງານ, ຝຸ່ນເຄມີ ແລະ ຢາປາບສັດຕູພືດທີ່ຢູ່ໃນຂອບເຂດປູກຊາ ແລະ ກວດສອບຜົນກະທົບທາງກວ້າງຕໍ່ຊຸມຊົນ ແລະ ສະພາບແວດລ້ອມ. |
| ຫຼຸດຜ່ອນການສ້າງ/ປ່ອຍລທາດກາກບອນ ແລະ ຄວາມຍືດຫຍຸ່ນ | ໃນອະນາຄົດການຜະລິດ ແລະ ການບໍລິໂພກຊາແມ່ນພົບກັບສິ່ງທ້າຍທາຍຫຼາຍຢ່າງ ແລະ ຂະແໜງການຈຳເປັນຕ້ອງການດຳເນີນການຢ່າງມີຄວາມຍືດຫຍຸ່ນຕະຫຼອດຂອງຕ່ອງໂສ້ ໃນການຈັດການຄວາມ ສ່ຽງຮ່ວມກັນ, ໂດຍສະເພາະຈາກການປ່ຽນແປງຂອງສະພາບດິນຟ້າອາກາດ. ຊາຈຳເປັນຕ້ອງເຮັດບົດບາດຂອງຕົນໃນການຫຼຸດຜ່ອນການປ່ອຍກາສໃນທຸກຂະບວນການຂັ້ນຕອນ-ນັບແຕ່ການປຸງແຕ່ງຂອງໃບຊາ ແລະ ການຂົນສົ່ງ, ຈົນຮອດການຕົ້ມນ້ຳ. |
| ຄວາມໂປ່ງໃສຂອງລະບົບຕ່ອງໂສ້ມູນຄ່າເພີ່ມແລະ ຄວາມຍືນຍົງຂອງກົນໄກການຕະຫຼາດ | ຈຸດສຳຄັນໃນການດຳເນີນງານຂອງຮູບແບບຕະຫຼາດຊາ ແມ່ນບໍ່ພຽງແຕ່ລາຄາທີ່ຈ່າຍໄປເທົ່ານັ້ນ ແຕ່ແມ່ນຜົນຕອບແທນຄືນ ແລະສະພາບການໄດ້ຮັບຄືນເງິນສົດໃຫ້ແກ່ຜູ້ຜະລິດນຳ, ວິທີການຈັດການຄວາມສ່ຽງ ແລະ ສະພາບຄ່ອງ ຕົວການມູນວຽນຂອງເງິນ ແລະ ການລົງທຶນຂອງຂະແໜງ. ພາກສ່ວນທີ່ຜະລິດ ພົດເສີມສ້າງເສດຖະກິດ ຈະຊ່ວຍໃນການພັດທະນາ ແລະ ເຊື່ອມຕໍ່ກົນໄກການຕະຫຼາດແບບຍືນຍົງເຊິ່ງຈະສົ່ງຜົນດີຕໍ່ການພັດທະນາ ແບບຍືນຍົງໃຫ້ກວ້າງຂຶ້ນບໍ່ພຽງແຕ່ດ້ານການເງິນເທົ່າ |
| ການມີສ່ວນຮ່ວມ ແລະເຊື່ອມຕໍ່ກັບຜູ້ບໍລິໂພກ | ພົດເສີມສ້າງເສດຖະກິດແມ່ນສິ່ງໜຶ່ງທີ່ສາມາດເຊື່ອມຕໍ່ກັບຜູ້ບໍລິໂພກ. ຜູ້ບໍລິໂພກສາມາດຮູ້ເຖິງທີ່ມາວ່າຊາທີ່ພວກເຂົາດື່ມມາຈາກໃສ ແລະ ຂັ້ນຕອນຕ່າງໆຂອງຊາຜະລິດແນວໃດ. ຜູ້ບໍລິໂພກສາມາດຮຽກຮ້ອງມາດຕະຖານຄວາມຍືນຍົງໃນລະດັບສູງ ແລະ ດ້ວຍເຫດນັ້ນ ພວກເຂົາປຽບຄືຜູ້ຄວບຄຸມຕະຫຼາດ ແລະເປັນຕົວຜັກດັນໃນທຸກຂັ້ນຕອນການຜະລິດໃຫ້ມີການປັບປຸງມາດຕະຖານຂອງການພັດທະນາແບບຍືນຍົງ. |

ແຫຼ່ງຂໍ້ມູນ: ເວທີກອງປະຊຸມເພື່ອອະນາຄົດ 2014 (Forum of the Future 2014)

# 3 ຂະແໜງຊາລາວ

ສາຍພັນຊາທີ່ຖືກຄົ້ນພົບໃນ ສປປ ລາວ ຄັ້ງທຳອິດແມ່ນຢ່າງນ້ອຍແມ່ນ 600 ປີ ທີ່ແລ້ວ ແລະ ມີຫຼັກຖານບາງຢ່າງທີ່ສາມາດອ້າງອີງໄດ້ວ່າມີການເຮັດການຄ້າຂາຍຊາ ກັບພໍ່ຄ້າຊາວຈີນນັບແຕ່ສັດຕະວັດທີ່ເຈັດ (7). ຢ່າງໃດກໍ່ຕາມ, ຂະແໜງຊາລາວ ຍັງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນຖ້າທຽບໃສ່ປະເທດຈີນ ແລະ ການຜະລິດຍັງມີຈຳນວນໜ້ອຍເມື່ອທຽບກັບຂະແໜງການກະສິກຳອື່ນໆໃນປະເທດ.

ໃນປະຈຸບັນ, ພາກລັດໄດ້ສົ່ງເສີມການປູກຊາໃຫ້ເປັນພືດສຳຮອງໃນບັນດາແຂວງພາກເໜືອ ທົດແທນການຖາງປ່າເຮັດໄຮ່ ແລະ ປູກຝິ່ນ.[7,8] ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດລາວ ປີ 2016 – 2020 ແລະ ໃນຍຸດທະສາດການພັດທະນາຂະແໜງກະສິກຳຮອດປີ 2025 ແລະວິໄສທັດຮອດປີ 2030, ເພິ່ນໄດ້ກຳນົດໃຫ້ ຊາ ເປັນພືດຈຸດສຸມ ແລະ ສ້າງລາຍຮັບໃຫ້ຊາວກະສິກອນເຂດພູດອຍ. ອົງການປົກຄອງແຂວງຜົ້ງສາລີ ໄດ້ຮ່າງຍຸດທະສາດການພັດທະນາຊາຂອງແຂວງ ເຊິ່ງຄາດວ່າຈະສຳເລັດສົມບູນ ແລະ ສະເໜີເພື່ອຮັບຮອງ ໃນທ້າຍປີ 2016.

## 3.1 ຄວາມເປັນມາຂອງຊາລາວ

### 3.1.1 ພື້ນທີ່ປູກຊາ

*ພື້ນທີ່ປູກຊາໃນປະຈຸບັນ*



ຊາ ໃນ ສປປ ລາວ ແບ່ງອອກເປັນ ສາມ (3) ປະເພດດ້ວຍກັນ, ໃນນັ້ນມີ: ຊາປ່າທຳມະຊາດ, ຊາປ່າທີ່ປູກເອງ (ເປັນທີ່ຮູ້ຈັກຢູ່ໃນທ້ອງຖິ່ນວ່າ ເປັນ 'ຊາບູຮານ'), ແລະ ຊາປູກໃນສວນ (ເອີ້ນວ່າ ຊາສາຍພັນໃໝ່). ການປູກຊາຢູ່ແຂວງພາກເໜືອກວມເອົາ 85% ຂອງການຜະລິດຊາທົ່ວປະເທດເຊິ່ງມີແຂວງຜົ້ງສາລີ ເປັນສູນກາງຂອງການຜະລິດ. ນອກນັ້ນຍັງມີກິດຈະການການຜະລິດຊາທີ່ເກີດຂຶ້ນໃໝ່ຢູ່ພາກໃຕ້ຂອງລາວອີກດ້ວຍ (ຈຳປາສັກ, ສາລະວັນ ແລະ ອັດຕະປື ເທິງເຂດພູພຽງບໍລະເວນ). ການປູກຊາໃນ ສປປ ລາວ ສ່ວນໃຫຍ່ແມ່ນຕັ້ງຢູ່ເຂດພູດອຍ ທີ່ເປັນບ່ອນທີ່ຢູ່ອາໃສຂອງກຸ່ມຊົນເຜົ່າຕ່າງໆ ທີ່ມີແຮງງານທີ່ເປັນແມ່ຍິງປະກອບສ່ວນຢ່າງພົ້ນເດັ່ນຕໍ່ທຸກວຽກງານຂອງການຜະລິດຊາ ບໍ່ວ່າຈະເປັນການປູກ, ການເກັບກ່ຽວ, ຂະບວນການປຸງແຕ່ງ ແລະ ການຂາຍຜະລິດຕະພັນຊາ.[9] ການຜະລິດຊາສ່ວນໃຫຍ່ແລ້ວແມ່ນຖືວ່າເປັນ 'ການຜະລິດແບບອິນຊີ' ແຕ່ວ່າມີພຽງສວນປູກຈຳນວນໜຶ່ງຢູ່ເຂດພູພຽງບໍລະເວນ ທີ່ໄດ້ຮັບການຢັ້ງຢືນວ່າເປັນສວນປູກແບບອິນຊີແທ້.

ຜົນຂອງການສຶກສາຄົ້ນຄວ້າໃນເກົ້າ (9) ແຂວງພາກເໜືອຂອງລາວ ໃນປີ 2010-2011, ເຫັນໄດ້ວ່າ ມີປະຊາຊົນຈາກ 8,500 ຄົວເຮືອນໄດ້ມີສ່ວນຮ່ວມໃນການປູກຊາ.[10] ອີກໜຶ່ງຜົນຂອງການສຶກສາຄົ້ນຄວ້າ ໄດ້ຊີ້ບອກວ່າ ເນື້ອທີ່ການປູກຊາໃນປະຈຸບັນ ແມ່ນມີປະມານ 12,000 ເຮັກຕາ ເຊິ່ງໃນນັ້ນ 72% ແມ່ນ ຊາປ່າທຳມະຊາດ, 24% ແມ່ນ ຊາປູກ ແລະ 4% ແມ່ນຊາບູຮານ ເຖິງແມ່ນວ່າສິ່ງອ້າງອີງເຫຼົ່ານັ້ນສະແດງໃຫ້ເຫັນວ່າ ຊັບພະຍາກອນຊາແມ່ນນຳໃຊ້ໄດ້ບໍ່ເຕັມທີ່.[11]

ເນື້ອທີ່ການປູກຊາໂດຍສ່ວນໃຫຍ່ແລ້ວແມ່ນນອນຢູ່ໃນເນື້ອທີ່ດິນຂອງບ້ານ ແລະ ຖືກກຳນົດເຂດແດນໂດຍ ແຜນງານຈັດສັນທີ່ດິນ ແລະ ປ່າຂອງລັດຖະບານ. ມີບາງເນື້ອທີ່ປູກເປັນດິນສຳປະທານທີ່ພາກລັດຈັດສັນໃຫ້ແກ່ຜູ້ຜະລິດພາຍໃນ ຫຼື ຕ່າງປະເທດ.

ສະຫຼຸບສັງລວມຂອງການຄອບຄອງ ແລະ ການຄຸ້ມຄອງຂອງເຂດທີ່ແຕກຕ່າງກັນເຫຼົ່ານີ້ແມ່ນໄດ້ອະທິບາຍດັ່ງລຸ່ມນີ້:

- ***ຊາປ່າທຳມະຊາດ***
    - » ພື້ນທີ່ປ່າໄມ້ບ້ານຂອງຊຸມຊົນໂດຍການຄຸ້ມຄອງ ແລະ ເກັບກ່ຽວໄດ້ໂດຍຄົວເຮືອນ (ຫຼື ສະຫະກອນຄົວເຮືອນ) ພາຍໃນບ້ານເຫຼົ່ານັ້ນ.
    - » ພື້ນທີ່ປ່າສຳປະທານທີ່ຖືກຈັດສັນໃຫ້ ແລະ ຄຸ້ມຄອງໂດຍຜູ້ຜະລິດພາຍໃນ ແລະ ຕ່າງປະເທດ ໂດຍມີການຈ້າງແຮງງານທ້ອງຖິ່ນເພື່ອເກັບກ່ຽວ.
- ***ຊາປູກແບບການຄ້າ***
    - » ເນື້ອທີ່ສວນປູກຂອງຊຸມຊົນ ຫຼື ຂອງບຸກຄົນໃນບ້ານ ທີ່ຄຸ້ມຄອງ ແລະ ເກັບກ່ຽວເອງໂດຍຄົວເຮືອນ (ຫຼື ສະຫະກອນຄົວເຮືອນ) ຂອງບ້ານເຫຼົ່ານັ້ນ.
    - » ພື້ນທີ່ດິນສຳປະທານທີ່ຖືກຈັດສັນໃຫ້ ແລະ ຄຸ້ມຄອງໂດຍຜູ້ຜະລິດພາຍໃນ ແລະ ຕ່າງປະເທດ ໂດຍມີການຈ້າງແຮງງານທ້ອງຖິ່ນເພື່ອເກັບກ່ຽວ.
- ***ຊາບູຮານ (ຊາປ່າທີ່ນຳມາປູກເປັນເວລາຫຼາຍຮ້ອຍປີ)***
    - » ເນື້ອທີ່ສວນປູກຂອງຊຸມຊົນໃນບ້ານ ທີ່ຄຸ້ມຄອງ ແລະ ເກັບກ່ຽວໂດຍຄົວເຮືອນ (ຫຼື ສະຫະກອນຄົວເຮືອນ) ຂອງບ້ານ.

***ພື້ນທີ່ປູກຊາທີ່ເປັນທ່າແຮງ***

ເຂດພື້ນທີ່ ທີ່ມີການປູກຊາແລ້ວນັ້ນ ໄດ້ກວມເອົາຈຳນວນຫຼາຍກວ່າ 300 ບ້ານ, ມີ 17,000-ຄົວເຮືອນ [11]. ການສຶກສາຄົ້ນຄວ້າເພື່ອປະເມີນຄວາມຍືນຍົງຂອງທີ່ດິນສຳລັບການປູກຊາໃນ ສປປ ລາວ, ພົບທີ່ໄດ້ແມ່ນ ເນື້ອທີ່ ຈຳນວນເກືອບ 2.4 ລ້ານເຮັກຕາ ແມ່ນມີຄວາມເໝາະສົມຕໍ່ການປູກຊາ ແລະ ໃນນັ້ນ 200,000 ເຮັກຕາ ແມ່ນມີຄວາມເໝາະສົມທີ່ສຸດ.[12]

### 3.1.2 ຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ຄ້າຂາຍ

ຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ຄ້າຂາຍ ຊາ ສາມາດແບ່ງອອກຕາມຂົງເຂດ ຄື ຂົງເຂດພາກເໜືອ ແລະ ຂົງເຂດພາກໃຕ້ (**ຕາຕະລາງ** 3-1).

**ຕາຕະລາງ 3-1 ປະເພດຂອງຜູ້ຜະລິດ ແລະ ຜູ້ຂາຍຊາ ໃນ ສປປ ລາວ**

| ພາກ | ຄຳອະທິບາຍ | ຜູ້ມີສ່ວນຮ່ວມສຳຄັນ |
|---|---|---|
| ພາກເໜືອ | ຊາປ່າທຳມະຊາດແບບພື້ນເມືອງ, ສ່ວນຊາແບບບູຮານ ແລະ ອຸດສະຫະກຳການປຸງແຕ່ງໃນເຮືອນນ້ອຍສະເພາະ. ມີການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງການປູກ ແບບທັນສະໃໝ ລວມທັງ ການຈັດຕັ້ງດຳເນີນ 'ສັນຍາການປູກ' ໂດຍການສະໜັບສະໜູນຈາກຜູ້ຄ້າຂາຍຄົນຈີນ ແລະ ນັກລົງທຶນທີ່ໄດ້ຮັບສຳປະທານ. ສິ່ງອຳນວຍຄວາມສະດວກໃນການປຸງແຕ່ງຊາທີ່ມີຂະໜາດໃຫຍ່ໄດ້ຮັບການຕິດຕັ້ງ.<br><br>ຜະລິດຕະພັນຫຼັກໆແມ່ນ ຊາ-ເມົາຊາ, ຊາຫຍາບສີຂຽວອ່ອນ. ຜະລິດຕະພັນຊາສ່ວນຫຼາຍແມ່ນຂາຍຢູ່ແຂວງ ຢູນນານ ຂອງ ສປ ຈີນ.<br><br>ນຳໃຊ້ວິທີການຜະລິດແບບຊາວຈີນ ແລະຂາຍຢູ່ຕະຫຼາດຈີນ | ຜູ້ຜະລິດຊາ ແລະ ເຮືອນປຸງແຕ່ງຊາ ຈຳນວນໜຶ່ງ ໃນ 7 ແຂວງພາກເໜືອ<br><br>ວິສາຫະກິດທ້ອງຖິ່ນ (ເຊັ່ນ: ຊາຂຽວຜົ້ງສາລີ, ໂຮງງານຜະລິດຊາສົມນຶກ, ບໍລິສັດ ແສງຈັນກະສິກຳ ຂາເຂົ້າ-ຂາອອກ ຈຳກັດ)<br><br>ຜູ້ລົງທຶນຕ່າງປະເທດ (ເຊັ່ນ: ລາວ ຊຸນເຢນ ທີ ຄລາກສິກ, ແລນຊັນ, ໂຮງງານຊາພູຟ້າ)<br><br>ຜູ້ຊື້ຂາຍຊາ / ນາຍໜ້າ ຈາກແຂວງຢູນນານ, ສປ ຈີນ<br><br>ຜູ້ຊື້ຂາຍຢູ່ທ້ອງຖິ່ນ: ພູເຂົາລາວ, ສີໜຸກ<br><br>ໂຄງການສະໜັບສະໜູນໂດຍອົງການ NGO (ເຊັ່ນ: Helvetas-COPE, CCL, OXFAM ) |
| ພາກໃຕ້ | ການຜະລິດແບບດັ້ງເດີມ ແລະ ມີການເຕີບໃຫຍ່ຂະຫຍາຍຕົວຂອງຜູ້ຜະລິດຂະໜາດນ້ອຍ ແລະ ມີການປູກບໍ່ຫຼາຍ. ຜະລິດຕະພັນສຳເລັດຮູບຂອງພາກໃຕ້ ມີ: ຊາຂຽວ, ຊາດຳ ແລະ ຊາອູຫຼົງ ຈາກພູພຽງບໍລະເວນ.<br><br>ມີຕະຫຼາດຂ້ອນຂ້າງກວ້າງຂວາງ ຢູ່ ທະວີບເອີລົບ ແລະ ອາເມລິກາ. | ດຕະພັນຂອງ ບາຈຽງ (Bapro) (ສະຖານະພາບບໍ່ຈະແຈ້ງ)<br><br>ໃໝສະຫວັນລາວ<br><br>ດາວເຮືອງ<br><br>ຜູ້ຄ້າຂາຍ (ເຊັ່ນ: ສີໜຸກ)<br><br>ຜູ້ຜະລິດຊາຂະໜາດນ້ອຍຈຳນວນໜຶ່ງ (ເຊັ່ນ: ອີງຢາ-ປາກຊ່ອງ ຫຼັກ 32, ນາງ ສຸດ-ປາກຊ່ອງ ຫຼັກ 40) |

ແຫຼ່ງຂໍ້ມູນຈາກ: Earth Systems ໃນປີ 2016

ໃນປະຈຸບັນ ຍັງບໍ່ທັນມີການໃນຈັດການບັນດາຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ຄ້າຂາຍຊາ ເປັນລະບົບທີ່ໄດ້ສະມັດຕະພາບເທື່ອ. ສະມາຄົມຊາແຫ່ງຊາດ ຍັງບໍ່ທັນໄດ້ຮັບການສ້າງຕັ້ງຂຶ້ນເທື່ອ ແລະ ການຈັດເປັຍອົງການຈັດຕັ້ງໃນຂະແໜງ ແມ່ນປະກອບດ້ວຍສະມາຊິກກຸ່ມຕາງໜ້າຈາກຜູ້ຜະລິດ/ຜູ້ປຸງແຕ່ງ ຈຳນວນນອນໜຶ່ງເທົ່ານັ້ນ. ໃນໄລຍະຜ່ານມາ, ໄດ້ມີການສ້າງຕັ້ງຄະນະປະສານງານພັດທະນາຂະແໜງຊາລາວ, ເຊິ່ງໃນຕອນນັ້ນ ມັນປຽບດັ່ງທ່າແຮງອັນດີໃນການສ້າງຕັ້ງສະມາຄົມຊາແຫ່ງຊາດ. ກຸມດັ່ງກ່າວໄດ້ມີຄະນະກຳມະການທີ່ປຶກສາ ເຊິ່ງປະກອບມີ ຕາງໜ້າຈາກຊາວກະສິກອນ, ຜູ້ຜະລິດ, ແລະ ກະຊວງທີ່ກ່ຽວຂ້ອງ ພ້ອມທັງ ໄດ້ຮັບການສະໜັບສະໜູນຈາກ ອົງການຈັດຕັ້ງສາກົນ ເຊັ່ນ: ອົງການ GIZ ແລະ Harvetas. ເຖິງຢ່າງໃດກໍ່ຕາມ ຄະນະດັ່ງກ່າວ ດັ່ງກ່າວບໍ່ໄດ້ມີການເຄື່ອນໄຫວນັບແຕ່ໃນປີ 2014. ປະຈຸບັນຍັງບໍ່ມີຫນ່ວຍງານ ສະເພາະຂອງລັດຖະບານ ຫຼື ສູນຄົ້ນຄ້ວາ ແລະ ພັດທະນາ ສຳລັບການພັດທະນາຊາຂອງລາວ.

### 3.1.3 ການຜະລິດຊາ

ຂໍ້ມູນລວມກ່ຽວກັບການຜະລິດຊາປະຈຳປີທົ່ວປະເທດ ແມ່ນມີຈຳກັດພຽງແຕ່ຊາບູຮານ ແລະ ຊາປູກສາຍພັນໃໝ່ເທົ່ານັ້ນ. ອີງຕາມ ຂໍ້ມູນຈາກສູນສະຖິຕິແຫ່ງຊາດໃນປີ 2015, ມີປະມານ 3,400 ເຮັກຕາ ຂອງເນື້ອທີ່ຊາທີ່ຖືກເກັບກ່ຽວຊີ່ງກວມເອົາຢູ່ ແຂວງຜົ້ງສາລີ, ແຂວງອຸດົມໄຊ, ແຂວງຫົວພັນ, ແຂວງຫຼວງພະບາງ ແລະ ແຂວງຈຳປາສັກ ເຊິ່ງໄດ້ຮັບຜົນຜະລິດຫຼາຍກວ່າ 6,100 ໂຕນຈາກໃບສົດ (ປະມານ 1,400 ໂຕນແມ່ນຊາສຳເລັດຮູບແລ້ວ)[13] . ສິ່ງດັ່ງກ່າວສະແດງໃຫ້ເຫັນ ເຖິງການເພີ່ມຂຶ້ນຂອງຂອບເຂດ ເກັບກ່ຽວໃນປີ 2010 ເຊິ່ງມີ 40 % ເຊິ່ງເພີ່ມຂຶ້ນເປັນ 2 ເທົ່າຈາກປີ 2010.[11] ເນື່ອງຈາກມີຜູ້ຄ້າຊາທີ່ບໍ່ໄດ້ຈົດທະບຽນໃນການຄ້າຂາຍຊາ, ຈຶ່ງເປັນໄປໄດ້ວ່າປະລິມານທີ່ເກັບໄດ້ຕົວຈິງແທ້ໆ ແມ່ນບໍໄດ້ຮັບການລາຍງານ. ນອກຈາກນີ້, ຂໍ້ມູນກ່ຽວກັບການຜະລິດຊາປ່າຈາກແຫຼ່ງທຳມະຊາດແມ່ນມີຈຳກັດຫຼາຍ.

### 3.1.4 ຂະບວນການປຸງແຕ່ງຊາ

ໂດຍປົກກະຕິແລ້ວຊາໃນປະເທດລາວແມ່ນຖືກຜະລິດປຸງແຕ່ງໂດຍໃຊ້ວິທີແບບດັ້ງເດີມ[14] ເຊິ່ງວິທີການຜະລິດແມ່ນມີທັງຜະລິດໃນຄົວເຮືອນ ແລະ ຜະລິດໃນໂຮງງານ. ຊາທີ່ປຸງແຕ່ງແລ້ວແມ່ນແບ່ງອອກເປັນສອງປະເພດຄື:

- 'ເໝົາ-ຊາ' (ຊາໃບລັກສະນະຫຍາບ) ໃຊ້ໃນການຜະລິດ ຊາ 'ປູ-ເອີ' (ທີ່ເປັນຊາໝັກ); ແລະ
- ຊາສຳເລັດຮູບອື່ນໆ ເຊັ່ນ: ຊາຂາວ, ຊາດຳ, ຊາເຫຼືອງ, ຊາແດງ, ຊາຂຽວ, ຊາອູ່ຫຼົງ.

ນອກຈາກນັ້ນ, ຍັງມີຊາສະໝຸນໄພທີ່ຜະລິດຢູ່ໃນຂອບເຂດພື້ນທີ່ຂະໜາດນ້ອຍເຊິ່ງເຮັດມາຈາກໃບມອນ, ກະຈັ່ຽບ ແລະ ຫົວສີໄຄ. ຜະລິດຕະພັນທີ່ນິຍົມໃນຊ່ວງບໍ່ດົນມານີ້ແມ່ນ ຊາ ເໝົາ-ຊາ' ເຊິ່ງສ່ວນໃຫຍ່ແມ່ນຂາຍໃຫ້ແກ່ພໍ່ຄ້ານາຍໜ້າຊາວຈີນ ແລະ ນຳໄປປຸງແຕ່ງຜະລິດເປັນ ຊາປູ-ເອີ ໃນປະເທດຈີນ.

ໃນຊຸມປີທີ່ຜ່ານມາ ໄດ້ມີໂຮງງານປຸງແຕງຊາທີ່ເພີ່ມຫຼາຍຂຶ້ນຢ່າງໄວວາ ເພື່ອຮອງຮັບການຜະລິດຊາທີ່ຫຼາຍຂຶ້ນ. ສະເພາະແຂວງຜົ້ງສາລີ, ຈຳນວນໂຮງງານໄດ້ເພີ່ມຂຶ້ນຈາກສາມ (3) ໂຮງງານໃນປີ 2010 ມາເປັນ ສິບເອັດ (11) ໂຮງງານທີ່ໄດ້ຂຶ້ນທະບຽນແລ້ວໃນປີ 2016. ໃນບັນດາໂຮງງານຕ່າງໆເຫຼົ່ານີ້ມີພຽງໜຶ່ງ (1) ໂຮງງານທີ່ເປັນຂອງຄົນລາວ (ໂຮງງານຊາຂຽວຜົ້ງສາລີ), ໜຶ່ງ (1) ໂຮງງານເປັນຂອງຄົນ ມາເລເຊຍ ແລະ ອີກເກົ້າ (9) ແຫ່ງທີ່ເຫຼືອແມ່ນຂອງຄົນຈີນ. ອີກບໍລິສັດໜຶ່ງແມ່ນບໍລິສັດຂອງລາວ ຊື່ວ່າ ຊາສີມບົກ, ເຊິ່ງກຳລັງຢູ່ລະຫວ່າງຂັ້ນຕອນການຂໍຂຶ້ນທະບຽນ.[15]

### 3.1.5 ຕະຫຼາດຮອງຮັບ ແລະ ລາຄາຂອງຊາ

ຜະລິດຕະພັນຊາທີ່ຜະລິດໄດ້ໃນ ສປປລາວ ສ່ວນໃຫຍ່ (ປະມານ 85-90%) ແມ່ນສົ່ງອອກຂາຍໄປ ທີ່ແຂວງຢູນໜານ ຂອງປະເທດຈີນປັນຫຼັກ. ໃນບາງຄັ້ງ, ຊາລາວ ຈະຖືກປຸງແຕ່ງເພີ່ມ ແລະ ຖືກບັນຈຸຢູ່ແຂວງຢູນໜານໃນຮູບແບບຜະລິດຕະພັນຊາທີ່ເປັນກ້ອນ ແລະ ແຫຼ່ງທີ່ມາຂອງຊາແມ່ນຖືກປົດບັງ ສາຍເຫດແມ່ນເນື່ອງຈາກ ລະບຽບການປົກປ້ອງສິນຄ້າ ແລະການຄ້າຊາພາຍໃນປະເທດຈີນ. ແຕ່ກໍ່ມີພໍ່ຄ້າຊາວຈີນສ່ວນໜຶ່ງ ໄດ້ສົ່ງເສີມຜະລິດຕະພັນຊາທີ່ຜະລິດຈາກລາວ ໂດຍການບອກໃຫ້ລູກຄ້າໄດ້ຮັບຮູ້ເຖິງແຫຼ່ງທີ່ມາ ໂດຍສະເພາະໃຫ້ແກ່ລູກຄ້າຜູ້ທີ່ກຳລັງຊອກ ຫາຊາປອດສານພິດ ແລະບໍ່ມີສານເຄມີ. ຄວາມເປັນມາທີ່ເກົ່າແກ່ບູຮານດັ່ງເດີມ ແລະຜົນດີຕໍ່ສູຂະພາບທີ່ໄດ້ມາຈາກຄຸນະພາບຂອງຊາປ່າຈາກລາວແມ່ນເປັນທີ່ຮູ້ກັນຢ່າງດີ ໃນວົງຕະຫຼາດຊາຈີນທີ່ສາມາດຊື້ໄດ້ໃນລາຄາສູງເຊັ່ນດຽວ.

ນອກນັ້ນ, ຕະຫຼາດທີ່ຊື້ຊາຈາກລາວໃນປະລິມານໜ້ອຍປະກອບມີ: ຣັດເຊຍ, ຝຣັ່ງ, ເຢຍລະມັນ, ສະຫະລັດອາເມຣິກາ ແລະ ປະທເດອື່ນໆທີ່ຢູ່ໃກ້ໆຈາກພາກຕາເວັນອອກ ແລະ ອາຊີຕາເວັນອອກສຽງໃຕ້. ນອກຈາກນັ້ນ, ວ່າງບໍ່ດົນມານີ້, ຊາແດງຈາກລາວຍັງໄດ້ຮັບ ຄວາມສົນໃຈ ຈາກ

ຕະຫຼາດໄຕ້ຫວັນ ແຕ່ວ່າການທີ່ຈະເຈາະເຂົ້າສູ່ຕະຫຼາດໃໝ່ ຜູ້ສະໜອງຝ່າຍລາວຍັງຕ້ອງພົບກັບຄວາມທ້າທາຍໃນການຕອບ ສະໜອງຄວາມຕ້ອງທາງດ້ານປະລິມານຊາເປັນຈຳນວນຫຼາຍ ແລະ ການຄວບຄຸມຄຸນະພາບໃຫ້ໄດ້ຕາມເກັນຢ່າງສະໝ່ຳສະເໝີ.

ອີງຕາມສະຖິຕິຂອງສູນການຄ້າສາກົນ ໄດ້ປະເມີນມູນຄ່າທີ່ສົ່ງອອກຂອງ ສປປ ລາວ ໃນປີ 2014 ແມ່ນ $10,000 ໂດລາສະຫະລັດ/ໂຕນ[16]. ຊາທີ່ຊື້ຈາກຊາວກະສິກອນສ່ວນໃຫຍ່ແມ່ນຍັງເປັນໃບສົດທີ່ຍັງບໍ່ໄດ້ຜ່ານຂະບວນການໃດໆ (ຊາໃບສົດ) ຫຼື ອາດຈະຜ່ານຂະບວນການປຸງແຕ່ງໃນລະດັບໃດໜຶ່ງ (ຊາໃບທີ່ຂົ້ວແບບຫຍາບ) ໂດຍໂຮງງານ ຫຼື ພໍ່ຄ້າທີ່ບໍ່ໄດ້ຈົດທະບຽນ ແລະ ຖືກປຸງແຕ່ງຫຸ່ມຫໍ່ຜະລິດຂັ້ນສຸດທ້າຍໂດຍ ໂຮງງານພາຍໃນປະເທດ ຫຼື ພາຍໃນປະເທດຈີນ ກ່ອນທີ່ຈະສົ່ງຂາຍອອກສູ່ຕະຫຼາດ.

ລາຄາຂອງຊາລາວ ແມ່ນມີການປ່ຽນແປງຢູ່ສະເໝີ ແລະ ຂຶ້ນກັບແຫຼ່ງທີ່ມາຂອງວັດຖຸດິບ, ສາຍພັນຂອງຊາ, ຄຸນະພາບຂອງວັດຖຸດິບ ແລະ ຄຸນະພາບຂອງຂະບວນການປຸງແຕ່ງ. ລະດູການເກັບກ່ຽວມີຜົນສຳຄັນໃນການກຳນົດລາຄາຂອງຊາເຊັ່ນດຽວກັນ, ຊາທີ່ເກັບກ່ຽວໃນລະດູແລ້ງຈະໄດ້ລາຄາດີກວ່າຊາ ໃນລະດູຝົນເນື່ອງຈາກຄວາມຕ້ອງການໃນລະດູນັ້ນມີໜ້ອຍ. ລາຄາຂອງຊາໃນລະດູແລ້ງແມ່ນໄດ້ຖືກຮວບຮ່ວມຈາກຜູ້ມີສ່ວນຮ່ວມໃນອຸດສະຫາກຳຊາໃນຕົ້ນປີ 2016 ແລະສະຫລຸບລາຍລະອຽດໃຫ້ເຫັນໃນ **Error! Reference source not found.** ຂ້າງລຸ່ມ. ລາຄາຊາລາວທີ່ຜ່ານຂະບວນການປຸງແຕ່ງແລ້ວແມ່ນໄດ້ມີການປຽບທຽບກັບລາຄາທີ່ໄດ້ມີການລາຍງານໂດຍອົງການອາຫານ ແລະກະສິກຳໂລກທີ່ $2.42 ໂດລາ/ກິໂລກຣາມ.[17]

**ຕາຕະລາງ 3-2 ລາຄາຊາໃນລະດູແລ້ງ ໂດຍການເຫັນດີຈາກຜູ້ປະກອບການອຸດສາຫະກຳຊາລາວ ໃນເດືອນມີນາ 2016**

| ແຫຼ່ງປູກ | ຊະນິດ | ລາຄາຕໍ່ກິໂລ (ໂດລາ) |
|---|---|---|
| ບໍ່ທັນປຸງແຕ່ງ | | |
| ເມືອງປາກຊ່ອງ, ແຂວງຈຳປາສັກ | ຊາຂຽວ | $0.37 - $0.62 |
| ເມືອງປາກແບ່ງ, ແຂວງອຸດົມໄຊ | ຊາຂຽວ | $0.84 |
| ເມືອງຜົ້ງສາລີ, ແຂວງຜົ້ງສາລີ | ຊາຂຽວ | $1.00 |
| ເມືອງຜົ້ງສາລີ, ແຂວງຜົ້ງສາລີ | ຊາຂຽວດັ້ງເດີມ | $2.84 - $3.70 |
| ປຸງແຕ່ງແລ້ວ | | |
| ເມືອງປາກຊ່ອງ, ແຂວງຈຳປາສັກ | ຊາຂຽວ | $4.93 - $8.63 |
| ເມືອງປາກຊ່ອງ, ແຂວງຈຳປາສັກ | ຊາຂາວ | $61.65 |
| ເມືອງຜົ້ງສາລີ, ແຂວງຜົ້ງສາລີ | ຊາຂຽວບູຮານ | $61.65 |
| ເມືອງຍອດອູ, ແຂວງຜົ້ງສາລີ | ຊາປ່າ | $370 |

ແຫຼ່ງຂໍ້ມູນຈາກ: Earth Systems ໃນປີ 2016

ລາຄາທີ່ສູງກວ່າຂອງຊາທີ່ຜ່ານການປຸງແຕ່ງແລ້ວ ແມ່ນສະທ້ອນໃຫ້ເຫັນມູນຄ່າເພີ່ມຈາກຂະບວນການປຸງຊາ ທີໃຊ້ໃບຊາສົດປະມານ 5-6 ກິໂລກວ່າຈະໄດ້ຊາແຫ້ງ 1 ກິໂລ. ຊາດັ້ງເດີມທີ່ມີລາຄາຄ່ອນຂ້າງສູງແມ່ນໄດ້ມາຈາກເມືອງຍອດອູ ເຊິ່ງລາຄາແມ່ນອີງຕາມສະຖານະພາບ ຂອງຕະຫຼາດໃນຈີນ. ກ່ອນທີ່ຈະໄປເຖິງຜູ້ບໍລິໂພກ ຊາທີ່ມີການແປຮູບນີ້ ອາດຜ່ານຂະບວນການປຸງແຕ່ງເພີ້ມ ເພື່ອເພີ້ມມູນຄ່າຂຶ້ນອີກ. ມີຫຼັກຖານອ້າງອີງຈາກເມືອງປາກຊ່ອງວ່າຊາຂາວທີ່ຂາຍຢູ່ໃນຮ້ານກາເຟ ແລະອາຫານໃນກຸງເທບ ແມ່ນມີລາຄາເຖິງຈອກລະ 1,500 ບາດ.[18]

## 3.2 ແນວຄວາມຄິດລິເລີ່ມໃນການພັດທະນາ

ໃນທົດສະວັດທີ່ຜ່ານມາ ແນວຄວາມຄິດລິເລີ່ມໃນການພັດທະນາຊາ ແມ່ນໄດ້ຮັບການຈັດຕັ້ງປະຕິບັດ ເພື່ອສະໜັບສະໜູນຂະແໜງຊາລາວ ຢູ່ພາຍໃນປະເທດ ແລະ ຢູ່ລະດັບພາກພື້ນ. ບາງໂຄງການທີ່ຜ່ານມາ ແລະ ໂຄງການທີ່ກຳລັງຈັດຕັ້ງປະຕິບັດໃນປັດຈຸບັນ ແມ່ນໄດ້ສັງລວມໄວ້ຢູ່ໃນ **ຕາຕະລາງ** 3-3 ແລະ **ຕາຕະລາງ** 3-4 ຂ້າງລຸ່ມ. ບົດຮຽນທີ່ສຳຄັນຈາກແນວຄວາມຄິດລິເລີ່ມຕ່າງໆເລົ່ານີ້ ແມ່ນການປະສານສົມທົບຮ່ວມມືກັນຂອງຕ່າງໜ້າຜູ້ມີສ່ວນຮ່ວມຈາກພາກສ່ວນຕ່າງໆຂອງຂະແໜງນຳກັນໃນໜ້າວຽກການພັດທະນານະໂຍບາຍ ແລະວາງແຜນແມ່ນມີຄວາມສຳຄັນທີ່ສຸດ ເພື່ອການພັດທະນາຂອງຂະແໜງອຸດສາຫະກຳຊາ.

**ຕາຕະລາງ 3-3 ແນວຄວາມຄິດລິເລີ່ມການພັດທະນາຂອງຂະແໜງຊາລາວໃນໄລຍະຜ່ານມາ**

| ໂຄງການ | ຄູ່ຮ່ວມຈັດຕັ້ງປະຕິບັດ |
|---|---|
| ໂຄງການປູກຊາປ່າ (ປີ 2010-2011) | SDC ແລະ CARE |
| ແຜນງານພັດທະນາຊັບພະຍາກອນມະນຸດເພື່ອການພັດທະນາເສດຖະກິດຕະຫຼາດ (ປີ 2010-2014) | GIZ ແລະ LNCCI/PCCI, ECCIL, MoIC-DoSMEP, ແລະ PSL PAFO |
| ແຜນງານເພີ່ມຂີດຄວາມສາມາດ ແລະ ການມີສ່ວນຮ່ວມຂອງຊຸມຊົນ (COPE) – ພາຍໃຕ້ໂຄງການ Shan Tea. ໄລຍະທີ 1 ປີ 2011-2016 | SDC ແລະ Helvetas |

Source: Earth Systems 2016

**ຕາຕະລາງ 3-4 ແນວຄວາມຄິດລິເລີ່ມການພັດທະນາຂອງຂະແໜງຊາລາວໃນປະຈຸບັນ**

| ໂຄງການ | ຄູ່ຮ່ວມຈັດຕັ້ງປະຕິບັດ |
|---|---|
| ແຜນງານເພີ່ມຂີດຄວາມສາມາດ ແລະ ການມີສ່ວນຮ່ວມຂອງຊຸມຊົນ (COPE) – ພາຍໃຕ້ໂຄງການ Shan Tea. ໄລຍະທີ 2 ເລີ່ມໃນປີ 2016 | HELVETAS; SDC; ອົງການປົກຄອງລັດທ້ອງຖິ່ນ |
| ໂຄງການພັດທະນາລະບົບນິເວດຊີວະນາໆພັນກະສິກໍາຢູ່ເຂດພູດອຍ (TABI) | SDC; MAF; ອົງການປົກຄອງລັດທ້ອງຖິ່ນ |
| ໂຄງການ Shan Tea | SDC; HELVETAS |
| IDH ການຄ້າແບບຍືນຍົງ – ໂຄງການປູກຊາ (ກໍາລັງດໍາເນີນງານຢູ່ປະເທດຫວຽດນາມ) | IDH; Unilever; Rainforest Alliance |
| GIZ ການພັດທະນາຂີດຄວາມສາມາດຂອງພາກສ່ວນເອກະຊົນໃນປະເທດມຽນມາ | GIZ; ຄູ່ຮ່ວມພັດທະນາ; ອົງການປົກຄອງລັດທ້ອງຖິ່ນ |
| ໂຄງການ ການມີສ່ວນຮ່ວມຂອງຫົວໜ່ວຍທຸລະກິດໃນຂະແໜງກະສິກໍາ ເພື່ອການຄຸ້ມຄອງທີ່ດິນ ໃນກໍາປູເຈ້ຍ, ລາວ, ມຽນມ້າ ແລະ ຫວຽດນາມ ຂອງ ອົງການ Oxfam | Oxfam; SDC; GIZ |
| ໂຄງການສົ່ງເສີມການພັດທະນາຊົນນະບົດໂດຍການການບົ່ງບອກທາງພູມີສາດ (GI), ຂອງອົງການອາຫານໂລກ(FAO)/ອົງການເພື່ອການພັດທະນາແຫ່ງປະເທດຝຣັ່ງ(AFD) | FAO; AFD; ອົງການປົກຄອງລັດທ້ອງຖິ່ນ |
| ໂຄງການ ຊາ 2030 | Unilever, IDH, Tata, Twinings, Fairtrade, Rainforest Alliance, ການມີສ່ວນຮ່ວມດ້ານການປູກຊາແບບຊົນເຜົ່າ, ແລະ ອື່ນໆ. |
| ໂຄງການ ການມີສ່ວນຮ່ວມດ້ານການປູກຊາແບບຊົນເຜົ່າ | GIZ, IDH, Oxfam, UTZ, Fairtrade, Rainforest Alliance, Unilever, Twinings ແລະ ອື່ນໆ. |

ແຫຼ່ງຂໍ້ມູນຈາກ: Earth Systems ໃນປີ 2016

# 4 ສິ່ງທ້າທາຍ ແລະ ກາລະໂອກາດ ຕໍ່ການພັດທະນາແບບຍືນຍົງຂອງຂະແໜງຊາ ລາວ

ດັ່ງທີ່ໄດ້ກ່າວໄວ້ຢູ່ພາກສະເໜີໃນບົດສຶກສາສະບັບນີ້, ຂະແໜງຊາ ຢູ່ໃນ ລາວ ແມ່ນມີທ່າແຮງທີ່ຈະເຕີບໂຕ ແລະ ປະກອບສ່ວນສຳຄັນ ເຂົ້າໃນວຽກງານຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາຊົນນະບົດຢູ່ໃນເຂດພາກເໜືອ ແລະ ພາກໄຕ້ຂອງປະເທດ. ໃນພາກນີ້ແມ່ນນຳສະເໜີກ່ຽວກັບສິ່ງທ້າທາຍ ແລະ ກາລະໂອກາດຕ່າງໆ ທີ່ກຳນົດຂຶ້ນຈາກຂະແໜງຊາລາວ ເພື່ອໃຫ້ບັນລຸຕາມຈຸດປະສົງດັ່ງກ່າວນີ້ ກອບການພັດທະນາແບບຍືນຍົງຂອງຂະແໜງຊາພາຍໃຕ້ໂຄງການ ຊາ 2030 ແມ່ນໄດ້ມີການນຳສະເໜີຂ້າງລຸ່ມນີ້ (ເບິ່ງ Table 4-1).

**Table 4-1 ຫຼັກການຂອງນະແໜງຊາ 2030 ແລະ ສິ່ງທ້າຍທາຍຕ່າງໆຂອງຂະແໜງຊາລາວ ກຳລັງປະເຊີນ**

| ຫຼັກການ | ສິ່ງທ້າຍທາຍຕ່າງໆ ທີ່ຂະແໜງຊາ ລາວ ກຳລັງພົບພໍ້ |
|---|---|
| ເພື່ອເຮັດໃຫ້ຊີວິດການເປັນຢູ່ມີຄວາມຍືນຍົງ ແລະ ຜູ້ຜະລິດຊາມີຄວາມເຂັ້ມແຂງ | ປັບປຸງຄວາມໝັ້ນຄົງດ້ານການຄອບຄອງທີ່ດິນໃຫ້ແກ່ຊາວສວນຂະໜາດນ້ອຍ ແລະ ຊຸມຊົນ ຜູ້ຜະລິດຊາ.<br>ຮັບປະກັນໃຫ້ມີການດຳລົງຊີວິດທີ່ຍືນຍົງ ທີ່ໄດ້ມາຈາກຊາ (ເງື່ອນໄຂທາງດ້ານແຮງງານ; ຄ່າຈ້າງ; ການສ້າງລາຍຮັບ; ຄຸນລັກສະນະທາງດ້ານບົດບາດຍິງ-ຊາຍ).<br>ການສ້າງຄວາມເຂັ້ມແຂງແກ່ຜູ້ຜະລິດຊາ ເພື່ອຮັບຮູ້ເຖິງຜົນປະໂຫຍດ ແລະ ຄຸນຄ່າຈາກຊາ. |
| 'ການຜະລິດທີ່ມີຄວາມຍືນຍົງ /ສາມາດຟື້ນຟູໄດ້ທີ່ເປັນມິດຕໍ່ລະບົບນິເວດ | ປົກປັກຮັກສາ ແລະ ຄຸ້ມຄອງຕົ້ນຊາປ່າ ແລະ ຊາບູຮານ ທີ່ມີຢູ່ໃນປະຈຸບັນ.<br>ກ້າວຂຶ້ນສູ່ຄວາມສາມາດໃນການຜະລິດໃຫ້ສູງກວ່າເກົ່າ ໂດຍປັດສະຈາກຜົນກະທົບຕໍ່ການບໍລິການຂອງລະບົບນິເວດ ແລະ ຄຸນນະພາບຂອງພື້ນທີ່. |
| ເພື່ອເຮັດໃຫ້ການສ້າງ/ປ່ອຍທາດກາກບອນໃນລະດັບຕ່ຳ ແລະ ມີຄວາມສາມາດຕ້ານທານ | ສາມາດປັບຕົວເຂົ້າກັບແນວໂນ້ມການປ່ຽນແປງ ແລະ ຄວາມແຕກຕ່າງຂອງສະພາບອາກາດ.<br>ຮັກສາການປ່ອຍທາດກາກບອນໃຫ້ຢູ່ໃນລະດັບຕ່ຳ ໄປພ້ອມກັບການເພີ່ມຂື້ນຂອງບໍລິມາດການຜະລິດ ແລະ ການປຸງແຕ່ງຊາ. |
| ເພື່ອເຮັດໃຫ້ມີຄວາມໂປ່ງໃສໃນຂະບວນການເພີ່ມມູນຄ່າສິນຄ້າ ແລະ ມີກົນໄກການຕະຫຼາດທີ່ຍືນຍົງ | ສ້າງກົນໄກການຕະຫຼາດທີ່ເປັນທຳ ແລະ ຮັດກຸມຂຶ້ນກວ່າເກົ່າ ແລະ ຄວາມເຂົ້າໃຈກ່ຽວກັບຄຸນຄ່າ ແລະ ຄວາມຍືນຍົງໃນທຸກໆຂະບວນການເພີ່ມມູນຄ່າສິນຄ້າ. |
| ເພື່ອເຮັດໃຫ້ຜູ້ບໍລິໂພກມີສ່ວນຮ່ວມ ແລະ ເຊື່ອມຕໍ່ກັນໄດ້. | ເຮັດການຕະຫຼາດເພື່ອເພີ່ມມູນຄ່າຂອງຊາລາວ (ຄຸນຄ່າຂອງຊາບູຮານ; ການສ້າງຄວາມຫຼາກຫຼາຍຂອງຕະຫຼາດ ລວມທັງຕະຫຼາດສິນຄ້າປອດສານພິດທີ່ມີຄຸນນະພາບສູງ ແລະ ການຄ້າທີ່ເປັນທຳ). |

ແຫຼ່ງຂໍ້ມູນ: Tea 2030 (2014) ແລະ ບໍລິສັດ ເອີດ ຊີສສະເຕີມ (2016)

## 4.1 ເພື່ອເຮັດໃຫ້ຊີວິດການເປັນຢູ່ມີຄວາມຍືນຍົງ ແລະ ຜູ້ຜະລິດຊາມີສິດອຳນາດ

### 4.1.1 ປັບປຸງຄວາມໝັ້ນຄົງດ້ານການຄຸ້ມຄອງທີ່ດິນ ໃຫ້ແກ່ຊາວສວນຂະໜາດນ້ອຍ ແລະ ຊຸມຊົນຜູ້ຜະລິດ

ເນື່ອງຈາກມີການແຂ່ງຂັນກັນທາງດ້ານທີ່ດິນ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນປະເທດລາວ ທີ່ເຮັດໃຫ້ມີຄວາມກົດດັນຫຼາຍຂື້ນໃນການປັບປຸງການຄອບຄອງທີ່ດິນຕໍ່ກັບພື້ນທີ່ສວນຊາແບບທັນສະໄໝ, ສວນຊາບູຮານ ແລະ ຊາປ່າ (ທີ່ມີຢູ່ໃນປະຈຸບັນ ແລະ ໃນອະນາຄົດ) ຈະມີຄວາມສຳຄັນຫຼາຍ ໃນການຄ້ຳປະກັນຊີວິດການເປັນຢູ່ຂອງຜູ້ຜະລິດໃນໄລຍະຍາວ ແລະ ການສົ່ງເສີມການປົກປັກຮັກສາ ແລະ ການຄຸ້ມຄອງຊັບພະຍາກອນຊາເພື່ອການພັດທະນາຂອງຂະແໜງ. ດັ່ງນັ້ນ ມັນຈຶ່ງມີຄວາມຈຳເປັນສຳລັບຊາວສວນຂະໜາດນ້ອຍ, ຊຸມຊົນ ແລະ ຜູ້ປຸງແຕ່ງຊາ / ຊາວຄ້າຂາຍຊາ ໃນການເຮັດວຽກຮ່ວມກັນ ເພື່ອພັດທະນາຮູບແບບທີ່ປະສົບຜົນສຳເລັດໃນການດຳລົງຊີວິດທີ່ອີງໃສ່ຊາເປັນຕົ້ນຕໍ.

**ສະພາບໃນປະຈຸບັນ:**

- ແຫຼ່ງຊັບພະຍາກອນຊາປ່າສ່ວນໃຫຍ່ ແມ່ນມີຢູ່ໃນພື້ນທີ່ຂອງບ້ານ ເຊິ່ງຖືກກຳນົດເປັນພື້ນທີ່ປ່າໄມ້ໃຊ້ຮ່ວມກັນຂອງຊຸມຊົນບ້ານ. ພື້ນທີ່ປ່າໄມ້ຊຸມຊົນເຫຼົ່ານີ້ ແມ່ນຍັງບໍ່ທັນມີລະດັບຄວາມແນ່ນອນຂອງຄວາມໝັ້ນຄົງທາງດ້ານທີ່ດິນ ທຽບກັບພື້ນທີ່ທີ່ຖືກຄອບຄອງໂດຍບຸກຄົນ ແລະ ມີຄວາມສ່ຽງຕໍ່ການຈັດສັນການນຳໃຊ້ທີ່ດິນເພື່ອການພັດທະນາ. ດັ່ງນັ້ນ, ຊັບພະຍາກອນຊາທີ່ມີຢູ່ໃນປະຈຸບັນ ແລະ ໃນອະນາຄົດ, ຊຶ່ງສ່ວນໃຫຍ່ແມ່ນຍັງບໍ່ທັນຖືກກຳນົດເປັນລະບົບຕາຍຕົວເທື່ອ, ແມ່ນຕົກຢູ່ພາຍໃຕ້ຄວາມສ່ຽງທີ່ຈະຖືກຫັນເປັນກິດຈະກຳການພັດທະນາຂະໜາດໃຫຍ່ຕ່າງໆ.
- ຊາວສວນຂະໜາດນ້ອຍທີມີພື້ນທີ່ຜະລິດເກັບຊາແບບໃໝ່ ແມ່ນຢູ່ໃນສະຖານະພາບທີ່ມີຄວາມໝັ້ນຄົງທາງດ້ານການນຳໃຊ້ທີ່ດິນໃນລະດັບທີ່ດີກວ່າ, ແຕ່ວ່າພວກເຂົາຕ້ອງອີງໃສ່ການມີເອກະສານພິສູດຕໍ່ສິດໃນການຄອບຄອງທີ່ດິນ. ໃນຫຼາຍໆກໍລະນີ, ຖ້າຫາກວ່າພື້ນທີ່ດັ່ງກ່າວນີ້ ຖືກປ່ອຍປະບໍ່ໄດ້ຮັບການບົວລະບັດຮັກສາ (ເນື່ອງຈາກຫຼາຍພື້ນທີ່ ໃນຊ່ວງຫຼາຍກວ່າ 10 ປີຜ່ານມາຜົນຜະລິດແມ່ນຕໍ່າ / ໃຫ້ລາຍໄດ້ຕໍ່າ), ການປະສົມປະສານກັນລະຫວ່າງການປ່ອຍປະລະເລີຍ ແລະ ບໍ່ສາມາດເສຍພາສີທີ່ດິນໄດ້ ສາມາດເຮັດໃຫ້ພື້ນທີ່ດັ່ງກ່າວເລົ່ານີ້ ມີຄວາມໝັ້ນຄົງໜ້ອຍລົງ. ເມື່ອເປັນເຊັ່ນນັ້ນ, ການລົງທຶນເບື້ອງຕົ້ນໃນການປູກຊາ ທີ່ເຮັດໂດຍຊາວສວນຂະໜາດນ້ອຍ ໃນເຂດຊຸມຊົນ ແມ່ນຕົກຢູ່ໃນພາວະຄວາມສ່ຽງ, ເວັ້ນແຕ່ວ່າຫາກມີການລົງທຶນເພີ່ມຕື່ມ ເພື່ອຟື້ນຟູຊັບພະຍາກອນເຫຼົ່ານີ້.

### 4.1.2 ຮັບປະກັນໃຫ້ມີການດຳລົງຊີວິດທີ່ຍືນຍົງ ທີ່ໄດ້ມາຈາກການຜະລິດຊາ

ບັນຫາຕົ້ນຕໍຂອງການພັດທະນາໃນຂະແໜງຊາ ລາວ ທີ່ຍືນຍົງແມ່ນການເຮັດໃຫ້ມັນເປັນທາງເລືອກທີ່ສາມາດຢູ່ລອດໄດ້ຮັບໝາກຜົນ ແລະ ເປັນທີ່ໜ້າດຶງດູດສົນໃຈຕໍ່ການດຳລົງຊີວິດທ ສຳລັບຜູ້ທີ່ມີສ່ວນຮ່ວມໃນການຜະລິດຊາບໍ່ວ່າຈະເປັນການປູກສວນຊາແບບທັນສະໄໝ, ການເກັບຊາປ່າ ແລະ ການເຮັດວຽກໃນໂຮງງານປຸງແຕ່ງຊາ.

**ສະພາບໃນປະຈຸບັນ:**

- *ສວນຊາປູກແບບໃໝ່/ທັນສະໄໝເພື່ອການຄ້າ:* ຕະຫຼອດໄລຍະ 15 ປີ ທີ່ຜ່ານມາ ຊາວສວນຊາຂະໜາດນ້ອຍອາໄສຢູ່ພາກເໜືອຂອງ ສ ປປ ລາວ ແມ່ນໄດ້ຮັບການສົ່ງເສີມ ຈາກລັດຖະບານ ແລະໂຮງງານປຸງແຕ່ງຊາຈາກພາກເອກະຊົນ ທຳການຜະລິດປູກສວນຊາແບບທັນສະໃໝ່ ເປັນທາງເລືອກພືດການຄ້າທີ່ສາມາດໃຫ້ຜົນຕອບແທນຄົວເຮືອນຢູ່ລອດໄດ້ ແລະເປັນທາງເລືອກແທນການປູກຝິ່ນ ແລະການເຮັດໄຮ່ເລື່ອນລອຍ. ເນື່ອງຈາກມີຫຼາຍປັດໃຈ (ເຊັ່ນ ເງື່ອນໄຂໃນການບຳລຸງຮັກສາສວນ; ແລະ ລາຄາຊາຢູ່ສວນປູກ) ລາຍຮັບຕໍ່ຜູ້ລົງທຶນໃນການປູກຊາຫຼາຍຄົນ ແມ່ນບໍ່ໄດ້ຕາມຄາດໝາຍ. ໃນບາງກໍລະນີ, ສວນຊາ ໄດ້ຖືກປ່ອຍປະລະເລີຍ ເຊິ່ງອາດເຮັດໃຫ້ເກີດມີຜົນກະທົບຕໍ່ການຄອບຄອງທີ່ດິນສຳລັບຊາວສວນ (ເບິ່ງໃນຫົວຂໍ້ 4.1.1). ສຳລັບຊາວສວນຊາທີ່ຍັງດຳເນີນທຳການຜະລິດຊາຢູ່ນັ້ນ, ການໄດ້ຮັບລາຄາຊາຢູ່ສວນປູກສູງເທົ່າທີ່ເປັນໄປໄດ້ (ເຊັ່ນ: ຂາຍໃຫ້ພໍ່ຄ້າບຸກຄົນ) ແມ່ນເປັນບູລິມະສິດ ຫຼາຍກວ່າການຄໍ້າປະກັນຮັກສາຂໍ້ຕົກລົງການຄ້າແບບປົກກະຕິກັບ ຜູ້ປຸງແຕ່ງຊາທ້ອງຖິ່ນ. ບັນຫານີ້ໄດ້ຮັບການແກ້ໄຂແລ້ວຢູ່ໃນບາງເຂດຂອງຊຸມຊົນ ໂດຍການສ້າງກຸ່ມຜູ້ຜະລິດຊາທີ່ສະໜັບສະໜູນຈາກຫົວໜ່ວຍທຸລະກິດ / ສັງຄົມ (ເບິ່ງຫົວຂໍ້ 4.1.3).
- *ການເກັບຊາປ່າ:* ການເກັບຊາປ່າ*ທຳມະຊາດ* ສາມາດເປັນທາງເລືອກທີ່ໜ້າດຶງດູດໃຈຢ່າງໜຶ່ງຂອງການດຳລົງຊີວິດ ເພາະວ່າລາຍຮັບແມ່ນສູງ ເມື່ອສົມທຽບກັບຊາປູກ; ແລະ ມີຫຼາຍທ້ອງຖິ່ນໄດ້ສ້າງຕັ້ງອົງກອນຂັ້ນຊຸມຊົນຂຶ້ນເພື່ອຄຸ້ມຄອງ ແລະເກັບຊາປ່າດັ່ງກ່າວນີ້. ແຕ່ເຖິງຢ່າງໃດກໍ່ຕາມ, ການເກັບຊາປ່າແມ່ນຍັງມີສິ່ງທ້າຍທາຍຫຼາຍຢ່າງລວມທັງ ໄລຍະເວລາ ແລະ ຊັບພະຍາກອນທີ່ຕ້ອງການເພື່ອໄປເກັບໃບຊາ; ລະດູການຂອງການເກັບ; ປະລິມານຂອງຊາທີ່ມີແມ່ນຍັງຕໍ່າ; ແລະ ການແຂ່ງຂັນລະຫວ່າງແນວທາງການດຳລົງຊີວິດ / ຄວາມຮັບຜິດຊອບທີ່ມີ - ໂດຍສະເພາະແມ່ນສຳຫຼັບແມ່ຍິງໃນໄລຍະເກັບຊາ. ຄຸນນະພາບ ແລະ ຄຸນຄ່າທີ່ເປັນໄປໄດ້ຂອງຊາແຕ່ລະຊະນິດ ແມ່ນຍັງບໍ່ທັນເປັນທີ່ຮັບຮູ້ເຂົ້າໃຈດີເທື່ອໂດຍຜູ້ເກັບໃບຊາ ແລະ ຜູ້ປຸງແຕ່ງຊາໃນທ້ອງຖິ່ນ - ເຊິ່ງຈຳກັດຄວາມສາມາດຕໍ່ລ່ອງຂອງພວກເຂົາເຈົ້າໃນການຄໍ້າປະກັນລາຄາທີ່ເໝາະສົມຈາກພໍ່ຄ້າ.
- *ການສ້າງວຽກເຮັດງານທຳໃນຂະບວນການປຸງແຕ່ງຊາ:* ການເຮັດວຽກທີ່ມີຄ່າຈ້າງຕອບແທນໃນໂຮງງານປຸງແຕ່ງຊາ, ບໍ່ວ່າຈະເປັນການຈ້າງງານແບບຖາວອນ ແລະ ຊົ່ວຄາວຕາມລະດູການແມ່ນຖືວ່າເປັນວຽກທີ່ໜ້າດຶງດູດໃຫ້ຜົນຕອບແທນໂດຍພະນັກງານເພດຊາຍ ແລະ ຍິງ ໃນກໍລະນີທາງເລືອກວຽກອື່ນແມ່ນມີໜ້ອຍ/ຈຳກັດ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນບ່ອນທີ່ມີໂອກາດອື່ນໆທີ່ດີກວ່າ, ການເຮັດວຽກໃນໂຮງງານປຸງແຕ່ງຊາ ແມ່ນບໍ່ໄດ້ຮັບຄວາມນິຍົມພໍປານໃດ.



### 4.1.3 ການສ້າງຄວາມເຂັ້ມແຂງແກ່ຜູ້ຜະລິດຊາໄດ້ຮັບຮູ້ເຖິງຜົນປະໂຫຍດ ແລະ ຄຸນຄ່າຈາກຊາ

ຊີວິດການເປັນຢູ່ຂອງຜູ້ຜະລິດຊາຂະໜາດນ້ອຍ ສາມາດໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ ໂດຍໄດ້ຮັບການສະໜັບສະໜູນກິດຈະກໍາການສ້າງມູນຄ່າເພີ່ມໃນຂະແໜງຊາ. ສິ່ງດັ່ງກ່າວນີ້ ຕ້ອງໄດ້ມີການພັດທະນາຄວາມສໍາພັນທີ່ແໜ້ນແຟ້ນ ແລະ ເປັນປະໂຫຍດຮ່ວມກັນທັງສອງຝ່າຍໃຫ້ຫຼາຍຂຶ້ນກວ່າເກົ່າ ລະຫວ່າງຜູ້ຜະລິດ ແລະ ຜູ້ປຸງແຕ່ງຊາ.

**ສະພາບໃນປະຈຸບັນ:**

- ປັດຈຸບັນ ໄດ້ມີຫຼາຍກຸ່ມຜະລິດຊາທີ່ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການ (ເຊັ່ນ:ພາຍໃຕ້ການສະໜັບສະໜູນຈາກໂຄງການ HELVETAS-COPE) ທີ່ເຮັດວຽກໃນຂະແໜງດັ່ງກ່າວນີ້ ແລະ ກໍາລັງດໍາເນີນກິດຈະກໍາການສ້າງມູນຄ່າເພີ່ມໃຫ້ຜະລິດຕະພັນ ລວມທັງແຜນງານຊ່ວຍເຫຼືອທາງດ້ານເຕັກນິກ, ການເຂົ້າເຖິງການຕະຫຼາດ ແລະ ກິດຈະກໍາພັດທະນາຊຸມຊົນ ໂດຍມີຜົນປະໂຫຍດ ທີ່ຖືກນໍາມາລົງທຶນຄືນໃນຊຸມຊົນ. ແຕ່ເຖິງຢ່າງໃດກໍ່ຕາມ, ສ່ວນໃຫຍ່ຂອງຜູ້ຜະລິດ ແມ່ນເຮັດໃຜເຮັດມັນແບບເອກະລາດ ແລະ ມີໂອກາດໜ້ອຍສໍາລັບການສ້າງຄວາມເຂັ້ມແຂງເພີ່ມຂີດຄວາມສາມາດ.

- ຜູ້ປຸງແຕ່ງຊາທ້ອງຖິ່ນ ແມ່ນມີການພົວພັນກັບຊຸມຊົນທີ່ຜະລິດຊາໃນລະດັບທີ່ແຕກຕ່າງກັນ. ບາງຄົນກໍ່ສາມາດຮັກສາການພົວພັນກັບຊຸມຊົນທ້ອງຖິ່ນໄດ້ຢ່າງເຂັ້ມແຂງ ຕະຫຼອດປີ ເຊິ່ງເຮັດໃຫ້ຄວາມສໍາພັນກາຍມາເປັນການສ້າງຜົນປະໂຫຍດຮ່ວມກັນທັງສອງຝ່າຍ ແລະ ເປັນການເພີ່ມມູນຄ່າໃຫ້ແກ່ທຸກໆພາກສ່ວນ. ແຕ່ວ່າ ບາງຄົນກໍ່ປະກົດຕົວຢ່າງເຂັ້ມແຂງໃນໄລຍະທີ່ມີການເກັບຊື້ຊາທີ່ມີຄວາມຕ້ອງການສູງເທົ່ານັ້ນ - ເຊິ່ງຈໍາກັດຄວາມສາມາດຂອງພວກເຂົາໃນການຕິດຕໍ່ພົວພັນກັບຊຸມຊົນທ້ອງຖິ່ນ.

- ນະໂຍບາຍສໍາຄັນອັນໜຶ່ງຂອງລັດຖະບານ ເຊິ່ງກໍາລັງສົ່ງຜົນກະທົບຕໍ່ຄວາມສໍາພັນຂອງຜູ້ຜະລິດ / ຜູ້ປຸງແຕ່ງ ແມ່ນການກໍານົດເຂດຊາໃນພື້ນທີ່ຜະລິດຊາໃນເຂດພາກເໜືອ. ພາຍໃຕ້ນະໂຍບາຍດັ່ງກ່າວນີ້, ຜູ້ປຸງແຕ່ງ ແມ່ນຖືກກໍານົດໃຫ້ໄດ້ຮັບສິດໃນການເກັບຊື້ຊາຈາກພື້ນທີ່ປູກຊາທີ່ໄດ້ກໍານົດໃຫ້ສະເພາະ. ໃນຂະນະທີ່ຄາດໝາຍຈາກນະໂຍບາຍດັ່ງກ່າວນີ້ ແມ່ນເພື່ອເສີມຂະຫຍາຍຄວາມສໍາພັນລະຫວ່າງຜູ້ຜະລິດ / ຜູ້ປຸງແຕ່ງຊາ, ແຕ່ໃນພາກປະຕິບັດຕົວຈິງ, ການຈັດສັນເຂດ ແມ່ນບໍ່ມີປະສິດຕິພາບເທົ່າທີ່ຄວນ ເພາະວ່າໄດ້ມີພໍ່ຄ້າທີ່ບໍ່ຈົດທະບຽນເຂົ້າມາຊອກຊື້ຊາໃນລະດູແລ້ງ ແລະ ໃຫ້ລາຄາສູງກວ່າຜູ້ປຸງແຕ່ງຊາທີ່ໄດ້ກໍານົດໄວ້ສໍາລັບຊາປູກ. ໃນຂະນະທີ່, ຊາວສວນຂະໜາດນ້ອຍອາດໄດ້ຮັບຜົນປະໂຫຍຈາກລາຄາສູງນີ້ ສໍາລັບຜົນຜະລິດຊາໃນລະດູແລ້ງ, ແຕ່ໂດຍປົກກະຕິແລ້ວ, ພໍ່ຄ້າແມ່ນບໍ່ສົນໃຈໃນການກັບຊື້ຊາໃນລະດູຝົນ. ປະກົດການນີ້ໄດ້ເຮັດໃຫ້ຜູ້ປຸງແຕ່ງຊາທ້ອງຖິ່ນທີ່ຄວນຈະຊື້ຊາຈາກເຂດທີ່ໄດ້ຖືກກໍານົດໃຫ້ ແມ່ນບໍ່ມີຄວາມກະຕືລືລົ້ນໃນການເກັບຊື້ຊາໃນລະດູຝົນ ທີ່ມີມູນຄ່າຕໍ່າ ຖ້າຫາກວ່າພວກເຂົາບໍ່ສາມາດໄດ້ຊາຊາໃນປະລິມານທີ່ພຽງພໍໃນລະດູແລ້ງຈາກຊາວສວນ.

- ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕ່ຳເປັນປັດໃຈໜຶ່ງທີ່ສຳຄັນ ສຳລັບການພັດທະນາຂະແໜງຊາ ໃຫ້ທັງຜູ້ຜະລິດ ແລະ ຜູ້ປຸງແຕ່ງ. ການເຂົ້າເຖິງແຫຼ່ງທຶນ ສາມາດຊ່ວຍເຮັດໃຫ້ມີການລົງທຶນ ໂດຍການສະໜອງທຶນຮອນ ສຳລັບຊື້ອຸປະກອນ, ເງິນທຶນ, ປັດໃຈການຜະລິດກະສິກຳ ແລະ ການຄົ້ນຄວ້າ ແລະ ການພັດທະນາ. ໂດຍອີງຕາມ*ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2016-2020* (NSEDP), ທະນາຄານແຫ່ງ ສປປ ລາວ ໄດ້ປະຕິບັດນະໂຍບາຍ ແລະ ຂໍ້ກຳນົດຕ່າງໆ ເພື່ອເຮັດໃຫ້ບັນດາທະນາຄານທຸລະກິດຕ່າງໆ ສາມາດອະນຸມັດເງິນກູ້ຢືມທີ່ມີດອກເບ້ຍຕ່ຳ. ນອກຈາກນີ້ການເງິນສຳລັບຂະແໜງຊາ ແມ່ນສາມາດໄດ້ຈາກແຫຼ່ງທຶນອື່ນໆ ລວມທັງອົງການຈັດຕັ້ງສາກົນເປັນຕົ້ນແມ່ນ: ອົງການການຄ້າເປັນທຳແລະ ອົງການການຮ່ວມມືໃນຂະແໜງຊາຢ່າງມີຈັນຍາບັນ (Ethical Tea Partnership) ເຊິ່ງເປັນຜູ້ໃຫ້ການຊ່ວຍເຫຼືອໃນການເຂົ້າເຖິງການເງິນ ເຊິ່ງເປັນສ່ວນໜຶ່ງຂອງແຜນງານຂອງພວກເຂົາເຈົ້າ.

## 4.2 ການຜະລິດທີ່ມີຄວາມຍືນຍົງ / ສາມາດຟື້ນຟູໄດ້ຕໍ່ລະບົບນິເວດ

### 4.2.1 ການປົກປັກຮັກສາ ແລະ ການຄຸ້ມຄອງຊາປ່າ ແລະ ຊາບູຮານແບບຍືນຍົງ

ຊາບູຮານ ແລະ ຊາປ່າ ແມ່ນມີລາຄາສູງຫຼາຍໃນຕະຫຼາດປະເທດຈີນ. ຊາປ່າ ແມ່ນເຊື່ອກັນວ່າ ມີທ່າແຮງດ້ານການຕະຫຼາດທີ່ສຳຄັນ ເຖິງແມ່ນວ່າ ປະລິມານ, ອາຍຸ ແລະ ຄຸນນະພາບຂອງຊາດັ່ງກ່າວ ແມ່ນຍັງບໍ່ທັນເປັນທີ່ຮັບຮູ້ແນ່ນອນ. ມັນຍັງມີໂອກາດໃນການປົກປັກຮັກສາ ແລະ ຄຸ້ມຄອງຢ່າງຍືນຍົງ ຂອງຊາບູຮານ ແລະ ຊາປ່າເຫຼົ່ານີ້ ຄຽງຄູ່ກັບການເພີ່ມຄວາມໝັ້ນຄົງຂອງການຄອບຄອງທີ່ດິນ (ເບິ່ງພາກທີ 4.1.1).

**ສະພາບໃນປະຈຸບັນ:**

- ຊາປ່າແມ່ນເປັນສ່ວນໜຶ່ງຂອງລະບົບນິເວດປ່າໄມ້ ແລະ ບໍ່ສາມາດເກັບໃນແບບວິທີດຽວກັນກັບການເກັບກູ້ຊາປູກ. ເຄີຍເກີດມີກໍລະນີທີ່ນັກລົງທຶນໄດ້ຮັບສຳປະທານໃນການເກັບກູ້ຊາປ່າ ແລະຕົ້ນຊາໃຫຍ່ຈາກປ່າແມ່ນຖືກຕັດລົງ ເພື່ອເຮັດໃຫ້ສາມາດເກັບເອົາຍອດຊາ ແລະກິ່ງງ່າເພື່ອເຮັດເປັນພັນ. ບັນຫາດັ່ງກ່າວນີ້ ແມ່ນເກີດຂຶ້ນ ເນື່ອງຈາກຂາດລະບົບການຄຸ້ມຄອງທີ່ເໝາະສົມ ແລະເຮັດໃຫ້ຊັບພະຍາກອນຊາມີຄວາມສ່ຽງຕໍ່ການນຳໃຊ້ຫຼາຍເກີນໄປລວມທັງການສູນເສຍເນື່ອງຈາກການບຸກເບີກພື້ນທີ່ ຈາກຮູບແບບການພັດທະນາອື່ນໆ.
- ໃນຂະນະທີ່ມີຄວາມພະຍາຍາມເບື້ອງຕົ້ນໃນການກຳນົດທີ່ຕັ້ງ ແລະ ປະລິມານ ຂອງຊາປ່າທີ່ມີ, ແຕ່ກໍ່ຍັງມີຂໍ້ມູນທີ່ຈຳກັດກ່ຽວກັບຊາປ່າ. ການສຳຫຼວດປ່າໄມ້ຢ່າງລະອຽດ ອາດສາມາດຊ່ວຍກຳນົດສາຍພັນຊາໃໝ່ທີ່ມີຄຸນຄ່າ ແລະຊ່ວຍໃນການຄຸ້ມຄອງຊັບພະຍາກອນ ເຊິ່ງພ້ອມດຽວກັນສາມາດປົກປ້ອງພື້ນທີ່ສ່ວນຕ່າງໆຂອງລະບົບຊີວະນາໆພັນທີ່ມີຊາປະກົດຢູ່.

### 4.2.2 ກ້າວໄປສູ່ຄວາມສາມາດໃນການຜະລິດໃຫ້ໄດ້ສະມັດຕະພາບສູງກວ່າເກົ່າ ໂດຍປັດສະຈາກຜົນກະທົບ ຕໍ່ການບໍລິການຂອງລະບົບນິເວດ ແລະ ຄຸນນະພາບຂອງພື້ນທີ່.

ຍັງມີໂອກາດ ສຳລັບຂະແໜງຊາ ລາວ ໃນການທີ່ຈະພິຈາລະນາຜົນກະທົບຕໍ່ສິ່ງແວດລ້ອມຈາກການຜະລິດຊາໃຫ້ດີມີປະສິດທິຜົນກວ່າເກົ່າ, ຈຳກັດຜົນກະທົບເຫຼົ່ານີ້ ແລະ ຊອກຫາວິທີການປັບປຸງປັດໃຈຈາກທຳມະຊາດໃນການຜະລິດ ເຊິ່ງການຜະລິດຊາຕ້ອງໄດ້ອາໃສ/ຂຶ້ນກັບ.

**ສະພາບໃນປະຈຸບັນ:**

- ດັ່ງທີ່ໄດ້ນຳສະເໜີຢູ່ໃນຫົວຂໍ້ 4.2.1, ຊາປ່າແມ່ນເກີດຂຶ້ນຢູ່ໃນລະບົບນິເວດປ່າໄມ້ທຳມະຊາດ, ເຊິ່ງປ່າສ່ວນຫຼາຍເຫຼົ່ານີ້ ແມ່ນຍັງບໍ່ທັນໄດ້ຮັບການຄຸ້ມຄອງດີເທົ່າທີ່ຄວນ. ຍັງມີໂອກາດທີ່ຈະທຳຄວາມເຂົ້າໃຈ ແລະ ຄຸ້ມຄອງຊັບພະຍາກອນເຫຼົ່ານີ້ໃຫ້ໄດ້ດີກວ່າເກົ່າ ເພື່ອໃຫ້ມີຄວາມສາມາດໃນການຜະລິດທີ່ຫຼາຍກວ່າເກົ່າ ໄປພ້ອມກັບການປົກປັກຮັກສາປ່າໄມ້ ທີ່ຊາເກີດຂຶ້ນຢູ່.
- ສວນຊາປູກສ່ວນຫຼາຍ ແມ່ນຖືກສ້າງຕັ້ງຂຶ້ນໂດຍຂາດການພິຈາລະນາຜົນກະທົບທີ່ອາດເກີດຂຶ້ນຕໍ່ລະບົບນິເວດອ້ອມຂ້າງ ແລະ ການບໍລິການຂອງພວກມັນ. ຜົນກະທົບທີ່ອາດເປັນໄປໄດ້ຈາກການຫັນປ່ຽນການນຳໃຊ້ທີ່ດິນ ເຊິ່ງລວມທັງການສູນເສຍຖິ່ນທີ່ຢູ່ອາໃສຂອງພືດ ແລະ ສັດ, ມົນລະພິດຂອງແຫຼ່ງນ້ຳ; ແລະ ຜົນກະທົບຕ່າງໆ ຕໍ່ຊີວະນາໆພັນທາງບົກ ແລະ ທາງນ້ຳ.
- ຄວາມຮູ້ທາງດ້ານເຕັກນິກກ່ຽວກັບວິທີການຕັດຕອນກິ່ງງ່າ ແມ່ນຍັງມີຈຳກັດ ແລະ ປົກກະຕິແລ້ວ ຊາວສວນຊາຂະໜາດນ້ອຍ / ຜູ້ເກັບຊາ ມັກຈະນຳໃຊ້ເຄື່ອງມືທີ່ບໍ່ເໝາະສົມ. ດັ່ງນັ້ນ, ຕົ້ນໄມ້ຕ່າງໆ ທີ່ຢູ່ໃນພື້ນທີ່ສວນຊາປູກ ແລະ ພື້ນທີ່ຊາປ່າ ບໍ່ມັກຈະໃຫ້ຜົນຜະລິດຫຼາຍ ແລະ ຍັງມີຄວາມສ່ຽງຕໍ່ພະຍາດ ຈາກໄມ້ທີ່ໄດ້ຮັບຄວາມເສຍຫາຍຕັດບໍ່ຖືກຕ້ອງ.

- ວິທີການຜະລິດຊາໃນສວນຊາປູກໃນປະຈຸບັນສ່ວນຫຼວງຫຼາຍແມ່ນ 'ປອດສານພິດໃນຕົວ'. ການຂາດແຄນປັດໃຈການຜະລິດກະສິກຳ ເຮັດໃຫ້ມີຜົນກະທົບທີ່ອາດເປັນໄປໄດ້ຕ່ຳຕໍ່ລະບົບນິເວດໃກ້ຄຽງ ແຕ່ກໍ່ມີຜົນກະທົບຕໍ່ການຜະລິດ ແລະ ຄຸນນະພາບຂອງຊາ. ປະຈຸບັນ, ປັດໃຈການຜະລິດກະສິກຳແມ່ນມີຫຼາຍຂຶ້ນ, ແລະ ປົກກະຕິແລ້ວ ການນຳໃຊ້ປັດໃຈດັ່ງກ່າວ ແມ່ນບໍ່ຖືກຕ້ອງ, ເຊິ່ງເຮັດໃຫ້ມີຄວາມສ່ຽງເພີ່ມຂຶ້ນ ຈາກມົນລະພິດຕໍ່ດິນ ແລະ ແຫຼ່ງນ້ຳ.

## 4.3 ເພື່ອເຮັດໃຫ້ການສ້າງທາດກາກບອນໃນລະດັບຕ່ຳ ແລະ ມີຄວາມສາມາດຕ້ານທານ

### 4.3.1 ສາມາດປັບຕົວເຂົ້າກັບແນວໂນ້ມການປ່ຽນແປງ ແລະຄວາມແຕກຕ່າງຂອງສະພາບອາກາດ ແລະຮັກສາການປ່ອຍທາດກາກບອນຢູ່ໃນລະດັບຕ່ຳ ໄປພ້ອມກັບການເພີ່ມຂຶ້ນຂອງບໍລິມາດການຜະລິດ ແລະ ການປຸງແຕ່ງຊາ

ພາກສ່ວນກ່ຽວຂ້ອງກັບຂະແໜງຊາໄດ້ຮັບຮູ້ເປັນຢ່າງດີກ່ຽວກັບຄວາມສ່ຽງຕ່າງໆ ທີ່ເກີດຈາກການປ່ຽນແປງສະພາບດິນຟ້າອາກາດ - ໂດຍສະເພາະພືນລະປູກທີ່ມີຄວາມອ່ອນໄຫວຕໍ່ສະພາບອາກາດ. ໂດຍສຸມໃສ່ການຂະຫຍາຍຕົວຂອງຂະແໜງຊາ, ມັນມີຄວາມຈຳເປັນ ທີ່ຈະຕ້ອງໄດ້ພິຈາລະນາຜົນກະທົບທີ່ອາດເກີດຂຶ້ນ ຕໍ່ພື້ນທີ່ຜະລິດຊາທີ່ມີຢູ່ໃນປະຈຸບັນ ແລະ ອະນາຄົດ ລວມທັງສະພາບອາກາດ; ໄພຂົ່ມຂູ່ທີ່ເພີ່ມຂຶ້ນຈາກສັດຕູພືດ ແລະ ພະຍາດ ແລະ ສະພາບເຫດການອາກາດທີ່ຮຸນແຮງເພີ່ມຖີ່ຂຶ້ນ.

**ສະພາບໃນປະຈຸບັນ:**

- ເຖິງແມ່ນວ່າໄດ້ມີການສຶກສາຫຼາຍໆຢ່າງກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດໃນຂະແໜງກະສິກຳ (ລວມທັງຂະແໜງຊາ) ຢູ່ໃນ ສປປ ລາວ, ແຕ່ວ່າ ປະຈຸບັນ ຍັງມີຄວາມເຂົ້າໃຈພຽງເລັກໜ້ອຍກ່ຽວກັບຜົນກະທົບທີ່ອາດເປັນໄປໄດ້ ຈາກການປ່ຽນແປງສະພາບດິນຟ້າອາກາດ ຂອງຜູ້ຜະລິດ ແລະ ຜູ້ປຸງແຕ່ງຊາ.

- ການຫຼຸດຜ່ອນການປ່ຽນແປງສະພາບດິນຟ້າອາກາດ ບໍ່ແມ່ນບັນຫາສຳຄັນສຳລັບຂະແໜງຊາໃນປະຈຸບັນ. ມົນລະພິດທີ່ອາດເກີດຂຶ້ນ ທີ່ຕິດພັນກັບການຫັນປ່ຽນປ່າໄມ້; ການນຳໃຊ້ເຕັກໂນໂລຊີປຸງແຕ່ງຂະໜາດຫຼາຍຂຶ້ນ ແລະ ການຂົນສົ່ງຜົນຜະລິດ ປົກກະຕິແລ້ວ ແມ່ນບໍ່ໄດ້ຮັບການພິຈາລະນາ.

## 4.4 ເພື່ອເຮັດໃຫ້ມີຄວາມໂປ່ງໃສໃນຂະບວນການເພີ່ມມູນຄ່າສິນຄ້າ ແລະ ມີກົນໄກການຕະຫຼາດ ທີ່ຍືນຍົງ

### 4.4.1 ສ້າງກົນໄກການຕະຫຼາດທີ່ເປັນທຳ ແລະ ຮັດກຸມຂຶ້ນກວ່າເກົ່າ ແລະ ຄວາມເຂົ້າໃຈກ່ຽວກັບຄຸນຄ່າ ແລະ ຄວາມຍືນຍົງໃນທຸກໆຂະບວນການເພີ່ມມູນຄ່າສິນຄ້າ

ຜົນສະທ້ອນທາງລົບ ຈາກກົນໄກການຕະຫຼາດໃນປະຈຸບັນ ໃນຂະແໜງຊາລາວກຳລັງປະເຊີນໜ້າໂດຍບັນດາຜູ້ຜະລິດ, ຜູ້ປຸງແຕ່ງ ແລະບັນດາພໍ່ຄ້າ. ບັນຫາດັ່ງກ່າວ ຖືກຍອມຮັບຈາກຫຼາຍພາກສ່ວນຂະແໜງຊາເຖິງຄວາມຕ້ອງການໃນການສ້າງກົນໄກ ທີ່ມີຄວາມໂປ່ງໃສ, ເປັນຂໍ້ມູນ ແລະ ທັນສະໃໝທາງດ້ານເຕັກນິກ ເຊິ່ງຈະເຮັດໃຫ້ເກີດມີຄວາມເປັນທຳຫຼາຍຂຶ້ນກວ່າເກົ່າ ຕະຫຼອດຂະບວນການສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນ.

**ສະພາບໃນປະຈຸບັນ:**

- ໃນໄລຍະບໍ່ດົນທີ່ຜ່ານມາ, ຄູ່ຮ່ວມພັດທະນາສາກົນ ໄດ້ຈັດຕັ້ງປະຕິບັດຫຼາຍໂຄງການ ເພື່ອສະໜັບສະໜູນຂະແໜງຊາ. ຊ່ຽວຊານສາກົນຫຼາຍທ່ານ ໄດ້ໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ກ່ຽວກັບວິທີການທີ່ດີທີ່ສຸດ ແລະ ກິດຈະກຳການສ້າງມູນຄ່າເພີ່ມ ກັບພາກສ່ວນກ່ຽວຂ້ອງກັບຂະແໜງຊາຢູ່ໃນລາວ (ລັດຖະບານ ແລະ ພາກອຸດສາຫະກຳ).

- ຊາວສວນຊາຂະໜາດນ້ອຍ 'ຜູ້ຮອງຮັບທາງລາຄາ', ໂດຍການຂາຍຊາໃຫ້ແກ່ໂຮງງານປຸງແຕ່ງທ້ອງຖິ່ນ ຫຼື ຂາຍໃຫ້ແກ່ພໍ່ຄ້າທີ່ບໍ່ໄດ້ລົງທະບຽນ, ປົກກະຕິແລ້ວ ແມ່ນຂາດຂໍ້ມູນການຕະຫຼາດທີ່ຖືກຕ້ອງກ່ຽວກັບຄວາມຕ້ອງການຂອງການຜະລິດ ແລະ ລາຄາຕະຫຼາດ

- ຂາດສະມາຄົມ ຫຼື ເວທີສົນທະນາປຶກສາ ໃນຂະແໜງຊາ ເຮັດໃຫ້ມີຂໍ້ຈຳກັດໃນການແບ່ງປັນຂໍ້ມູນຂ່າວສານລະຫວ່າງພາກສ່ວນກ່ຽວຂ້ອງ. ພາກສ່ວນກ່ຽວຂ້ອງຫຼາຍຄົນຍັງບໍ່ທັນຮັບຮູ້ເຖິງຜົນປະໂຫຍດທີ່ຈະໄດ້ຮັບຈາກຕະຫຼາດທີ່ມີຄວາມໂປ່ງໃສ ແລະ ສະນັ້ນ ຈຶ່ງມີຄວາມກະຕືລືລົ້ນໜ້ອຍໃນການຮ່ວມມື ແລະ ແບ່ງປັນຂໍ້ມູນ.

- ຄວາມສາມາດໃນການນຳໃຊ້ຄອມພິວເຕີແມ່ນຍັງມີຈຳກັດໃນຂະແໜງຊາ ແລະ ບັນຫານີ້ເອງທີ່ຍັງຈຳກັດໃນການເຂົ້າເຖິງຂໍ້ມູນຂ່າວສານທາງດ້ານເຕັກນິກ ແລະ ການຕະຫຼາດແບບງ່າຍດາຍ. ພາສາ ກໍ່ເປັນອຸປະສັກອັນໜຶ່ງໃນເຂດພາກເໜືອ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງໃນຂະແໜງຊາທີ່ເປັນຄົນລາວ ແລະ ຄົນຈີນ.
- ຄຸນນະພາບຂອງຜະລິດຕະພັນ ຍັງຖືວ່າເປັນອຸປະສັກອັນໜຶ່ງ ສຳລັບບາງຕະຫຼາດ ແລະ ກໍ່ເປັນທັງກາລະໂອກາດໃນການຈັດຕັ້ງປະຕິບັດ ວິທີ 'ການສ້າງມາດຕະຖານ' ທີ່ຄ້າຍຄືກັບວິທີການທີ່ຖືກນຳໃຊ້ໂດຍ IDH ໃນຂະແໜງຊາແຫ່ງຊາດອື່ນໆ.[19]

## 4.5 ເພື່ອເຮັດໃຫ້ຜູ້ບໍລິໂພກມີສ່ວນຮ່ວມ ແລະ ເຊື່ອມຕໍ່ກັນໄດ້

### 4.5.1 ເຮັດການຕະຫຼາດເພື່ອສົ່ງເສີມຄຸນຄ່າຂອງຊາລາວ

ຍັງມີໂອກາດຫຼາຍໆຢ່າງຢູ່ໃນຂະແໜງຊາລາວ ໃນການໂຄສະນາເຮັດການຕະຫຼາດທີ່ມີຄວາມໄດ້ປຽບທາງດ້ານທຳມະຊາດໃນຕົວຂອງຜະລິດຕະພັນຊາ ເຊັ່ນວ່າ: ສະພາບທີ່ປອດສານພິດ, ມີຊັບພະຄຸນຮັກສາສຸຂະພາບ ແລະ ແຫຼ່ງກຳເນີດບູຮານ ຕໍ່ຜູ້ຊົມໃຊ້ບໍລິໂພກໃນວົງກວ້າງຂວາງອອກ.

**ສະພາບໃນປະຈຸບັນ:**

- ຊາລາວ ເປັນທີ່ຮັບຮູ້ໃນຕະຫຼາດບາງແຫ່ງຢູ່ໃນປະເທດຈີນ ສຳລັບສະຖານະພາບທີ່ປອດສານພິດ ແລະ ຄວາມເປັນບູຮານຂອງມັນ ແລະ ຖືວ່າມີຊັບພະຄຸນດີຕໍ່ສຸຂະພາບ. ແຕ່ເຖິງຢ່າງໃດກໍ່ຕາມ, ນອກຈາກຕະຫຼາດໃນປະເທດຈີນແລ້ວ, ຊາລາວແມ່ນເປັນທີ່ຮັບຮູ້ໜ້ອຍຫຼາຍ. ນອກຈາກນີ້, ຍັງມີຫຼາຍກໍລະນີ ທີ່ຊາຂອງລາວ ຖືກຫຸ້ມຫໍ່ ແລະ ຂາຍ ວ່າເປັນຊາຂອງປະເທດຈີນ ເພື່ອຫຼີກລ້ຽງການກີດຂວາງທາງດ້ານການຄ້າ.
- ການບໍລິໂພກຊາພາຍໃນປະເທດແມ່ນຍັງມີໜ້ອຍ. ຍີ່ຫໍ້ຊາຂອງລາວ ແມ່ນຖືກວາງຂາຍຢູ່ໃນລາຄາທີ່ຂ້ອນຂ້າງສູງ, ສ່ວນໃຫຍ່ແມ່ນຢູ່ຕາມສູນກາງຂອງນັກທ່ອງທ່ຽວ ເປັນຕົ້ນ ຢູ່ສະໜາມບິນ ແລະ ດ່ານກວດຄົນເຂົ້າເມືອງຕ່າງໆ ແລະ ຍັງບໍ່ທັນມີຄວາມແຕກຕ່າງລະຫວ່າງຊາລາວທີ່ມີມູນຄ່າສູງ ແລະຊາທີ່ມີມູນຄ່າຕ່ຳທີ່ເນັ້ນໃຊ້ປະລິມານການຜະລິດ ທີ່ຖືກນຳເຂົ້າຫຼາຍຈາກປະເທດຫວຽດນາມ, ໄທ ແລະ ຈີນ.
- ແຜນງານການອອກໃບຢັ້ງຢືນ ເຊັ່ນວ່າ ຊີວະພາບ (Organic) ແລະ ການຄ້າເປັນທຳ ສາມາດເຮັດໃຫ້ເປັນການເປີດໂອກາດຫາຕະຫຼາດໃໝ່ໄດ້ ສຳລັບຂະແໜງຊາລາວ. ປະຈຸບັນໄດ້ມີຜູ້ຜະລິດໜຶ່ງຢູ່ໃນພາກໃຕ້ຂອງ ສປປ ລາວ ທີ່ໄດ້ຜະລິດຊາໃນປະລິມານໜ້ອຍ ສຳລັບຕະຫຼາດການຄ້າເປັນທຳ (Mai Savanh Lao) ແລະ ຍັງມີຫຼາຍກຸ່ມຜະລິດ ທີ່ປະຕິບັດຕາມຫຼັກການຂອງ ການຄ້າເປັນທຳ. ຊາລາວແມ່ນຖືວ່າເປັນ 'ຊາປອດສານພິດໃນຕົວ' ແລະ ຍັງມີທ່າແຮງໃນການເຕີບໂຕ ຈາກຄວາມໄດ້ປຽບທາງທຳມະຊາດ ໂດຍການໝູນໃຊ້ປະສົບການຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ ທີ່ໄດ້ຮັບໃບຢັ້ງຢືນສິນຄ້າຊີວະພາບ/ປອດສານພິດແລ້ວ (Organic Certification).
- ມີທ່າແຮງສຳລັບຂະແໜງຊາ ແລະ ການທ່ອງທ່ຽວ ເພື່ອສ້າງຄວາມກ່ຽວພັນທີ່ໜັກແໜ້ນກວ່າເກົ່າ ແລະ ນຳໃຊ້ສວນຊາບູຮານໃນພາເໜືອຂອງປະເທດ ເຊິ່ງເປັນສ່ວນໜຶ່ງຂອງ 'ເສັ້ນທາງມ້າຂົນສົ່ງຊາບູຮານ'. ທະນາຄານພັດທະນາອາຊີ ໄດ້ຮ່ວມມືກັບລັດຖະບານລາວ ເພື່ອສ້າງ 'ເສັ້ນທາງການຄ້າຂາຍຊາ' ຢູ່ໃນ ສປປ ລາວ ແລະ ປະເທດຈີນ ແມ່ນເປັນສ່ວນໜຶ່ງຂອງແຜນງານພັດທະນາໂຄງລ່າງພື້ນຖານໃນເຂດລຸ່ມແມ່ນ້ຳຂອງ ແລະ ວຽກດັ່ງກ່າວນີ້ ສາມາດເຮັດໃຫ້ສຳເລັດໄດ້ໃນການສ້າງແນວຄວາມຄິດລິເລີ່ມນີ້ທັງໃນ ສປປ ລາວ ລວມທັງການສ້າງ 'ເສັ້ນທາງຊາບູຮານ' ກັບປະເທດໃກ້ຄຽງອື່ນໆ ລວມທັງປະເທດຫວຽດນາມ ແລະ ມຽນມ້າ.

# 5 ຄວາມມຸ່ງໝັ້ນຂອງພາກອຸດສາຫະກຳຊາ ແລະ ການຮ່ວມມື ເພື່ອການພັດທະນາທີ່ຍືນຍົງຂອງຂະແໜງຊາຢູ່ໃນ ສປປ ລາວ

## 5.1 ຄວາມມຸ່ງໝັ້ນຂອງຂະແໜງ

ພາກສ່ວນກ່ຽວຂ້ອງກັບອຸດສາຫະກຳຊາຮັບຮູ້ວ່າວິທີການຂັບເຄື່ອນໂດຍພາກອຸດສາຫະກຳເອງເປັນຜູ້ນຳ ຈະເປັນວິທີ ທີ່ຊ່ວຍຮັບປະກັນໃຫ້ມີການຮັບຮອງຂອງພາກອຸດສາຫະກຳທັງໝົດ ແລະ ມີອຳນາດລວມ ເພື່ອແກ້ໄຂຂໍ້ຄົງຄ້າງທີ່ສຳຄັນຂອງຂະແໜງຊາ ໄປພ້ອມກັບການໄດ້ຮັບສິດຜົນປະໂຫຍດ ທາງດ້ານໂອກາດໃໝ່ຕ່າງໆໃນຂະແໜງຊາລາວ. ການເຂົ້າຮ່ວມ ແລະ ການສະໜັບສະໜູນ ຈາກລັດຖະບານ ແລະ ຄູ່ຮ່ວມພັດທະນາ ແມ່ນສຳຄັນທີ່ສຸດ ຕໍ່ຂະແໜງຊາ. ແຕ່ເຖິງຢ່າງໃດກໍ່ຕາມ, ທ້າຍທີ່ສຸດແລ້ວ ມັນກໍ່ຂຶ້ນກັບບັນດາຜູ້ຜະລິດຊາ, ຜູ້ປຸງແຕ່ງຊາ ແລະ ພໍ່ຄ້າຊາທັງຫຼາຍ ທີ່ຈະເປັນຜູ້ຂັບເຄື່ອນການຂະຫຍາຍຕົວໃນອະນາຄົດ.

ຜູ້ມີສ່ວນຮ່ວມເອກະຊົນໃນອຸດສາຫະກຳຊາລາວ ຈາກພາກໃຕ້ ແລະ ພາກເໜືອ ຈຳເປັນຕ້ອງໄດ້ຮ່ວມມືກັນ ເພື່ອສ້າງ 'ສຽງສ່ວນລວມ' ກ່ຽວກັບບັນຫາຕ່າງໆທີ່ມີຮ່ວມກັນ, ນຳສະເໜີຄວາມຕ້ອງການຂອງພາກອຸດສາຫະກຳ ແລະ ຊອກຫາກາລະໂອກາດອັນໃໝ່ຮ່ວມກັນ ເພື່ອຜົນປະໂຫຍດຂອງທຸກໆພາກສ່ວນຂອງຂະແໜງຊາລາວທັງໝົດ.

## 5.2 ວິທີການ

ວິທີການທີ່ນຳສະເໜີ ແມ່ນເພື່ອອຳນວຍຄວາມສະດວກໃນການຂັບເຄື່ອນຂອງພາກອຸດສາຫະກຳເປັນຜູ້ນຳຮ່ວມກັນ ແລະໃຫ້ມີການພັດທະນາອຸດສາຫະກຳຊາຢູ່ໃນ ສປປ ລາວ ໃຫ້ມີຄວາມຍືນຍົງ ແລະ ສືບຕໍ່ໄປໄດ້ຢ່າງໄດ້ຮັບໝາກຮັບຜົນ, ເຊິ່ງຈະເປັນການເອື້ອອຳນວຍການດຳລົງຊີວິດແບບຍືນຍົງ; ເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຜະລິດ; ທັງເປັນການປົກປັກຮັກສາຊັບພະຍາກອນທຳມະຊາດ; ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ບັນລຸເປົ້າໝາຍການຫຼຸດຜ່ອນຄວາມທຸກຍາກເທື່ອລະກ້າວ.

ວິທີການດັ່ງນີ້ແມ່ນແນໃສ່ເພື່ອ:

- ຍົກສູງບົດບາດ ແລະ ຄຸນຄ່າຂອງຂະແໜງຊາລາວໃຫ້ສູງຂຶ້ນ ແລະ ປະສານເອົາແນວທາງດັ່ງກ່າວນີ້ ໃຫ້ມີຄວາມຍືນຍົງໃນການຜັກດັນນະໂຍບາຍ ແລະ ວິທີປະຕິບັດໃນການລົງທຶນ ໃນການສະໜັບສະໜູນ ເພື່ອໃຫ້ມີການປົກປ້ອງຊັບພະຍາກອນຊາ ແລະ ຄ້ຳປະກັນການຄອບຄອງທີ່ດິນໃຫ້ແກ່ຊຸມຊົນທີ່ຢູ່ໃນເຂດຊົນນະບົດເຊິ່ງເປັນຜູ້ຜະລິດຊາທົ່ວປະເທດ; ແລະ.
- ສົ່ງເສີມພາວະການເປັນຜູ້ນຳຂອງພາກອຸດສາຫະກຳ ໄປພ້ອມກັບຄວາມພະຍາຍາມຕ່າງໆຂອງລັດຖະບານ ແລະ ອົງການຈັດຕັ້ງສັງຄົມ; ແລະ ເຊື່ອມໂຍງຂະແໜງຊາລາວ ໃຫ້ເຂົ້າກັບຂະແໜງຊາຂອງພາກພື້ນ ແລະ ສາກົນ ແລະ ຄວາມພະຍາຍາມ ໂດຍຜ່ານ Tea 2030.





### 5.2.1 ຈຸດປະສົງ

ຈຸດປະສົງຕົ້ນຕໍຂອງການປະຕິບັດຮ່ວມກັນ ແມ່ນເພື່ອ:

- ສ້າງເວທີສຳລັບ Tea 2030 ຂອງລາວ ເຊິ່ງປະກອບມີຜູ້ນຳຈາກພາກອຸດສາຫະກຳດັ່ງກ່າວ (ຈາກຜູ້ຜະລິດ, ຜູ້ປຸງແຕ່ງ ແລະ ຜູ້ຄ້າຂາຍ), ພາກສ່ວນທີ່ກ່ຽວຂ້ອງຈາກລັດຖະບານ ແລະ ອົງການຈັດຕັ້ງສັງຄົມອື່ນໆ;

ແລະ ໂດຍຜ່ານເວທີ Tea 2030 ຂອງລາວ,

- ສົ່ງເສີມຄວາມເປັນຜູ້ນຳຂອງພາກອຸດສາຫະກຳຊາ ແລະ ຄວາມມຸ່ງໝັ້ນໃນການແກ້ໄຂບັນຫາສິ່ງທ້າທາຍຕ່າງໆໃນປະຈຸບັນ (ແລະ ການຮັບຮູ້ຄຸນຄ່າໃນການສົ່ງເສີມວຽກງານນີ້) ໄປຄຽງຄູ່ກັບຄວາມພະຍາຍາມຕ່າງໆຂອງລັດຖະບານ ແລະ ອົງການຈັດຕັ້ງສັງຄົມອື່ນໆ;
- ສ້າງກົນໄກການປະສານງານ (ໃນຮູບແບບຂອງຍຸດທະສາດ ແລະ ແຜນປະຕິບັດງານຂະແໜງຊາແຫ່ງຊາດ) ເພື່ອເປັນການສ້າງກຳລັງແຮງສະໜັບສະໜູນ, ຊັບພະຍາກອນ ແລະ ການລົງທຶນຕ່າງໆ ທີ່ອາດເປັນໄປໄດ້ ຈາກພາກອຸດສາຫະກຳ, ລັດຖະບານ ແລະ ບັນດາອົງການຈັດຕັ້ງສັງຄົມ ສຳລັບກິດຈະກຳຕ່າງໆ ທີ່ແນໃສ່ເພື່ອເຮັດໃຫ້ອຸດສາຫະກຳຊາມີຄວາມຍືນຍົງ ແລະ ສາມາດສືບຕໍ່ຢູ່ໄດ້ເປັນຢ່າງດີ; ແລະ
- ເຊື່ອມໂຍງຂະແໜງຊາລາວ ເຂົ້າກັບອົງການຈັດຕັ້ງຕ່າງໆໃນຂົງເຂດພາກພື້ນ ແລະ ສາກົນທີ່ກ່ຽວຂ້ອງ ທີ່ກຳລັງເຮັດວຽກເພື່ອຄວາມຍືນຍົງຂອງຂະແໜງຊາໃນທົ່ວໂລກ.

### 5.2.2 ຜົນຄາດຫວັງ

ການຮ່ວມມືກັນ ເພື່ອພັດທະນາຂະແໜງຊາໃຫ້ມີຄວາມຍືນຍົງ ຢູ່ໃນ ສປປ ລາວ ແມ່ນຄາດວ່າຈະປ່ຽນແປງວິທີການທີ່ພາກສ່ວນຕ່າງໆ ໃນຂະແໜງຊາລາວ ກຳລັງໃຊ້ເພື່ອຕິດຕໍ່ພົວພັນກັນພາຍໃນ (ແລະ ຜູ້ມີສ່ວນກ່ຽວຂ້ອງໃນຂົງເຂດພາກພື້ນ / ສາກົນ); ແລະ ປະຈຸບັນວິທີການດັ່ງກ່າວນີ້ ແມ່ນກຳລັງຖືກພັດທະນາຂຶ້ນສຳລັບຂະແໜງຊາ.

ການປ່ຽນແປງ / ຜົນຄາດຫວັງ ທີ່ສຳຄັນ ແມ່ນລວມມີ:

- ເຮັດໃຫ້ມີເວທີປຶກສາ ແລະ ການຮ່ວມມືຫຼາຍຂຶ້ນກວ່າເກົ່າ ລະຫວ່າງພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ແລະ ການເສີມສ້າງຄວາມເຂັ້ມແຂງຂອງອົງການຈັດຕັ້ງໃນພາກອຸດສາຫະກຳຊາ ແລະ ມີຂີດຄວາມສາມາດໃນການເຂົ້າຮ່ວມ;
- ເພີ່ມຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບສິ່ງທ້າທາຍຕ່າງໆ ທີ່ມີຮ່ວມກັນ ແລະ ທຸກພາກສ່ວນໃນຂະແໜງຊາກຳລັງປະເຊີນໜ້າຢູ່ໃນປະຈຸບັນ ແລະ ຜົນປະໂຫຍດຈາກການສ້າງຂະແໜງຊາໃຫ້ມີຄວາມຍືນຍົງຮ່ວມກັນ;
- ເປີດກວ້າງໃຫ້ມີເວທີນະໂຍບາຍ ເພື່ອລວມເອົາສະພາບພົ້ນເດັ່ນຂອງຊາດ ແລະ ພາກພື້ນ ແລະ ສຸມໃສ່ການພັດທະນາທີ່ຍືນຍົງ; ແລະ
- ການພັດທະນາຍີ່ຫໍ້ຊາລາວ ແລະ ກາລະໂອກາດຕ່າງໆ ເພື່ອເພີ່ມມູນຄ່າຜະລິດຕະພັນຊາ (ເຊັ່ນ: ຄຸນນະພາບຂອງຜະລິດຕະພັນ, ຜະລິດຕະພັນ / ລາຄາສູງສຸດ; ການເຂົ້າເຖິງເງິນທຶນ; ການເຂົ້າເຖິງຕະຫຼາດ ແລະ ອື່ນໆ);
- ລິເລີ່ມປະຕິບັດການຮ່ວມມືກັນ (ກັບພາກສ່ວນກ່ຽວຂ້ອງ / ນັກລົງທຶນພາຍໃນປະເທດ, ໃນຂົງເຂດ ແລະ ສາກົນ) ເພື່ອເຮັດໃຫ້ຂະແໜງຊາມີຄວາມຍືນຍົງ ໂດຍສຸມໃສ່ການໃຫ້ການສະໜັບສະໜູນຊຸມຊົນທ້ອງຖິ່ນ ແລະ ຊາວສວນຂະໜາດນ້ອຍ ເພື່ອເຮັດໃຫ້ເຂົາເຈົ້າເຫັນຄຸນຄ່າຈາກການຜະລິດ ແລະ ການປຸງແຕ່ງຊາໃຫ້ຫຼາຍຂຶ້ນກວ່າເກົ່າ.

## 5.3 ໜ້າວຽກບູລິມະສິດ

ສາມໜ້າວຽກບູລິມະສິດ ແມ່ນມີການນຳສະເໜີ ແລະອະທິບາຍໃນພາກຂ້າງລຸ່ມຕໍ່ໄປນີ້.

### 5.3.1 ສ້າງ ແລະ ຈັດຕັ້ງປະຕິບັດເວທີ Tea 2030 ຂອງລາວ

ສ້າງຕັ້ງເວທີສົນທະນາຂອງຂະແໜງຊາລາວ ທີ່ໄດ້ພັດທະນາໃນກິດຈະກຳຂອງກອງທຶນເບີກຈ່າຍຮີບດ່ວນ (Quick Disbursement Fund), ເວທີ Tea 2030 ຂອງລາວ ຈະຖືກສ້າງຕັ້ງຂຶ້ນ. ເວທີດັ່ງກ່າວນີ້ ຈະປະກອບມີຜູ້ນຳຂອງກຸ່ມຜູ້ຜະລິດຊາ, ຜູ້ປຸງແຕ່ງຊາ ແລະ ອຳນາດການປົກ

ຄອງຕ່າງໆທີ່ກ່ຽວຂ້ອງຈາກລັດຖະບານລາວ ເຊິ່ງຈະຖືກຮັບຮອງໂດຍສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໂດຍການສະໜັບສະໜູນຈາກສະພາການຄ້າ ແລະ ອຸດສາຫະກຳເອີລີບ ປະຈຳ ສປປ ລາວ ແລະ ຈະເປັນການປູທາງສຳລັບການສ້າງຕັ້ງສະມາຄົມຊາລາວໃນອະນາຄົດ.

ກິດຈະກຳຕ່າງໆ ໃນການສ້າງຕັ້ງເວທີສົນທະນາຂະແໜງຊາລາວ ຈະປະກອບມີ:

- ຈັດກອງປະຊຸມປຶກສາຫາລືກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ເພື່ອຢັ້ງຢືນໂຄງສ້າງຂອງເວທີ;
- ຄັດເລືອກ 'ຜູ້ນຳຂອງພາກອຸດສາຫະກຳຊາ' ແລະ ເງື່ອນໄຂຂອງການສະໜັບສະໜູນ ເພື່ອຂັບເຄື່ອນເວທີສົນທະນາຂະແໜງຊາໃນໄລຍະເລີ່ມຕົ້ນ;
- ການສ້າງຂອບເຂດໜ້າວຽກ ໃຫ້ແກ່ເວທີສົນທະນາຂະແໜງຊາ;
- ສ້າງກົດລະບຽບໃຫ້ແກ່ອຸດສາຫະກຳຊາ;
- ພັດທະນາລະບົບສະໜອງທຶນຮອນແບບຍືນຍົງ, ສ້າງແຜນພັດທະນາລະບົບການຈັດຕັ້ງ ແລະ ການສ້າງຂີດຄວາມສາມາດ; ແລະ
- ສ້າງຂໍ້ຕົກລົງການຮ່ວມມືກັບພາກສ່ວນກ່ຽວຂ້ອງກັບຂະແໜງຊາທີ່ສຳຄັນໃນຂົງເຂດພາກພື້ນ ແລະ ສາກົນ ເພື່ອສະໜັບສະໜູນເວທີປຶກສາຂະແໜງຊາລາວ.

ກິດຈະກຳຕ່າງໆ ສຳລັບການດຳເນີນງານຂອງເວທີສົນທະນາຂະແໜງຊາລາວ ຈະປະກອບດ້ວຍ: ກອງປະຊຸມປະຈຳ 6 ເດືອນ ຕະຫຼອດໄລຍະອາຍຸຂອງໂຄງການ ແລະ ຈະມີກອງປະຊຸມມີສ່ວນຮ່ວມໃນການເຮັດວຽກຮ່ວມກັນຂອງກຸ່ມຂະໜາດໜ້ອຍອື່ນໆ. ການມີສ່ວນຮ່ວມຕ່າງໆ ຈະເນັ້ນໃສ່ການພັດທະນາຍຸດທະສາດຊາແຫ່ງຊາດ ແລະ ຊອກຫາທິດທາງ ແລະ ການດຳເນີນງານຢ່າງຕໍ່ເນື່ອງຂອງເວທີສົນທະນາຂະແໜງຊາລາວ (ແລະສະມາຄົມ).

## 5.3.2 ການສ້າງຍຸດທະສາດຊາແຫ່ງຊາດ ແລະ ທິດທາງເພື່ອກ້າວໄປສູ່ການພັດທະນາແບບຍືນຍົງ

ຍຸດທະສາດຊາແຫ່ງຊາດ ແລະ ທິດທາງ ຈະຖືກພັດທະນາຂຶ້ນ ເພື່ອເປັນກອບໃຫ້ແກ່ການປະຕິບັດງານຮ່ວມກັນໃນການກ້າວໄປສູ່ການພັດທະນາຂະແໜງຊາລາວໃຫ້ມີຄວາມຍືນຍົງ. ຍຸດທະສາດຊາແຫ່ງຊາດ ຈະເຮັດໃຫ້ການພັດທະນາຂະແໜງຊາໄປຄຽງຄູ່ກັບເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງຈຸດປະສົງຮ່ວມກັນຂອງອຸດສາຫະກຳຊາໃນຂົງເຂດພາກພື້ນ ແລະ ສາກົນ.

ກິດຈະກຳຕ່າງໆ ເພື່ອສະໜັບສະໜູນການພັດທະນາຍຸດທະສາດຊາແຫ່ງຊາດ ຈະລວມມີ:

- ທົບທວນບົດລາຍງານການສຶກສາ ແລະ ນະໂຍບາຍຕ່າງໆ ທີ່ໄດ້ເຮັດຜ່ານມາ (ເຊັ່ນ: ຍຸດທະສາດຊາຂອງແຂວງຜົ້ງສາລີ ແລະ ຍຸດທະສາດການພັດທະນາກາເຟລາວ);
- ຈັດກອງປະຊຸມມີສ່ວນຮ່ວມໃນການພັດທະນາຍຸດທະສາດກັບພາກສ່ວນກ່ຽວຂ້ອງກັບຂະແໜງຊາຈາກພາກໃຕ້ ແລະ ພາກເໜືອ;
- ຈັດກອງປະຊຸມເວທີ Tea 2030 ຂອງລາວ ຕາມແຕ່ລະໄລຍະທີ່ສຳຄັນຂອງການພັດທະນາຍຸດທະສາດ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ການເຫັນດີເປັນເອກະພາບຂອງພາກສ່ວນກ່ຽວຂ້ອງ; ແລະ
- ສ້າງກິດຈະກຳການເຜີຍແຜ່ຍຸດທະສາດ (ແລະ ລະບຽບຂອງການປະຕິບັດ) ໃນລະດັບຊາດ, ຂັ້ນແຂວງ, ຂັ້ນເມືອງ ແລະ ຊຸມຊົນ.

## 5.3.3 ສ້າງໂຄງການ Tea 2030 ໃນຂົງເຂດພາກພື້ນ

ໂຄງການ Tea 2030 ໃນຂົງເຂດພາກພື້ນ ຈະຖືກສ້າງຕັ້ງຂຶ້ນ ເພື່ອເສີມຂະຫຍາຍການເຊື່ອມໂຍງ ແລະ ສົ່ງເສີມການຮ່ວມມືກັນລະຫວ່າງຂະແໜງຊາຕ່າງໆໃນຂອບເຂດປະເທດກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ (CLMV) ແລະ ຕອບສະໜອງກົນໄກໃນການເຂົ້າເປັນຄູ່ຮ່ວມອຸດສາຫະກຳຊາໃນລະດັບສາກົນ ໃນການເປັນສະມາຄົມພາກພື້ນ. ຄູ່ຮ່ວມງານພາກພື້ນ ຈະຈັດກອງປະຊຸມຮ່ວມກັນປີລະຄັ້ງ ແລະ ຈະເປັນປະທານໂຄງການໃນທຸກໆ 3 ປີ.

ກິດຈະກຳຕ່າງໆ ເພື່ອສະໜັບສະໜູນການສ້າງຕັ້ງເວທີ Tea 2030 ໃນຂົງເຂດພາກພື້ນ ຈະປະກອບມີ:

- ປະຊຸມປຶກສາຫາລືກັບແຕ່ລະຄູ່ຮ່ວມງານຂອງເວທີຂະແໜງຊາໃນຂົງເຂດພາກພື້ນ;
- ການມີສ່ວນຮ່ວມໃນຂົງເຂດພາກພື້ນຕ່າງໆ ເພື່ອນຳເອົາຄູ່ຮ່ວມງານຂອງເວທີຂະແໜງຊາໃນຂົງເຂດພາກພື້ນ, ຕົກລົງກ່ຽວກັບຜົນປະໂຫຍດຮ່ວມກັນ ແລະ ຊອກຫາວິທີທາງ ເພື່ອສືບຕໍ່ຮ່ວມມືກັນ;
- ສ້າງ ເວບເພັກ (webpage) Tea 2030 ຂອງຂົງເຂດພາກພື້ນ ເພື່ອອຳນວຍຄວາມສະດວກໃນການແລກປ່ຽນຂໍ້ມູນຂ່າວສານ; ແລະ
- ຮັບປະກັນຂໍ້ຕົກລົງການເປັນຄູ່ຮ່ວມງານ ກັບພາກສ່ວນກ່ຽວຂ້ອງກັບຊາ ແລະ / ຫຼື ຄູ່ຮ່ວມພັດທະນາ ໃນຂົງເຂດພາກພື້ນ / ສາກົນ ສຳລັບການຈັດຕັ້ງປະຕິບັດ ຍຸດທະສາດ.

## 5.4 ໂອກາດໃນການຮ່ວມມື ແລະ ເສີມຂະຫຍາຍຜົນປະໂຫຍດ

ປະຈຸບັນ ມີຫຼາຍແຜນງານ ແລະ ໂຄງການ ທີ່ກຳລັງສືບຕໍ່ດຳເນີນງານຢູ່ ເພື່ອເຮັດໃຫ້ບັນລຸຕາມຜົນຄາດຫວັງທີ່ດີກວ່າເກົ່າ ສຳລັບຊຸມຊົນຜະລິດຊາຢູ່ໃນເຂດຊົນນະບົດຂອງ ສປປ ລາວ ແລະ ໃນຂົງເຂດພາກພື້ນ. ແຜນງານຕາມທີ່ກຳນົດໄວ້ຂ້າງເທິງ ແມ່ນມີຈຸດປະສົງ ເພື່ອຕອບສະໜອງກົນໄກການປະສານງານ ແລະ ເສີມຂະຫຍາຍຜົນປະໂຫຍດຈາກແນວຄວາມຄິດເຫຼົ່ານີ້. ກອງປະຊຸມປຶກສາຫາລືຕ່າງໆ ແມ່ນໄດ້ດຳເນີນແລ້ວກັບຜູ້ຈັດຕັ້ງປະຕິບັດໂຄງການເຫຼົ່ານີ້ ແລະ ໄດ້ມີໂອກາດຢ່າງໜັກແໜ້ນໃນການຮ່ວມມື ດັ່ງທີ່ກຳນົດໄວ້ (ເບິ່ງ **ຕາຕະລາງ** 5-1).

**ຕາຕະລາງ 5-1 ໂຄງການທີ່ກຳລັງສືບຕໍ່ ແລະ ໂອກາດໃນການຮ່ວມມືກັນ**

| ໂຄງການ | ຄູ່ຮ່ວມຈັດຕັ້ງປະຕິບັດ | ໂອກາດໃນການຮ່ວມມື |
|---|---|---|
| **ໂຄງການພາຍໃນປະເທດລາວ** | | |
| ໂຄງການ ສ້າງຄວາມເຂັ້ມແຂງດ້ານບົດບາດຍິງ-ຊາຍ ໃຫ້ແກ່ອົງການຈັດຕັ້ງຊຸມຊົນ (COPE) – ພາຍໃຕ້ໂຄງການ Shan Tea Project. ໄລຍະ 2 ຂອງໂຄງການຄາດວ່າຈະເລີ່ມຕົ້ນໃນປີ 2016. | ອົງການ HELVETAS; SDC; ຄູ່ຮ່ວມງານຈາກອຳນາດການປົກຄອງທ້ອງຖິ່ນ. | • ສະໜັບສະໜູນການສ້າງຍຸດທະສາດຊາແຂວງຜົ້ງສາລີ ໃຫ້ກາຍເປັນຍຸດທະສາດຊາແຫ່ງຊາດ;<br>• ຊ່ວຍເຫຼືອໃນການເປັນຕົວແທນໃຫ້ແກ່ຊາວສວນຂະໜາດນ້ອຍໃນເວທີສົນທະນາຂະແໜງຊາລາວ (ໂດຍໄດ້ຮັບການສະໜັບສະໜູນຈາກສະພາການຄ້າ ແລະ ອຸດສາຫະກຳເອີລົບ ປະຈຳ ສປປ ລາວ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ);<br>• ສະໜອງໂອກາດໃນການສ້າງມູນຄ່າເພີ່ມ ແລະ ເຂົ້າເຖິງຕະຫຼາດ ສຳລັບຜູ້ຜະລິດຊາຂະໜາດນ້ອຍ. |
| ໂຄງການຊີວະນາໆພັນກະສິກຳ (TABI) | ອົງການ SDC; ກະຊວງກະສິກຳ ແລະ ປ່າໄມ້; ຄູ່ຮ່ວມງານຈາກອຳນາດການປົກຄອງທ້ອງຖິ່ນ. | • ມີທ່າແຮງໃນການຮ່ວມມືໃນວຽກງານສ້າງຖານຂໍ້ມູນກ່ຽວກັບຊາຢູ່ໃນລາວ. ສະພາການຄ້າ ແລະ ອຸດສາຫະກຳເອີລົບ ປະຈຳລາວ ໄດ້ພົບປະ ແລະ ໄດ້ຕົກລົງກ່ຽວກັບວຽກດັ່ງກ່າວແລ້ວ ໃນການສ້າງຂໍ້ມູນຂອງອຸດສາຫະກຳຊາ ແລະ ການນຳສະເໜີຊາລາວໃນຕະຫຼາດສາກົນຢູ່ເມືອງປາຣີ ປະເທດຝະລັ່ງໃນທ້າຍປີ 2016. |
| **ໂຄງການໃນຂົງເຂດພາກພື້ນ** | | |
| ໂຄງການ Shan Tea | ອົງການ SDC; HELVETAS | • ໂອກາດສຳລັບການຮ່ວມມືໃນກິດຈະກຳການປັບປຸງຊີວິດການເປັນຢູ່ໃນເຂດຊຸມຊົນທີ່ມກຳລັງມີການປູກຊາ ໃນທົ່ວເຂດພາກພື້ນແມ່ນ້ຳຂອງ;<br>• ທ່າແຮງໃນການຮ່ວມມື ເພື່ອສ້າງເວທີສົນທະນາຊາໃນເຂດພາກພື້ນ. |
| ໂຄງການສົ່ງເສີມການຄ້າແບບຍືນຍົງຂອງອົງການ IDH – ແຜນງານກ່ຽວກັບຊາ (ປະຈຸບັນກຳລັງຖືກຈັດຕັ້ງປະຕິບັດຢູ່ປະເທດຫວຽດນາມ) | ອົງການ IDH; Unilever; Rainforest Alliance | • ການສ້າງຕັ້ງໂຮງຮຽນຊາວນາຢູ່ສະໜາມ (FFS) ຢູ່ໃນ ສປປ ລາວ ໂດຍອີງໃສ່ຮູບແບບແຜນງານຊາຂອງອົງການ IDH;<br>• ນຳສະເໜີ 'ບາດກ້າວທີ່ໜັກແໜ້ນ' ຂອງການຢັ້ງຢືນ ຕໍ່ຂະແໜງຊາຂອງປະເທດລາວ ແລະ ປະເທດມຽນມາ;<br>• ການແລກປ່ຽນຄວາມຮູ້ ແລະ ກິດຈະກຳທົດລອງຕ່າງໆ ກັບພາກສ່ວນທີ່ກ່ຽວຂ້ອງຕົ້ນຕໍກ່ຽວກັບຊາ. |

| ໂຄງການ | ຄູ່ຮ່ວມຈັດຕັ້ງປະຕິບັດ | ໂອກາດໃນການຮ່ວມມື |
|---|---|---|
| ການພັດທະນາຂີດຄວາມສາມາດສໍາລັບການພັດທະນາຂອງພາກເອກະຊົນໃນປະເທດມຽນມາ ຂອງອົງການ GIZ | ອົງການ GIZ; ຄູ່ຮ່ວມພັດທະນາອື່ນໆ; ຄູ່ຮ່ວມງານຈາກອໍານາດການປົກຄອງທ້ອງຖິ່ນ. | • ການແລກປ່ຽນຂໍ້ມູນຂ່າວສານ ແລະ ການຮ່ວມມືໃນການເຊື່ອມສານຍຸດທະສາດການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຂົ້າກັບຂະບວນການສ້າງມູນຄ່າເພີ່ມໃນຊາ. |
| ໂຄງການມີສ່ວນຮ່ວມໃນທຸລະກິດກະສິກໍາ ສໍາລັບການຄຸ້ມຄອງທີ່ດິນຢ່າງມີຄວາມຮັບຜິດຊອບໃນປະເທດ (ກໍາປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ (CLMV) ຂອງອົງການ Oxfam | ອົງການ Oxfam; SDC; GIZ | • ການແລກປ່ຽນໍ້ມູນຂ່າວສານ ແລະ ການຮ່ວມມືໃນຮູບແບບທຸລະກິດກະສິກໍາໃນຂົງເຂດຂະແໜງຊາ. |
| ໂຄງການຂອງ FAO/AFD ກ່ຽວກັບການສົ່ງເສີມການພັດທະນາຊົນນະບົດໂດຍຜ່ານການພັດທະນາແຫຼ່ງກໍາເນີດທາງດ້ານພູມສາດ (GI) | ອົງການ FAO; AFD; ຄູ່ຮ່ວມງານຈາກອໍານາດການປົກຄອງທ້ອງຖິ່ນ. | • ຊາເປັນຜະລິດຕະພັນຕົ້ນຕໍອັນໜຶ່ງ ສໍາລັບວຽກງານຂຶ້ນທະບຽນ GI ໃນອະນາຄົດ ໂດຍອົງການ FAO / AFD ຢູ່ໃນ ສປປ ລາວ ແລະ ພາກພື້ນແມ່ນໍ້າຂອງ. |
| **ໂຄງການໃນລະດັບສາກົນ** | | |
| ຊາ 2030 | ອົງການ Unilever, IDH, Tata, Twinings, Fairtrade, Rainforest Alliance, Ethical Tea Partnership ແລະ ອື່ນໆ | • ສະໜັບສະໜູນໃນການເປັນຄູ່ຮ່ວມຈັດຕັ້ງປະຕິບັດສໍາລັບໂຄງການຊາໃນຂົງເຂດພາກພື້ນ;<br>• ໂອກາດໃນການເຂົ້າເຖິງຕະຫຼາດ;<br>• ການກໍານົດແຫຼ່ງທຶນ / ນັກລົງທຶນ. |
| ການຮ່ວມມືໃນຂະແໜງຊາຢ່າງມີຈັນຍາບັນ (Ethical Tea Partnership (ETP)) | ອົງການ GIZ, IDH, Oxfam, UTZ, Fairtrade, Rainforest Alliance, Unilever, Twinings etc | • ໂອກາດໃນການເຂົ້າເປັນສະມາຊິກຂອງ ETP ສໍາລັບບໍລິສັດຕ່າງໆທີ່ກ່ຽວຂ້ອງໃນຂະແໜງຊາ;<br>• ແຜນງານການຝຶກອົບຮົມກ່ຽວກັບບັນຫາຄວາມຍືນຍົງຕ່າງໆ;<br>• ສະໜັບສະໜູນສໍາລັບກິດຈະກໍາການຍົກລະດັບມາດຕະຖາ. |

ແຫຼ່ງຂໍ້ມູນ: ບໍລິສັດ Earth Systems ໃນປີ 2016

# 6 ສະຫຼຸບ

ສປປ ລາວ ມີທ່າແຮງຄວາມເປັນໄປໄດ້ສູງ ທີ່ຈະສືບຕໍ່ປັບປຸງ, ພັດທະນາ ແລະຂະຫຍາຍຂະແໜງຊາຂອງຕົ້ນ. ໂດຍການສືບຕໍ່ຈັດຕັ້ງພັດທະນາຂອງຂະແໜງຊານີ້, ຂະແໜງຊາ ແມ່ນໄດ້ປະກອບສ່ວນເຂົ້າໃນການພັດທະນາໃຫ້ແກ່ບັນດາຊຸມຊົນທີ່ອາໄສໃນພື້ນທີ່ຊົນນະບົດຮ່າງໄກສອກຫຼີກ ບໍ່ວ່າຈະຢູ່ທາງພາກເໜືອ ແລະໃຕ້ຂອງປະເທດ.

ຜູ້ມີສ່ວນຮ່ວມຫຼັກໂດຍກົງຈາກຂະແໜງຊາໄດ້ຕົກລົງເຫັນດີພ້ອມພຽງກັນໃນໜ້າວຽກຈຳເປັນໃນການພັດທະນາຂະແໜງດັ່ງຂ້າງລຸ່ມຕໍ່ໄປນີ້:

- ການສົ່ງເສີມໃຫ້ເປັນທີ່ຮັບຮູ້ເພີ້ມຂຶ້ນຂອງຄຸນຄ່າຂອງຂະແໜງຊາລາວ ແລະ ການປະສານງານຮ່ວມມືກັນຂອງພາກສ່ວນມີສ່ວນຕ່າງໆ ໄປຕາມແນວທາງທີ່ມີຄວາມຍືນຍົງ ແມ່ນສາມາດມີອິດທິພົນ/ແນວທາງໃນການກຳນົດນະໂຍບາຍ ແລະໃນການຈັດຕັ້ງປະຕິບັດໃນການລົງທຶນຕ່າງໆ ເພື່ອສະໜັບສະໜຸນ ໃນໜ້າວຽກການປົກປ້ອງຊັບພະຍາກອນຊາ ແລະຄວາມໝັ້ນຄົງໃນການຄຸ້ມຄອງທີ່ດິນໃຫ້ແກ່ບັນດາຊຸມຊົນຜູ້ຜະລິດຊາໃນເຂດຊົນນະບົດຢູ່ທົ່ວ ສປປ ລາວ;
- ການສືບຕໍ່ມີການສະໜັບສະໜຸນທາງດ້ານວິຊາການສຳຫຼັບການຜະລິດຊາ ແມ່ນເປັນປັດໃຈຈຳເປັນ ເພື່ອໃຫ້ແນ່ໃຈວ່າຂະແໜງຊາ ແມ່ນສືບຕໍ່ເປັນທາງເລືອກທີ່ໜ້າດຶງດູດໃຈໃນການດຳລົງຊີວິດເຮັດວຽກ ເພືອໃຫ້ມີການສືບຕໍ່ພັດທະນາຕໍ່ໄປໃນຂ້າງໜ້າຂອງຂະແໜງ;
- ຜະລິດຕະພັນຊາທີ່ມີຄຸນລັກສະນະພິເສດສະເພາະ ແມ່ນມີຄວາມຕ້ອງການເພີ້ມຂຶ້ນ, ຈາກຕະຫຼາດທີມີຄວາມສາມາດຊື່ໃນລາຄາສູງພິເສດ. ນີ້ແມ່ນເປັນໂອກາດ ເພື່ອເພີ້ມການປົກປ້ອງຂອງຊັບພະຍາກອນຊາປ່າ ແລະບູຮານ ຊຶ່ງຈຳເປັນຕ້ອງໃຫ້ມີການກະຕຸກຊຸກຊູ້ໃຫ້ມີການຄຸ້ມຄອງປ່າທຳມະຊາດໃຫ້ມີຄວາມຍືນຍົງ ແລະໄປພ້ອມກັບໂອກາດໃນກາສ້າງລາຍໄດ້ ແລະການຈ້າງງານມີວຽກເຮັດງານທຳຂອງບັນດາຊຸມຊົນທີ່ອາໄສໃນເຂດຊົນນະບົດຫ້າງໄກສອກຫຼີກ;
- ການສ້າງສາຍສຳພັນໂດຍມີຜົນປະໂຫຍດຮ່ວມກັນລະຫວ່າງຜູ້ຜະລິດ ແລະຜູ້ແປຮູບ ຈະຊ່ວຍສ້າງສະພາບແວດລ້ອມທີ່ເຮັດໃຫ້ບັນດາຜູ້ມີສ່ວນຮ່ວມຕ່າງໆ ໄດ້ມີໂອກາດໃນການເພີ້ມມູນຄ່າ/ຜົນຕອບແທນເພີ້ມຂຶ້ນ ແລະນຳສະເໜີຂອດຈຳກັດ/ບັນຫາທາງດ້ານຕະຫຼາດ;
- ຂະແໜງຊາທີ່ມີຄວາມຍືນຍົງ ຈຳເປັນຕ້ອງຄຳນຶງພິຈາລະນາຜົນກະທົບທາງດ້ານສິ່ງແວດລ້ອມຈາການຜະລິດຊາ, ຕ້ອງເຮັດໃຫ້ມີຜົນກະທົບນ້ອຍສຸດ ແລະຊອກຫາວິທີທາງເພືອປັບປຸງການຊົມໃຊ້ປັດໃຈທາງຊັບພະຍາກອນທຳມະຊາດຕ່າງທີ່ການຜະລິດຊາຂຶ້ນກັບ;
- ມີຄວາມຈຳເປັນຕ້ອງມີການພິຈາລະນາ ແລະວ່າງແຜນ ເພືອຮ້ອງຮັບກັບຜົນກະທົບທີ່ເປັນໄປໄດ້ຈາກສະພາບການປ່ຽນແປງທາງດິນຟ້າອາກາດໃນປັດຈຸບັນ ແລະອານະຄົດ ໃນພື້ນທີ່ການຜະລິດຊາ ໃນນີ້ລວມມີບັນຫາການເພີ້ມຂຶ້ນຂອງພະຍາດ ແລະສັດຕູພືດທີ່ເປັນໄພຂົ່ມຂູ່ຕໍ່ຂະແໜງ ແລະ ສະພາບເຫດການທາງອາກາດທີ່ມີການປ່ຽນແປງຢ່າງຮຸ່ນແຮງທີ່ມີຖີ່ຂຶ້ນ;
- ກົນໄກທາງເທັກນິກວິຊາການໃນລະດັບແນວໜ້າ, ມີຄວາມກະຈ້າງແຈ້ງລະອຽດ ແລະໂປ່ງໃສ ສາມາດນຳໄປສູ່ການມີຄວາມເທົ່າທຽມກັນເພີ້ມຂຶ້ນໃນທຸກຂັ້ນຂະບວນການຜະລິດມູນຄ່າເພີ້ມ/ຕ່ອງໂສ້ມູນຄ່າເພີ້ມ;
- ພາບພົດການເປັນທີ່ຮັບຮູ້ວ່າ ວ່າດ້ວຍມີແຫຼ່ງຊັບພະຍາກອນຊາທີ່ມີຄຸນລັກສະນະພິເສດສະເພາະ ໄປພ້ອມກັບການຜະລິດຂອງຂະແໜງ ‘ແບບປອດສານໃນຕົວ’ ແມ່ນສາມາດຊ່ວຍສົ່ງເສີມເພີ້ມເຕີມໃນການພັດທະນາ ແລະສ້າງຄວາມເຂັ້ມແຂງໃນການສ້າງຊື່ສຽງ ໃຫ້ເປັນທີ່ຮັບຮູ້ຂອງຊາລາວ, ຊຶ່ງຈະສົ່ງຜົນເຮັດໃຫ້ມີການປັບປຸງທາງດ້ານຜົນຕອບແທນລາຍຮັບຕ່າງໆ ແລະສ້າງໂອກາດໃໝ່ໆໃຫ້ແກ້ຜູ້ຜະລິດ, ແປຮູບ ແລະຂາຍ; ແລະ
- ການຈະເລີນຂະຫຍາຍຕົວຂອງຂະແໜງຊາ ຈະຕອບສະໜອງເຮັດໃຫ້ມີການກະຈ່າຍຜົນປະໂຫຍດຕໍ່ກັບຂະແຫງອື່ນໆ ເຊັ່ນວ່າຂະແໜງທ້ອງທ່ຽວ ຊຶ່ງໄປພ້ອມກັນແມ່ນຈະຊ່ວຍໃນການເຕີບໂຕເປັນທີ່ຮັບຮູ້ມີຊື່ສຽງຂອງຊາລາວ.

## 6.1 ຄຳແນະນຳ ແລະ ບາດກ້າວໃນຕໍ່ໜ້າ

ເພື່ອໃຫ້ມີການພັດທະນາແບບຍືນຍົງຂອງຂະແໜງຊາລາວ, ແມ່ນແນະນຳໃຫ້ພາກສ່ວນຜູ້ມີສ່ວນຮ່ວມກ່ຽວຂ້ອງໃນຂະແໜງຊາລາວຈັດຕັ້ງປະຕິບັດກິດຈະກຳດັ່ງຕໍ່ໄປນີ້:

1. ສ້າງຕັ້ງອົງການຈັດຕັ້ງ/ໜ່ວຍງານ ທີ່ເປັນໜ່ວຍງານຕ່າງໜ້າຮ່ວມໜຶ່ງດຽວກັນຂອງຂະແໜງຊາລາວ ແລະມີຕ່າງໜ້າຈາກທຸກກຸ່ມ;
2. ສ້າງຍຸດທະສາດແຜນທີແນວທາງການພັດທະນາສຳຫຼັບຂະແໜງຊາລາວ ເພື່ອສ້າງຄວາມເຂັ້ມແຂງແນວທາງທີ່ໝັ້ນຄົງທີ່ຍືນຍົງ ແລະທີ່ເປີດເປັນໂອກາດທາງເສດຖະກິດໃຫ້ແກ່ຂະແໜງ;
3. ເປັນອົງການຈັດຕັ້ງທີ່ມີການເຮັດວຽກຮ່ວມກັບລັດຖະບານແຫ່ງ ສປປ ລາວ ເພື່ອສືບຕໍ່ສ້າງຈັດຕັ້ງເວທີການແລກປ່ຽນ ເພື່ອສົ່ງເສີມ ແລະພັດທະນາຂະແໜງ; ແລະ
4. ສືບຕໍ່ຊອກຫາຊ່ອງທາງ ເພື່ອການສະໜັບສະໜູນຈາກພາກສ່ວນຜູ້ມີສ່ວນຮ່ວມຕ່າງໆ ເພື່ອຊ່ວຍພັດທະນາຂະແໜງຊາລາວ ໃຫ້ສາມາດບັນລຸໄດ້ຕາມແຜນຍຸດທະສາດຂອງຂະແໜງ.

ການພັດທະນາຂະຫຍາຍຕົວຂອງຂະແໜງຊາຢ່າງຍືນຍົງ ຈຳເປັນຈະຕ້ອງມີການການວາງແຜນ ແລະພິຈາລະນາປະເດັນຕ່າງທີ່ກ່ຽວຂ້ອງຢ່າງລະອຽດ. ຜູ້ມີສ່ວນຮ່ວມຕ່າງໆຂອງຂະແໜງຊາລາວ ແມ່ນຮັບຮູ້ຕໍ່ກັບຄວາມທ້າທາຍ ທີ່ພວກເຂົາກຳລັງປະເຊີນເພື່ອການພັດທະນາທີ່ຍືນຍົງ ແລະມີຄວາມມຸ່ງໝັ້ນຕັ້ງໃຈ ທີ່ຈະດຳເນີນຕາມວິທີການພັດທະນາຂອງຂະແໜງໂດຍການຮ່ວມມືກັນ/ຢ່າງມີສ່ວນຮ່ວມ. ໂດຍການ 'ການດຳເນີນການຮ່ວມກັນ', ອຸດສາຫະກຳຂອງຂະແໜງນີ້ ສາມາດເລີ້ມຕົ້ນທີ່ຈະນຳສະເໜີຄວາມທ້າທາຍຕ່າງໆແບບພ້ອມພຽງຮ່ວມກັນ ດັ່ງທີ່ໄດ້ລະບຸໃນບົດສຶກສາສະບັບນີ້ ແລະ ໄດ້ເປີດໂອກາດໃໝ່ຕ່າງໆ ໃຫ້ແກ່ຂະແໜງ ໂດຍຜ່ານການຮ່ວມມືຢ່າງມີຍຸດທະສາດ ມີແຜນການບໍ່ວ່າຈະຢູ່ໃນລະດັບຊາດ, ພາກພື້ນ ແລະສາກົນ.



# 7 ເອກະສານອ້າງອີງ


1. Forum for the Future 2014, 'The future of tea: A hero crop for 2030', last accessed 11 April 2016, available: https://www.forumforthefuture.org/project/tea-2030/overview

2. Chang, K, 2014, 'World Tea Production and Trade: Current and Future Development', *In Proceedings and Abstracts of International Tea Symposium*, last accessed 12 April 2016, available: http://www.fao.org/3/a-i4480e.pdf

3. Tea Source 2016, 'Types of Tea', Tea Source website, last accessed 15 April 2016, available: http://www.teasource.com/pages/types-of-tea

4. SSI 2014, 'The State of Sustainability Initiatives Review 2014: Standards and the Green Economy', last accessed 12 April 2016, available: https://www.iisd.org/pdf/2014/ssi_2014.pdf

5. Gunathilaka, RPD and Tularam, GA 2015, 'The tea Industry and a Review of Its Price Modelling in Major Tea Producing Countries', Journal of Management and Strategy, vol.7, No.1, pp.21-36

6. Ethical Consumer 2016, 'Ethical Labels', *Ethical Consumer website*, last accessed 17 April 2016, available: http://www.ethicalconsumer.org/ethicalreports/tea-industry-report/teacertifications.aspx

7. Wu, et al 2011, 'Tea Industry Development and Land Utilization along the China-Laos border: A case study of Komen Village in Laos', *African Journal of Business Management*, Vol. 5, no.11, pp. 4328-4336.

8. UNODC 2015a, 'Southeast Asia Opium Survey 2015', last accessed 12 April 2016, available: https://www.unodc.org/documents/crop-monitoring/sea/Southeast_Asia_Opium_Survey_2015_web.pdf

9. Emerging Markets Consulting 2011, *Lao PDR Tea Sector: Scoping & Design Study of Lao PDR SME Development in Selected Agriculture Sub-sectors and Value Chains*.

10. CARE 2011, 'Policy Brief (2): The Yunnan Market for Lao Teas', Funded by SDC

11. CARE 2011, Tea Sector Development in Northern Laos: Wild Tea Feasibility and Design Study – Final Report.

12. CARE 2011, Feasibility and Design Study for Lao Forest Tea: Land Suitability Evaluation for Tea Growing in the North.

13. Lao Statistics Bureau 2016, 'Lao Tea Statistics', last accessed 21 March 2016, available: http://www.lsb.gov.la/en/index.php

14. Adagio Teas 2013, 'Lesson #06: How is Tea Made?', last accessed 13 April 2016, available: http://www.teaclass.com/lesson_0106.html

15. Earth Systems 2016, Tea sector Stakeholders Field consultations 12-25 of March 2016.

16. ITC, 2016, Trade Map: Trade Statistics for International Business Development, last accessed 12 April 2016, available: http://www.trademap.org/index.aspx

17. FAO 2016, 'Tea – FAO Composite Price', last accessed 3 May 2016, available: https://plot.ly/~FAOstatistics/40/tea-fao-composite-price/

18. Personal Communication with Mrs. South, Bolaven Plateau Coffee Producers Cooperative, 23 March 2016

19. IDH 2016, 'The IDH Tea Program', IDH website, last accessed 25 July 2016, available: http://www.idhsustainabletrade.com/thee-program